# ກົດໝາຍຮ່ວມລະຫວ່າງລັດຖະບານກາງ ແລະ ລັດວ່າດ້ວຍສິດ

## ສໍາລັບຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລທີ່ໄດ້ຮັບການຢັ້ງຢືນວ່າ ມີຄວາມຊ່ຽວຊານ ຫຼື ສະຖານເບິ່ງແຍງດູແລຂອງ MEDICARE/MEDICAID

ຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລໄລຍະຍາວທຸກຄົນໄດ້ຮັບການຄໍ້າປະກັນສິດທິຂອງຕົນເອງພາຍໃຕ້ກົດໝາຍຂອງລັດຖະບານກາງ ແລະ ຂອງລັດ. ສິດທິເຫຼົ່ານີ້ແມ່ນມີຢູ່ພາຍໃຕ້ກົດໝາຍຂອງລັດຖະບານກາງ ແລະ ຂອງລັດ ແລະ ນໍາໃຊ້ກັບຜູ້ຢູ່ອາໄສໃນສະຖານເບິ່ງແຍງດູແລທຸກຄົນທີ່ໄດ້ຮັບການຢັ້ງຢືນພາຍໃຕ້ໂຄງການ Medicaid ຫຼື Medicare.

ສິດທິອັນແນ່ນອນແມ່ນມີຢູ່ພາຍໃຕ້ກົດໝາຍຂອງລັດມິນີໂຊຕ່າເທົ່ານັ້ນ. ສິດທິເຫຼົ່ານີ້ແມ່ນໄດ້ກ່າວໄວ້ຢູ່ໃນ*ຕົວໜັງສືອຽງ.* ສິດທິອື່ນໆທັງໝົດແມ່ນມີຢູ່ພາຍໃຕ້ກົດໝາຍຂອງລັດຖະບານກາງ ແລະ ນໍາໃຊ້ກັບຜູ້ຢູ່ອາໄສໃນສະຖານເບິ່ງແຍງດູແລທຸກຄົນທີ່ໄດ້ຮັບການຢັ້ງຢືນພາຍໃຕ້ໂຄງການ Medicaid ຫຼື Medicare. ຖ້າສິດຂອງທ່ານຢູ່ພາຍໃຕ້ກົດໝາຍຂອງລັດມິນີໂຊຕ່າສາມາດປຽບທຽບກັບສິດຂອງທ່ານຢູ່ພາຍໃຕ້ກົດໝາຍຂອງລັດຖະບານກາງໄດ້, ແມ່ນຈະນໍາໃຊ້ສິດຂອງທ່ານຢູ່ພາຍໃຕ້ກົດໝາຍຂອງລັດຖະບານກາງ.

*ຜູ້ປົກຄອງ ຫຼື ຜູ້ປົກປ້ອງຜູ້ອາໄສຢູ່ຄົນໃດຄົນໜຶ່ງ ຫຼື ໃນກໍລະນີທີ່ຜູ້ປົກຄອງ ຫຼື ຜູ້ປົກປ້ອງບໍ່ຢູ່ແມ່ນບຸກຄົນທີ່ສົນໃຈອາດຈະຂໍການບັງຄັບໃຊ້ສິດເຫຼົ່ານີ້ໃນນາມຂອງຜູ້ອາໄສຢູ່.*

ບໍ່ມີສະຖານເບິ່ງແຍງດູແລໃດ[1]ສາມາດຮຽກຮ້ອງໃຫ້ຜູ້ອາໄສຢູ່ສະຫຼະສິດເຫຼົ່ານີ້ໄດ້ວ່າເປັນເງື່ອນໄຂຂອງການຮັບເຂົ້າ ຫຼື ໃຫ້ພັກຢູ່ໄລຍະຍາວ.

---

[1] ຢູ່ໃນເອກະສານນີ້, ຄໍາວ່າ “ສະຖານເບິ່ງແຍງດູແລ (facility)” ໝາຍເຖິງບ້ານພັກໃຫ້ການເບິ່ງແຍງດູແລ (nursing home), ບ້ານພັກເບິ່ງແຍງດູແລກິນນອນ (boarding care home), ສະຖານເບິ່ງແຍງດູແລທີ່ໄດ້ຮັບການຢັ້ງຢືນວ່າ ມີຄວາມຊ່ຽວຊານ (certified skilled nursing facility - SNF) ຫຼື ສະຖານເບິ່ງແຍງດູແລທີ່ໄດ້ຮັບການຢັ້ງຢືນ (certified nursing facility - NF).

# ສິດທິຂອງຜູ້ອາໄສຢູ່

ຜູ້ອາໄສຢູ່ມີສິດອາໄສຢູ່ດ້ວຍກຽດສັກສີ, ມີການຕັດສິນໃຈດ້ວຍຕົວເອງ, ແລະ ມີການສື່ສານກັບ ແລະ ເຂົ້າເຖິງບຸກຄົນ ແລະ ການບໍລິການຢູ່ພາຍໃນ ແລະ ພາຍນອກສະຖານບໍລິການ:

1. ສະຖານເບິ່ງແຍງດູແລຕ້ອງປະຕິບັດຕໍ່ຜູ້ຢູ່ອາໄສແຕ່ລະຄົນໃນຮູບແບບ ແລະ ໃນສະພາບແວດລ້ອມທີ່ສົ່ງເສີມໃຫ້ມີການຮັກສາ ຫຼື ການປັບປຸງຄຸນນະພາບຊີວິດຂອງຕົນເອງ, ຮັບຮູ້ບຸກຄະລິກສ່ວນຕົວຂອງຜູ້ອາໄສຢູ່ແຕ່ລະຄົນ. ສະຖານເບິ່ງແຍງດູແລຕ້ອງປົກປ້ອງ ແລະ ສົ່ງເສີມສິດທິຂອງຜູ້ອາໄສຢູ່.
2. ສະຖານເບິ່ງແຍງດູແລຕ້ອງໃຫ້ການເຂົ້າເຖິງການເບິ່ງແຍງດູແລທີ່ມີຄຸນນະພາບເທົ່າທຽມກັນ ໂດຍບໍ່ຄຳນຶງເຖິງເລື່ອງການວິນິໄສ, ຄວາມຮຸນແຮງຂອງສະພາບ, ຫຼື ແຫຼ່ງການຊຳລະ. ສະຖານເບິ່ງແຍງດູແລຕ້ອງສ້າງ ແລະ ຮັກສານະໂຍບາຍ ແລະ ການປະຕິບັດອັນດຽວກັນກ່ຽວກັບການຍ້າຍ, ການອະນຸຍາດໃຫ້ອອກ, ແລະ ການໃຫ້ບໍລິການຕ່າງໆແກ່ຜູ້ອາໄສຢູ່ທຸກຄົນພາຍໃຕ້ແຜນການຂອງລັດ ໂດຍບໍ່ໃຫ້ຄຳນຶງເຖິງແຫຼ່ງການຊຳລະ.

# ການບໍລິການຕອບຮັບ

*ຜູ້ອາໄສຢູ່ຈະມີສິດຕໍ່ການຕອບຄຳຖາມ ແລະ ຄຳສະເໜີຂອງພວກເຂົາທັນທີ ແລະ ສົມເຫດສົມຜົນ.*

# ການສືບຕໍ່ການເບິ່ງແຍງດູແລ

*ຜູ້ອາໄສຢູ່ຈະມີສິດໄດ້ຮັບການເບິ່ງແຍງດູແລເປັນປົກກະຕິ ແລະ ຕໍ່ເນື່ອງຈາກພະນັກງານທີ່ມອບໜ້າທີ່ໃຫ້ໄປເທົ່າທີ່ນະໂຍບາຍຂອງສະຖານເບິ່ງແຍງດູແລອະນຸຍາດໃຫ້.*

# ການໃຊ້ສິດ

ຜູ້ອາໄສຢູ່ມີສິດນຳໃຊ້ສິດຂອງຕົນເອງເປັນຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລ ແລະ ເປັນພົນລະເມືອງ ຫຼື ຜູ້ອາໄສຢູ່ຂອງສະຫະລັດ.

1. ສະຖານເບິ່ງແຍງດູແລຕ້ອງຮັບປະກັນໃຫ້ໄດ້ວ່າ ຜູ້ອາໄສຢູ່ສາມາດໃຊ້ສິດຂອງຕົນເອງໂດຍບໍ່ມີການແຊກແຊງ, ການບີບບັງຄັບ, ການຈຳແນກຄວາມແຕກຕ່າງ, ຫຼື ການແກ້ແຄ້ນຈາກສະຖານເບິ່ງແຍງດູແລ.

2. ຜູ້ອາໄສຢູ່ມີສິດໄດ້ຮັບການຫ້າມການແຊກແຊງ, ການບີບບັງຄັບ, ການຈຳແນກຄວາມແຕກຕ່າງ, ຫຼື ການແກ້ແຄ້ນຈາກສະຖານເບິ່ງແຍງດູແລໃນການໃຊ້ສິດຂອງຕົນເອງ ແລະ ໄດ້ຮັບການສະໜັບສະໜູນໂດຍສະຖານເບິ່ງແຍງດູແລໃນການໃຊ້ສິດຂອງຕົນເອງ.

3. ໃນກໍລະນີຜູ້ອາໄສຢູ່ຜູ້ທີ່ບໍ່ຖືກສານຂອງລັດຕັດສິນວ່າຂາດຄວາມອາດສາມາດ, ຜູ້ອາໄສຢູ່ມີສິດແຕ່ງຕັ້ງຜູ້ຕາງໜ້າ, ຕາມກົດລະບຽບຂອງລັດ ແລະ ຜູ້ຕາງໜ້າຕາມກົດໝາຍທີ່ໄດ້ຮັບການແຕ່ງຕັ້ງອາດຈະໃຊ້ສິດຂອງຜູ້ອາໄສຢູ່ໃນລະດັບທີ່ກົດໝາຍຂອງລັດອະນຸຍາດໃຫ້ໄດ້. ຄູ່ຜົວເມຍທີ່ເປັນເພດດຽວກັນຕ້ອງໄດ້ຮັບການປະຕິບັດເທົ່າທຽມກັນກັບຄູ່ຜົວເມຍທີ່ເປັນເພດກົງກັນຂ້າມກັນ ຖ້າການແຕ່ງງານຖືກຕ້ອງຢູ່ໃນອຳນາດສານທີ່ໄດ້ມີການຮອງຮັບນັ້ນ.

   A. ຕົວແທນຜູ້ອາໄສຢູ່ມີສິດນຳໃຊ້ສິດຂອງຜູ້ອາໄສຢູ່ໃນລະດັບທີ່ສິດເຫຼົ່ານັ້ນຖືກມອບໝາຍໃຫ້ແກ່ຕົວແທນຜູ້ອາໄສຢູ່.

   B. ຜູ້ອາໄສຢູ່ສະຫງວນສິດທີ່ຈະນຳໃຊ້ສິດເຫຼົ່ານັ້ນ ບໍ່ມອບໝາຍໃຫ້ຕົວແທນຜູ້ອາໄສຢູ່, ລວມທັງສິດຖອນການມອບສິດໃຫ້ແລ້ວນັ້ນຄືນ, ຍົກເວັ້ນແຕ່ຕາມທີ່ຖືກກົດໝາຍຂອງລັດຈຳກັດໄວ້.

4. ສະຖານເບິ່ງແຍງດູແລຕ້ອງປະຕິບັດຕໍ່ການຕັດສິນໃຈຂອງຕົວແທນຜູ້ອາໄສຢູ່ເປັນການຕັດສິນໃຈຂອງຜູ້ອາໄສຢູ່ໃນລະດັບທີ່ສານຕ້ອງການ ຫຼື ຕາມທີ່ຜູ້ຢູ່ອາໄສມອບໝາຍໃຫ້.

5. ສະຖານເບິ່ງແຍງດູແລບໍ່ຄວນໄປເພີ່ມສິດໃຫ້ຕົວແທນຂອງຜູ້ອາໄສຢູ່ ເພື່ອທຳການຕັດສິນໃຈໃນນາມຂອງຜູ້ອາໄສຢູ່ເກີນກວ່າລະດັບທີ່ສານຕ້ອງການ ຫຼື ຕາມທີ່ຜູ້ຢູ່ອາໄສມອບໝາຍໃຫ້.

6. ຖ້າສະຖານເບິ່ງແຍງດູແລມີເຫດຜົນເຊື່ອວ່າ ຕົວແທນຂອງຜູ້ອາໄສຢູ່ກຳລັງທຳການຕັດສິນໃຈ ຫຼື ກຳລັງດຳເນີນມາດຕະການທີ່ບໍ່ໃຫ້ເກີດຜົນປະໂຫຍດດີທີ່ສຸດແກ່ຜູ້ອາໄສຢູ່, ສະຖານເບິ່ງແຍງດູແລຈະລາຍງານບັນຫາກັງວົນໃຈດັ່ງກ່າວ.

7. ໃນກໍລະນີທີ່ຜູ້ອາໄສຢູ່ຖືກສານທີ່ມີອຳນາດຕັດສິນພາຍໃຕ້ກົດໝາຍຂອງລັດວ່າຂາດຄວາມສາມາດ, ສິດຂອງຜູ້ອາໄສຢູ່ແມ່ນໂອນໄປໃຫ້ກັບ ຫຼື ຖືກນຳໃຊ້ໂດຍຕົວແທນຜູ້ອາໄສຢູ່ທີ່ຖືກແຕ່ງຕັ້ງພາຍໃຕ້ກົດໝາຍຂອງລັດ ເພື່ອດຳເນີນການໃນນາມຂອງຜູ້ອາໄສຢູ່. ຕົວແທນຜູ້ອາໄສຢູ່ທີ່ສານແຕ່ງຕັ້ງໃຊ້ສິດຂອງຜູ້ອາໄສຢູ່ໃນລະດັບທີ່ສານມີອຳນາດຕັດສິນໃຫ້ວ່າມີຄວາມຈຳເປັນ.

   A. ໃນກໍລະນີທີ່ຕົວແທນຜູ້ອາໄສຢູ່ ເຊິ່ງເປັນຜູ້ມີອຳນາດຕັດສິນຖືກຈຳກັດໂດຍກົດໝາຍຂອງລັດ ຫຼື ການແຕ່ງຕັ້ງຂອງສານ, ຜູ້ອາໄສຢູ່ສະຫງວນສິດທີ່ຈະທຳການຕັດສິນຢູ່ນອກສິດອຳນາດຂອງຕົວແທນໄດ້.

B. ຄວາມປະສົງ ແລະ ຄວາມມັກຂອງຜູ້ອາໄສຢູ່ຕ້ອງໄດ້ຮັບການພິຈາລະນາໃນການໃຊ້ສິດໂດຍຕົວແທນ.

C. ໃນລະດັບທີ່ສາມາດປະຕິບັດໄດ້, ຜູ້ອາໄສຢູ່ຕ້ອງໄດ້ຮັບໂອກາດເຂົ້າຮ່ວມໃນຂະບວນການວາງແຜນເບິ່ງແຍງດູແລ.

# ການວາງແຜນ ແລະ ການຈັດຕັ້ງປະຕິບັດການເບິ່ງແຍງດູແລ

ຜູ້ອາໄສຢູ່ມີສິດໄດ້ຮັບແຈ້ງ ແລະ ເຂົ້າຮ່ວມໃນການປິ່ນປົວຂອງຕົນເອງ, ລວມທັງ:

1. ສິດໄດ້ຮັບແຈ້ງເປັນພາສາທີ່ຜູ້ກ່ຽວສາມາດເຂົ້າໃຈສະພາບທາງດ້ານສຸຂະພາບຂອງລາວເອງທັງໝົດ, ລວມທັງບໍ່ຈຳກັດແຕ່ສະພາບທາງດ້ານການແພດຂອງຜູ້ກ່ຽວ.

2. ສິດເຂົ້າຮ່ວມໃນການສ້າງ ແລະ ການຈັດຕັ້ງປະຕິບັດແຜນທີ່ເນັ້ນໃສ່ຕົວບຸກຄົນຂອງລາວ, ລວມທັງບໍ່ຈຳກັດແຕ່:

   A. ສິດເຂົ້າຮ່ວມໃນຂະບວນການວາງແຜນ, ລວມທັງສິດລະບຸຕົວບຸກຄົນ ຫຼື ບົດບາດທີ່ຈະຕ້ອງເອົາເຂົ້າຢູ່ໃນຂະບວນການວາງແຜນ, ສິດຂໍການປະຊຸມ ແລະ ສິດຂໍການທົບທວນປັບປຸງແຜນການເບິ່ງແຍງດູແລທີ່ເນັ້ນໃສ່ຕົວບຸກຄົນ.

   B. ສິດເຂົ້າຮ່ວມໃນການກຳນົດລະດັບຄາດໝາຍ ແລະ ຜົນໄດ້ຮັບຂອງການເບິ່ງແຍງດູແລ, ປະເພດ, ຈຳນວນ, ຄວາມຖີ່, ແລະ ໄລຍະເວລາຂອງການເບິ່ງແຍງດູແລ, ແລະ ປັດໃຈອື່ນໆທີ່ກ່ຽວຂ້ອງກັບປະສິດທິພາບຂອງແຜນການເບິ່ງແຍງດູແລ.

   C. ສິດໄດ້ຮັບແຈ້ງເລື່ອງການປ່ຽນແປງແຜນການເບິ່ງແຍງດູແລລ່ວງໜ້າ.

   D. ສິດໄດ້ຮັບການບໍລິການ ແລະ/ຫຼື ເຄື່ອງໃຊ້ທີ່ລວມຢູ່ໃນແຜນການເບິ່ງແຍງດູແລ.

   E. ສິດທີ່ຈະເບິ່ງແຜນການເບິ່ງແຍງດູແລ, ລວມທັງສິດລົງລາຍເຊັນໃສ່ແຜນການເບິ່ງແຍງດູແລຫຼັງຈາກມີການປ່ຽນແປງທີ່ສຳຄັນ.

3. ສະຖານເບິ່ງແຍງດູແລຈະແຈ້ງໃຫ້ກັບຜູ້ອາໄສຢູ່ເຂົ້າຮ່ວມໃນການປິ່ນປົວຂອງຜູ້ກ່ຽວ ແລະ ຈະໃຫ້ການສະໜັບສະໜູນຜູ້ອາໄສຢູ່ໃນເລື່ອງສິດນີ້. ຂະບວນການວາງແຜນຕ້ອງ—

   A. ຊ່ວຍໃນການເອົາຜູ້ອາໄສຢູ່ ແລະ/ຫຼື ຕົວແທນຜູ້ອາໄສຢູ່ເຂົ້າຮ່ວມນຳ.

   B. ລວມມີການປະເມີນຄວາມແຂງແຮງ ແລະ ຄວາມຕ້ອງການຂອງຜູ້ອາໄສຢູ່.

c. ເອົາຄວາມມັກສ່ວນຕົວ ແລະ ວັດທະນະທໍາຂອງຜູ້ອາໄສຢູ່ເຂົ້າໃນການສ້າງເປົ້າໝາຍການເບິ່ງແຍງດູແລ.

4. ສິດໄດ້ຮັບແຈ້ງລ່ວງໜ້າເລື່ອງການເບິ່ງແຍງດູແລທີ່ຈະຕ້ອງໄດ້ຈັດໃຫ້ ແລະ ປະເພດຂອງຜູ້ໃຫ້ການເບິ່ງແຍງດູແລ ຫຼື ຜູ້ປະກອບອາຊີບທີ່ຈະໃຫ້ການເບິ່ງແຍງດູແລ.

5. ສິດໄດ້ຮັບແຈ້ງລ່ວງໜ້າຈາກແພດ ຫຼື ຜູ້ປະກອບອາຊີບ ຫຼື ຜູ້ໃຫ້ບໍລິການອື່ນໆໃນເລື່ອງຄວາມສ່ຽງ ແລະ ຜົນປະໂຫຍດຂອງການເບິ່ງແຍງດູແລທີ່ສະເໜີໃຫ້, ເລື່ອງການປິ່ນປົວທາງເລືອກ ຫຼື ທາງເລືອກການປິ່ນປົວ ແລະ ເພື່ອເລືອກເອົາຕົວເລືອກ ຫຼື ທາງເລືອກທີ່ລາວມັກ.

6. ສິດຂໍ, ປະຕິເສດ, ແລະ/ຫຼື ຢຸດການປິ່ນປົວ, ເພື່ອເຂົ້າຮ່ວມ ຫຼື ປະຕິເສດທີ່ຈະເຂົ້າຮ່ວມໃນການຄົ້ນຄວ້າທົດລອງ, ແລະ ເພື່ອສ້າງເປັນຄໍາສັ່ງລ່ວງໜ້າ.

*ຜູ້ອາໄສຢູ່ທີ່ມີຄວາມອາດສາມາດຈະມີສິດປະຕິເສດການປິ່ນປົວໄດ້. ຜູ້ອາໄສຢູ່ຜູ້ທີ່ປະຕິເສດການບໍາບັດ, ການປິ່ນປົວ, ຫຼື ຂໍ້ຫ້າມທາງດ້ານອາຫານຈະໄດ້ຮັບແຈ້ງຜົນຂອງການປະຕິເສດທາງດ້ານຈິດຕະສາດຕົ້ນຕໍ ຫຼື ທາງການແພດທີ່ອາດຈະເປັນໄປໄດ້, ພ້ອມເອກະສານບັນທຶກຢູ່ໃນບັນທຶກທາງການແພດແຕ່ລະຄົນ. ໃນກໍລະນີທີ່ຜູ້ອາໄສຢູ່ຂາດຄວາມສາມາດທີ່ຈະເຂົ້າໃຈສະພາບການຕ່າງໆໄດ້ ແຕ່ບໍ່ໄດ້ຖືກຕັດສິນວ່າຂາດຄວາມສາມາດ, ຫຼື ເມື່ອເງື່ອນໄຂກໍານົດທາງກົດໝາຍຈໍາກັດສິດທີ່ຈະປະຕິເສດການປິ່ນປົວ, ເງື່ອນໄຂ ແລະ ສະພາບຕ່າງໆແມ່ນຈະຖືກບັນທຶກເປັນເອກະສານໄວ້ທັງໝົດໂດຍແພດເຂົ້າຮ່ວມໃນບັນທຶກທາງການແພດຂອງຜູ້ອາໄສຢູ່.*

7. ສິດໃນການໃຫ້ຢາປິ່ນປົວກັບຕົວເອງ ຖ້າທີມງານສຶກສາຄົ້ນຄວ້າກໍານົດວ່າ ການປະຕິບັດນີ້ແມ່ນມີຄວາມເໝາະສົມທາງດ້ານການປິ່ນປົວ.

8. ບໍ່ມີອັນໃດຢູ່ໃນວັກນີ້ຄວນຖືກນໍາໄປຕີຄວາມໝາຍເປັນສິດຂອງຜູ້ອາໄສຢູ່ທີ່ຈະຮັບເອົາການໃຫ້ການປິ່ນປົວທາງການແພດ ຫຼື ການບໍລິການທາງການແພດທີ່ຖືວ່າບໍ່ຈໍາເປັນ ຫຼື ບໍ່ເໝາະສົມທາງການແພດ.

9. *ຜູ້ອາໄສຢູ່ຈະມີສິດຕໍ່ການເບິ່ງແຍງດູແລທາງການແພດ ແລະ ສ່ວນຕົວຕາມຄວາມຕ້ອງການຂອງບຸກຄົນ. ການເບິ່ງແຍງດູແລທີ່ເໝາະສົມໝາຍເຖິງການເບິ່ງແຍງດູແລກໍານົດໃຫ້ ເພື່ອໃຫ້ຜູ້ອາໄສຢູ່ສາມາດບັນລຸໄດ້ເຖິງການເຮັດໜ້າທີ່ການທາງດ້ານຮ່າງກາຍ ແລະ ຈິດໃຈໃນລະດັບສູງສຸດຂອງເຂົາເຈົ້າ. ສິດນີ້ຖືກຈໍາກັດຢູ່ໃນບ່ອນທີ່ການບໍລິການບໍ່ສາມາດເບີກຄືນໄດ້ໂດຍແຫຼ່ງທຶນຂອງລັດ ຫຼື ເອກະຊົນ.*

10. *ຖ້າຜູ້ອາໄສຢູ່ ຜູ້ທີ່ເຂົ້າສູ່ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນໝົດສະຕິ ຫຼື ບໍ່ຮູ້ສຶກຕົວ ຫຼື ບໍ່ສາມາດສື່ສານໄດ້, ສະຖານເບິ່ງແຍງດູແລຈະໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນ (ຕາມທີ່ຖືກຮຽກຮ້ອງຢູ່ພາຍໃຕ້ເລກທີ 11 ຢູ່ລຸ່ມນີ້) ເພື່ອແຈ້ງໃຫ້ຄົນໃນຄອບຄົວ ຫຼື ຄົນທີ່ໄດ້ຮັບສິດເປັນລາຍລັກອັກສອນໂດຍຄົນເຈັບໃຫ້ເປັນຜູ້ຕິດຕໍ່ໃນກໍລະນີສຸກເສີນ ທີ່ຜູ້ອາໄສຢູ່ຖືກຮັບເຂົ້າສູ່ສະ*

*ຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນ. ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນຈະອະນຸຍາດໃຫ້ຄົນໃນຄອບຄົວເຂົ້າຮ່ວມໃນການວາງແຜນການປິ່ນປົວ, ນອກຈາກສະຖານເບິ່ງແຍງດູແລຮູ້ ຫຼື ມີເຫດຜົນທີ່ຈະເຊື່ອວ່າ ຜູ້ອາໄສຢູ່ມີພິໄນກຳທີ່ມີຜົນນຳໃຊ້ກົງກັນຂ້າມ ຫຼື ຮູ້ວ່າ ຜູ້ອາໄສຢູ່ໄດ້ລະບຸເປັນລາຍລັກອັກສອນວ່າ ພວກເຂົາບໍ່ຕ້ອງການໃຫ້ຄົນໃນຄອບຄົວເຂົ້າມາລວມຢູ່ໃນການວາງແຜນການປິ່ນປົວ. ຫຼັງຈາກແຈ້ງໃຫ້ຄົນໃນຄອບຄົວ ແຕ່ກ່ອນອະນຸຍາດໃຫ້ຄົນໃນຄອບຄົວ ເຂົ້າຮ່ວມໃນການວາງແຜນການປິ່ນປົວ, ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນຕ້ອງໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນກົງກັບຫຼັກການປະຕິບັດທາງການແພດທີ່ສົມເຫດສົມຜົນ ເພື່ອກຳນົດວ່າ ຜູ້ອາໄສຢູ່ໄດ້ເຮັດພິໄນກຳກ່ຽວຂ້ອງກັບຄຳຕັດສິນການເບິ່ງແຍງດູແລສຸຂະພາບຂອງຜູ້ອາໄສຢູ່. ສຳລັບຈຸດປະສົງຂອງວັກນີ້, "ຄວາມພະຍາຍາມສົມເຫດສົມຜົນ" ປະກອບມີ:*

A. *ການກວດເບິ່ງຄວາມພະຍາຍາມສ່ວນຕົວຂອງຜູ້ອາໄສຢູ່;*

B. *ການກວດເບິ່ງບັນທຶກທາງການແພດຂອງຜູ້ອາໄສຢູ່ ທີ່ຢູ່ໃນການຄຸ້ມຄອງຂອງສະຖານເບິ່ງແຍງດູແລ;*

C. *ການສອບຖາມລາຍຊື່ຕິດຕໍ່ສຸກເສີນ ຫຼື ຄົນໃນຄອບຄົວທີ່ໄດ້ຕິດຕໍ່ ບໍ່ວ່າຜູ້ອາໄສຢູ່ໄດ້ເຮັດພິໄນກຳຫຼືບໍ່ ແລະ ບໍ່ວ່າ ຜູ້ອາໄສຢູ່ມີແພດເຊິ່ງຜູ້ອາໄສຢູ່ໄປຫາເບິ່ງແຍງດູແລເປັນປົກກະຕິຫຼືບໍ່ກໍ່ຕາມ; ແລະ*

D. *ການສອບຖາມແພດວ່າປົກກະຕິຜູ້ອາໄສຢູ່ໄປຮັບການເບິ່ງແຍງດູແລນຳໃຜ, ຖ້າຮູ້ຈັກ, ບໍ່ວ່າຜູ້ອາໄສຢູ່ໄດ້ເຮັດພິໄນກຳຫຼືບໍ່ກໍ່ຕາມ. ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນທີ່ກຳນົດໄວ້ ຫຼື ອະນຸຍາດໃຫ້ຄົນໃນຄອບຄົວເຂົ້າຮ່ວມໃນການວາງແຜນການປິ່ນປົວຕາມວັກນີ້, ສະຖານເບິ່ງແຍງດູແລບໍ່ຮັບຜິດຊອບຕໍ່ຜູ້ອາໄສຢູ່ສຳລັບຄວາມເສຍຫາຍຕາມຫຼັກຖານ ທີ່ການແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນ ຫຼື ການເຂົ້າຮ່ວມຂອງຄົນໃນຄອບຄົວບໍ່ເໝາະສົມ ຫຼື ລະເມີດສິດຄວາມເປັນສ່ວນຕົວ.*

11. *ໃນການສ້າງຄວາມພະຍາຍາມທີ່ສົມເຫດສົມຜົນ ເພື່ອແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນທີ່ກຳນົດໄວ້, ສະຖານເບິ່ງແຍງດູແລຈະພະຍາຍາມລະບຸຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນທີ່ກຳນົດໄວ້ ໂດຍການກວດເບິ່ງຜົນກະທົບສ່ວນຕົວຂອງຜູ້ອາໄສຢູ່ ແລະ ບັນທຶກທາງການແພດຂອງຜູ້ອາໄສຢູ່ໃນການຄຸ້ມຄອງຂອງສະຖານເບິ່ງແຍງດູແລ. ຖ້າສະຖານເບິ່ງແຍງດູແລບໍ່ສາມາດແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນທີ່ກຳນົດໄວ້ໄດ້ພາຍໃນ 24 ຊົ່ວໂມງຫຼັງຈາກການຮັບເຂົ້າ, ສະຖານເບິ່ງແຍງດູແລຈະແຈ້ງໃຫ້ກັບທາງໜ່ວຍງານບໍລິການສັງຄົມຂອງຄາວຕີ້ ຫຼື ອົງການບັງຄັບໃຊ້ກົດໝາຍທ້ອງຖິ່ນ ວ່າ ຜູ້ອາໄສຢູ່ໄດ້ຖືກຮັບເຂົ້າ ແລະ ສະຖານເບິ່ງແຍງດູແລບໍ່ສາມາດແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກ*

*ເສີນທີ່ກຳນົດໄວ້ໄດ້. ໜ່ວຍງານບໍລິການສັງຄົມຂອງຄາວຕີ້ ຫຼື ອົງການບັງຄັບໃຊ້ກົດໝາຍທ້ອງຖິ່ນຈະຊ່ວຍສະຖານເບິ່ງແຍງດູແລໃນການລະບຸ ແລະ ການແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນທີ່ກຳນົດໄວ້. ໜ່ວຍງານບໍລິການສັງຄົມຂອງຄາວຕີ້ ຫຼື ອົງການບັງຄັບໃຊ້ກົດໝາຍທ້ອງຖິ່ນທີ່ຊ່ວຍສະຖານເບິ່ງແຍງດູແລບໍ່ຮັບຜິດຊອບຕໍ່ຜູ້ອາໄສຢູ່ສຳລັບຄວາມເສຍຫາຍຕາມຫຼັກຖານ ທີ່ການແຈ້ງໃຫ້ຄົນໃນຄອບຄົວ ຫຼື ຜູ້ຕິດຕໍ່ສຸກເສີນ ຫຼື ການເຂົ້າຮ່ວມຂອງຄົນໃນຄອບຄົວບໍ່ເໝາະສົມ ຫຼື ລະເມີດສິດຄວາມເປັນສ່ວນຕົວຂອງຄົນເຈັບ.*

12. *ຂໍ້ມູນກ່ຽວກັບການປິ່ນປົວ. ຜູ້ອາໄສຢູ່ອາດຈະໃຫ້ຄົນໃນຄອບຄົວ ຫຼື ຕົວແທນອື່ນໆທີ່ເລືອກໄວ້, ຫຼື ທັງສອງຄົນນັ້ນໄປນຳ. ຂໍ້ມູນນີ້ຈະປະກອບດ້ວຍຜົນການປິ່ນປົວທາງຈິດວິທະຍາຕົ້ນຕໍ ແລະ ທາງການແພດທີ່ອາດຈະເປັນໄປໄດ້ ຫຼື ທາງເລືອກອື່ນໆຂອງມັນ. ໃນກໍລະນີທີ່ຢູ່ໃນບ່ອນບໍ່ສາມາດໃຫ້ຄຳແນະນຳທາງການແພດໄດ້, ຕາມທີ່ໄດ້ບັນທຶກເປັນເອກະສານໂດຍແພດເຂົ້າຮ່ວມຢູ່ໃນບັນທຶກທາງການແພດຂອງຜູ້ອາໄສຢູ່, ຂໍ້ມູນແມ່ນຈະໄດ້ເອົາໃຫ້ກັບຜູ້ປົກຄອງຂອງຜູ້ອາໄສຢູ່ ຫຼື ບຸກຄົນອື່ນທີ່ຜູ້ອາໄສຢູ່ໄດ້ກຳນົດໃຫ້ເປັນຕົວແທນ. ບຸກຄົນຕ່າງໆມີສິດທີ່ຈະປະຕິເສດຂໍ້ມູນນີ້.*

13. *ຜູ້ອາໄສຢູ່ທຸກຄົນທີ່ເປັນພະຍາດມະເຮັງເຕົ້ານົມໃນຮູບແບບໃດໜຶ່ງຈະໄດ້ຮັບແຈ້ງຄົບຖ້ວນກ່ຽວກັບວິທີການປິ່ນປົວທີ່ມີປະສິດທິຜົນເປັນທາງເລືອກທັງໝົດ ເຊິ່ງແພດປິ່ນປົວຮັບຮູ້ໄດ້ ກ່ອນ ຫຼື ໃນເວລາຮັບເຂົ້າ ແລະ ໃນລະຫວ່າງການພັກຢູ່ຂອງນາງ, ລວມທັງການປິ່ນປົວດ້ວຍການຜ່າຕັດ, ການສາຍແສງ, ຫຼື ຄີໂມບຳບັດ ຫຼື ການປະສົມປະສານວິທີການປິ່ນປົວຕ່າງໆ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບວິທີການເຫຼົ່ານັ້ນແຕ່ລະອັນ.*

# ການເລືອກເອົາແພດໃຫ້ບໍລິການ

ຜູ້ອາໄສຢູ່ມີສິດເລືອກເອົາແພດໃຫ້ບໍລິການຂອງຕົນເອງໄດ້.

1. ແພດຕ້ອງມີໃບອະນຸຍາດໃຫ້ດຳເນີນການ, ແລະ
2. ຖ້າແພດທີ່ຜູ້ອາໄສຢູ່ເລືອກນັ້ນປະຕິເສດ ຫຼື ບໍ່ໄດ້ຕາມມາດຖານກຳນົດໄວ້ຢູ່ໃນພາກນີ້, ສະຖານເບິ່ງແຍງດູແລອາດຈະຂໍໃຫ້ມີການເຂົ້າຮ່ວມຂອງແພດອື່ນເປັນທາງເລືອກ ເພື່ອຮັບປະກັນໃຫ້ມີການໃຫ້ການເບິ່ງແຍງດູແລ ແລະ ການປິ່ນປົວທີ່ເໝາະສົມ ແລະ ພຽງພໍ.
3. ສະຖານເບິ່ງແຍງດູແລຕ້ອງຮັບປະກັນວ່າ ຜູ້ອາໄສຢູ່ແຕ່ລະຄົນຍັງຄົງໄດ້ຮັບແຈ້ງຊື່, ວິຊາສະເພາະ, ແລະ ວິທີຕິດຕໍ່ແພດ ແລະ ແພດຊ່ຽວຊານເບິ່ງແຍງດູແລຂັ້ນຕົ້ນທີ່ຮັບຜິດຊອບການເລີ່ງແຍງດູແລຂອງລາວຢູ່. *ໃນກໍລະນີທີ່ຢູ່ໃນບ່ອນບໍ່ສາມາດໃຫ້ຄຳແນະນຳທາງການແພດໄດ້, ຕາມທີ່ໄດ້ບັນທຶກເປັນເອກະ*

*ສານໂດຍແພດເຂົ້າຮ່ວມຢູ່ໃນບັນທຶກການເບິ່ງແຍງດູແລຂອງຜູ້ອາໄສຢູ່, ຂໍ້ມູນແມ່ນຈະໄດ້ເອົາໃຫ້ກັບຜູ້ປົກຄອງຂອງຜູ້ອາໄສຢູ່ ຫຼື ບຸກຄົນອື່ນທີ່ຜູ້ອາໄສຢູ່ໄດ້ກຳນົດໃຫ້ເປັນຕົວແທນ.*

4. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ອາໄສຢູ່ຮັບຮູ້ ຖ້າສະຖານເບິ່ງແຍງດູແລກຳນົດວ່າ ແພດທີ່ຜູ້ອາໄສຢູ່ເລືອກນັ້ນບໍ່ສາມາດ ຫຼື ບໍ່ຕັ້ງໃຈປະຕິບັດໃຫ້ໄດ້ຕາມມາດຖານກຳນົດໄວ້ຢູ່ໃນພາກນີ້ ແລະ ສະຖານເບິ່ງແຍງດູແລຂໍໃຫ້ມີການເຂົ້າຮ່ວມຂອງແພດອື່ນເປັນທາງເລືອກ ເພື່ອຮັບປະກັນໃຫ້ມີການໃຫ້ການເບິ່ງແຍງດູແລ ແລະ ການປິ່ນປົວທີ່ເໝາະສົມ ແລະ ພຽງພໍ. ສະຖານເບິ່ງແຍງດູແລຕ້ອງປຶກສາຫາລືເລື່ອງການເຂົ້າຮ່ວມຂອງແພດອື່ນກັບຜູ້ອາໄສຢູ່ ແລະ ໃຫ້ກຽດຜູ້ອາໄສຢູ່ເລືອກເອົາຕາມຕົວເລືອກຕ່າງໆ, ຖ້າມີ.

5. ຖ້າຕໍ່ມາຜູ້ຢູ່ອາໄສເລືອກແພດເຂົ້າຮ່ວມຄົນອື່ນ ຜູ້ທີ່ມີມາດຖານຕາມທີ່ກຳນົດຢູ່ໃນພາກນີ້, ສະຖານເບິ່ງແຍງດູແລຕ້ອງໃຫ້ກຽດເລືອກເອົາທາງເລືອກນັ້ນ.

# ການພົວພັນກັບໜ່ວຍບໍລິການສຸຂະພາບອື່ນ

*ຜູ້ອາໄສຢູ່ເຊິ່ງເປັນຜູ້ທີ່ໄດ້ຮັບການບໍລິການຈາກຜູ້ໃຫ້ບໍລິການທາງນອກມີສິດໄດ້ຮັບການແຈ້ງບອກຂໍ້ມູນປະຈຳຕົວຂອງຜູ້ໃຫ້ບໍລິການຕາມທີ່ຮ້ອງຂໍ. ຜູ້ອາໄສຢູ່ຈະໄດ້ຮັບແຈ້ງເປັນລາຍລັກອັກສອນກ່ຽວກັບການບໍລິການເບິ່ງແຍງດູແລສຸຂະພາບ ທີ່ຈັດໃຫ້ກັບບັນດາຜູ້ອາໄສຢູ່ເປັນລາຍບຸກຄົນ, ເປັນກຸ່ມ, ຫຼື ອົງການອື່ນໆນອກເໜືອຈາກສະຖານເບິ່ງແຍງດູແລ. ຂໍ້ມູນຈະປະກອບມີຊື່ຜູ້ໃຫ້ບໍລິການທາງນອກ, ທີ່ຢູ່, ແລະ ລາຍລະອຽດຂອງການບໍລິການທີ່ອາດຈະຈັດໃຫ້. ໃນກໍລະນີທີ່ຢູ່ໃນບ່ອນບໍ່ສາມາດໃຫ້ຄຳແນະນຳທາງການແພດໄດ້, ຕາມທີ່ໄດ້ບັນທຶກເປັນເອກະສານໂດຍແພດເຂົ້າຮ່ວມຢູ່ໃນບັນທຶກການເບິ່ງແຍງດູແລຂອງຜູ້ອາໄສຢູ່, ຂໍ້ມູນແມ່ນຈະໄດ້ເອົາໃຫ້ກັບຜູ້ປົກຄອງຂອງຜູ້ອາໄສຢູ່ ຫຼື ບຸກຄົນອື່ນທີ່ຜູ້ອາໄສຢູ່ໄດ້ກຳນົດໃຫ້ເປັນຕົວແທນ.*

# ຄວາມເຄົາລົບນັບຖື ແລະ ກຽດສັກສີ

ຜູ້ອາໄສຢູ່ມີສິດໄດ້ຮັບການປິ່ນປົວດ້ວຍຄວາມເຄົາລົບ ແລະ ມີກຽດສັກສີ, ລວມທັງ:

1. ສິດບໍ່ໃຫ້ມີການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ ຫຼື ໃຫ້ໄດ້ຮັບສານເຄມີ ເພື່ອຈຸດປະສົງຂອງການປະຕິບັດວິໄນ ຫຼື ຄວາມສະດວກສະບາຍ, ແລະ ບໍ່ຕ້ອງການໃຫ້ປິ່ນປົວອາການທາງການແພດຂອງຜູ້ອາໄສຢູ່.

2. ສິດຮັກສາ ແລະ ນຳໃຊ້ຄວາມເປັນເຈົ້າຂອງສ່ວນຕົວ, ລວມທັງການຈັດຫາໃຫ້ ແລະ ເຄື່ອງນຸ່ງຫົ່ມຕາມທີ່ອະນຸຍາດໃຫ້, ນອກຈາກວ່າການເຮັດແນວນັ້ນແລ້ວຈະລະເມີດສິດ ຫຼື ສຸຂະພາບ ແລະ ຄວາມປອດໄພຂອງຜູ້ອາໄສຢູ່ຄົນອື່ນ.

3. ສິດອາໄສຢູ່ ແລະ ຮັບການບໍລິການຢູ່ໃນສະຖານເບິ່ງແຍງດູແລຕາມຄວາມຈໍາເປັນ ແລະ ຄວາມມັກບ່ອນພັກພາອາໄສຂອງຜູ້ຢູ່ອາໄສຕາມສົມຄວນ ຍົກເວັ້ນແຕ່ເມື່ອເຮັດແນວນັ້ນແລ້ວຈະເຮັດໃຫ້ມີອັນຕະລາຍຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ອາໄສຢູ່ ຫຼື ຜູ້ອາໄສຢູ່ຄົນອື່ນ.
4. ສິດຢູ່ຮ່ວມຫ້ອງດຽວກັນກັບຜົວ/ເມຍຂອງລາວ ເມື່ອຜູ້ອາໄສຢູ່ເປັນຄູ່ແຕ່ງງານແລ້ວມາຢູ່ໃນສະຖານເບິ່ງແຍງດູແລບ່ອນດຽວກັນ ແລະ ທັງຄູ່ເຂົາເຈົ້າຍິນຍອມຕໍ່ການຈັດໃຫ້ຢູ່ຮ່ວມກັນ.
5. ສິດຢູ່ຮ່ວມຫ້ອງດຽວກັນກັບເພື່ອນຮ່ວມຫ້ອງດຽວກັນຕາມທີ່ເລືອກ ເມື່ອສາມາດປະຕິບັດໄດ້, ເມື່ອຜູ້ອາໄສຢູ່ທັງສອງຄົນມາຢູ່ໃນສະຖານເບິ່ງແຍງດູແລບ່ອນດຽວກັນ ແລະ ຜູ້ຢູ່ອາໄສທັງສອງຄົນຍິນຍອມຕໍ່ການຈັດໃຫ້ຢູ່ຮ່ວມກັນ.
6. ສິດໄດ້ຮັບແຈ້ງການເປັນລາຍລັກອັກສອນ, ລວມທັງເຫດຜົນສໍາລັບການປ່ຽນແປງ, ກ່ອນທີ່ຈະມີການປ່ຽນແປງຫ້ອງ ຫຼື ເພື່ອນຮ່ວມຫ້ອງຂອງຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລ.
7. ສິດປະຕິເສດທີ່ຈະຍ້າຍໄປຢູ່ຫ້ອງອື່ນຢູ່ໃນສະຖານເບິ່ງແຍງດູແລ, ຖ້າຈຸດປະສົງຂອງການຍ້າຍແມ່ນເພື່ອ:
   A. ຍ້າຍຜູ້ອາໄສຢູ່ໃນ SNF ຈາກສ່ວນສະເພາະຂອງສະຖາບັນທີ່ເປັນ SNF ໄປຫາສ່ວນຂອງສະຖາບັນທີ່ບໍ່ແມ່ນ SNF, ຫຼື
   B. ຍ້າຍຜູ້ອາໄສຢູ່ໃນ NF ຈາກສ່ວນສະເພາະຂອງສະຖາບັນທີ່ເປັນ NF ໄປຫາສ່ວນສະເພາະຂອງສະຖາບັນທີ່ເປັນ SNF.
   C. ທັງໝົດແມ່ນເພື່ອຄວາມສະດວກຂອງພະນັກງານ.
8. ການໃຊ້ສິດຂອງຜູ້ອາໄສຢູ່ເພື່ອປະຕິເສດການຍ້າຍບໍ່ມີຜົນກະທົບຕໍ່ການມີສິດໄດ້ຮັບ ຫຼື ການມີສິດຕໍ່ຜົນປະໂຫຍດຂອງ Medicare ຫຼື Medicaid ຂອງຜູ້ອາໄສຢູ່.

## ການກໍານົດຕົວເອງ

ຜູ້ອາໄສຢູ່ມີສິດຕໍ່ ແລະ ສະຖານເບິ່ງແຍງດູແລຕ້ອງສົ່ງເສີມ ແລະ ອໍານວຍຄວາມສະດວກການກໍານົດຕົວເອງຂອງຜູ້ອາໄສຢູ່ຜ່ານການສະໜັບສະໜູນຕົວເລືອກຂອງຜູ້ອາໄສຢູ່, ລວມທັງບໍ່ຈໍາກັດແຕ່ສິດຕໍ່ໄປນີ້ຄື:

1. ຜູ້ອາໄສຢູ່ມີສິດເລືອກກິດຈະກໍາຕ່າງໆ, ກໍານົດເວລາ (ລວມທັງເວລານອນ ແລະ ເວລາຕື່ນ), ການເບິ່ງແຍງດູແລສຸຂະພາບ ແລະ ຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບໃຫ້ຖືກຕາມຄວາມສົນໃຈ, ການປະເມີນ, ແຜນການເບິ່ງແຍງດູແລຂອງລາວ ແລະ ຂໍ້ບັນຍັດອື່ນທີ່ນໍາໃຊ້ໃນພາກນີ້.

2. ຜູ້ຢູ່ອາໄສມີສິດສ້າງທາງເລືອກກ່ຽວກັບຊີວິດຂອງລາວໃນດ້ານຕ່າງໆຢູ່ໃນສະຖານເບິ່ງແຍງດູແລ ທີ່ມີຄວາມສຳຄັນຕໍ່ຜູ້ຢູ່ອາໄສ.

3. ຜູ້ອາໄສຢູ່ມີສິດຕິດຕໍ່ພົວພັນກັບສະມາຊິກຂອງກຸ່ມ ແລະ ເຂົ້າຮ່ວມກິດຈະກຳຕ່າງໆຂອງຊຸມຊົນທັງທີ່ຢູ່ໃນ ແລະ ຢູ່ນອກສະຖານເບິ່ງແຍງດູແລ.

4. ຜູ້ຢູ່ອາໄສມີສິດຮັບແຂກທີ່ລາວເລືອກໃນເວລາທີ່ລາວເລືອກ, ໂດຍຂຶ້ນກັບສິດຂອງຜູ້ອາໄສຢູ່ ເພື່ອປະຕິເສດການຢ້ຽມຢາມ ເມື່ອສາມາດເຮັດໄດ້, ແລະ ຢູ່ໃນຮູບແບບທີ່ບໍ່ບັງຄັບຕໍ່ສິດຂອງຜູ້ອາໄສຢູ່ຄົນອື່ນ.

   A. ສະຖານເບິ່ງແຍງດູແລຕ້ອງໃຫ້ການເຂົ້າເຖິງຜູ້ອາໄສຢູ່ຄົນໃດຄົນໜຶ່ງທັນທີທີ່ເປັນ—

      a. ຕົວແທນຂອງເລຂາທິການຄົນໃດຄົນໜຶ່ງ (ສູນບໍລິການ Medicare ແລະ Medicaid, (CMS)),

      b. ຜູ້ຕາງໜ້າຂອງລັດຄົນໃດຄົນໜຶ່ງ,

      c. ຜູ້ຕາງໜ້າຂອງຫ້ອງການກວດກາການເບິ່ງແຍງດູແລໄລຍະຍາວຂອງລັດ,

      d. ແພດປະຈຳຕົວບຸກຄົນຂອງຜູ້ອາໄສຢູ່,

      e. ຜູ້ຕາງໜ້າຂອງລະບົບປ້ອງກັນ ແລະ ສົ່ງເສີມຄົນໃດຄົນໜຶ່ງ, ທີ່ລັດແຕ່ງຕັ້ງ ແລະ ຖືກກຳນົດພາຍໃຕ້ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນພິການທາງດ້ານພັດທະນາການ ແລະ ກົດໝາຍວ່າດ້ວຍສິດທິປີ 2000 (Developmental Disabilities Assistance and Bill of Rights Act of 2000),

      f. ຜູ້ຕາງໜ້າອົງການຄົນໃດຄົນໜຶ່ງທີ່ຮັບຜິດຊອບລະບົບປົກປ້ອງ ແລະ ສົ່ງເສີມບຸກຄົນທີ່ມີຄວາມພິການທາງຈິດໃຈ; ແລະ

      g. ຕົວແທນຂອງຜູ້ອາໄສຢູ່.

   B. ສະຖານເບິ່ງແຍງດູແລຕ້ອງໃຫ້ຄອບຄົວ ແລະ ຍາດພີ່ນ້ອງຂອງຜູ້ອາໄສຢູ່ເຂົ້າເຖິງຜູ້ອາໄສຢູ່ໄດ້ທັນທີ, ຂຶ້ນຢູ່ກັບສິດຂອງຜູ້ອາໄສຢູ່ທີ່ຈະປະຕິເສດ ຫຼື ຖອນຄຳຍິນຍອມໃນເວລາໃດກໍ່ໄດ້;

   C. ສະຖານເບິ່ງແຍງດູແລຕ້ອງໃຫ້ບຸກຄົນອື່ນ ຜູ້ທີ່ມາຢ້ຽມຢາມຕາມຄຳຍິນຍອມຂອງຜູ້ຢູ່ອາໄສເຂົ້າເຖິງຜູ້ອາໄສຢູ່ໄດ້ທັນທີ, ຂຶ້ນຢູ່ກັບຂໍ້ຫ້າມທາງດ້ານຄວາມປອດໄພ ແລະ ການປິ່ນປົວທີ່ສົມເຫດສົມຜົນ ແລະ ສິດຂອງຜູ້ອາໄສຢູ່ທີ່ຈະປະຕິເສດ ຫຼື ຖອນຄຳຍິນຍອມໃນເວລາໃດກໍ່ໄດ້;

D. ສະຖານເບິ່ງແຍງດູແລຕ້ອງໃຫ້ນິຕິບຸກຄົນ ຫຼື ບຸກຄົນໃດໜຶ່ງທີ່ໃຫ້ບໍລິການສຸຂະພາບ, ສັງຄົມ, ກົດໝາຍ, ຫຼື ອື່ນໆແກ່ຜູ້ຢູ່ອາໄສເຂົ້າເຖິງຜູ້ອາໄສຢູ່ໄດ້ທັນທີ, ຂຶ້ນຢູ່ກັບສິດຂອງຜູ້ອາໄສຢູ່ທີ່ຈະປະຕິເສດ ຫຼື ຖອນຄຳຍິນຍອມໃນເວລາໃດກໍ່ໄດ້;

E. ສະຖານເບິ່ງແຍງດູແລຕ້ອງມີນະໂຍບາຍ ແລະ ຂັ້ນຕອນດຳເນີນການເປັນລາຍລັກອັກສອນກ່ຽວກັບສິດການຢ້ຽມຢາມຂອງຜູ້ຢູ່ອາໄສ, ລວມທັງບັນດາສິ່ງທີ່ໄດ້ກຳນົດມາກ່ອນວ່າມີຄວາມຈຳເປັນທາງດ້ານການປິ່ນປົວ ຫຼື ຂໍ້ຈຳກັດ ຫຼື ຂໍ້ຫ້າມທີ່ສົມເຫດສົມຜົນ ຫຼື ຂໍ້ຈຳກັດ ຫຼື ຂໍ້ຫ້າມທາງດ້ານຄວາມປອດໄພ, ເມື່ອຂໍ້ຈຳກັດດັ່ງກ່າວອາດຈະນຳໃຊ້ຕາມເງື່ອນໄຂກຳນົດຂອງຂໍ້ຍ່ອຍນີ້, ດັ່ງນັ້ນສະຖານເບິ່ງແຍງດູແລອາດຈະຕ້ອງກຳນົດສິດດັ່ງກ່າວ ແລະ ເຫດຜົນສຳລັບຂໍ້ຫ້າມ ຫຼື ຂໍ້ຈຳກັດທາງດ້ານການປິ່ນປົວ ຫຼື ຄວາມປອດໄພ. F. ສະຖານເບິ່ງແຍງດູແລຕ້ອງໄດ້ຕາມມາດຖານກຳນົດດັ່ງຕໍ່ໄປນີ້ຄື:

a. ແຈ້ງໃຫ້ຜູ້ອາໄສຢູ່ແຕ່ລະຄົນ (ຫຼື ຕົວແທນຜູ້ອາໄສຢູ່, ໃນບ່ອນທີ່ເໝາະສົມ) ຮູ້ເຖິງສິດການຢ້ຽມຢາມຂອງລາວ ແລະ ນະໂຍບາຍສະຖານເບິ່ງແຍງດູແລ ແລະ ຂັ້ນຕອນດຳເນີນການທີ່ກ່ຽວຂ້ອງ, ລວມທັງຂໍ້ຫ້າມ ຫຼື ຂໍ້ຈຳກັດທາງດ້ານການປິ່ນປົວ ຫຼື ຄວາມປອດໄພໃດໜຶ່ງຕໍ່ກັບສິດດັ່ງກ່າວ, ກົງກັບເງື່ອນໄຂກຳນົດຂອງພາກຍ່ອຍນີ້, ເຫດຜົນສຳລັບຂໍ້ຫ້າມ ຫຼື ຂໍ້ຈຳກັດ, ແລະ ຈະນຳໃຊ້ຂໍ້ຫ້າມກັບໃຜ, ລາວຈະໄດ້ຮັບແຈ້ງສິດອື່ນຂອງລາວພາຍໃຕ້ຂໍ້ນີ້ເມື່ອໃດ.

b. ແຈ້ງສິດໃຫ້ຜູ້ອາໄສຢູ່ແຕ່ລະຄົນຊາບ, ຂຶ້ນກັບຄຳຍິນຍອມຂອງລາວ, ທີ່ຈະຮັບແຂກຜູ້ທີ່ລາວກຳນົດສິດໃຫ້, ແຕ່ບໍ່ຈຳກັດສະເພາະຜົວ/ເມຍ (ລວມທັງຜົວ/ເມຍທີ່ເປັນເພດດຽວກັນ), ຄູ່ທີ່ຢູ່ຮ່ວມກັນ (ລວມທັງຄູ່ທີ່ຢູ່ຮ່ວມກັນທີ່ເປັນເພດດຽວກັນ), ຄົນຈາກຄອບຄົວອື່ນ, ຫຼື ໝູ່, ແລະ ສິດຂອງລາວທີ່ຈະຖອນ ຫຼື ປະຕິເສດຄຳຍິນຍອມດັ່ງກ່າວໄດ້ທຸກເວລາ.

c. ບໍ່ຫ້າມ, ຈຳກັດ, ຫຼື ປະຕິເສດສິດການຢ້ຽມຢາມບົນພື້ນຖານເຜົ່າພັນ, ສີຜິວ, ຊາດກຳເນີດ, ສາສະໜາ, ເພດ, ການກຳນົດເພດ, ຄວາມນິຍົມເພດ, ຫຼື ຄວາມພິການ.

d. ຮັບປະກັນໃຫ້ແຂກຜູ້ມາຢ້ຽມຢາມທຸກຄົນໃຊ້ສິດການຢ້ຽມຢາມໄດ້ເຕັມທີ່ ແລະ ເທົ່າທຽມກັນກົງກັບຄວາມມັກຂອງຜູ້ອາໄສຢູ່.

*ຕາມການຮັບເຂົ້າສູ່ສະຖານເບິ່ງແຍງດູແລໃນບ່ອນທີ່ກົດໝາຍຂອງລັດຖະບານກາງຫ້າມການເປີດເຜີຍຂໍ້ມູນການລະບຸຕົວຜູ້ອາໄສຢູ່ໃຫ້ກັບຜູ້ໂທຫາ ແລະ ແຂກທີ່ມາຢາມໂດຍບໍ່ໄດ້ຮັບອະນຸຍາດ, ຜູ້ອາໄສຢູ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງຜູ້ອາໄສຢູ່ຕາມກົດໝາຍຈະໄດ້ຮັບໂອກາດໃຫ້ສິດອະນຸຍາດເປີດເຜີຍການມີໜ້າຂອງຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລນັ້ນໃຫ້ແກ່ຜູ້ໂທມາ ຫຼື ແຂກມາຢາມ ຜູ້ທີ່ອາດຈະຂໍສື່ສານກັບຜູ້ອາໄສຢູ່. ໃນລະດັບທີ່ເປັນໄປໄດ້, ຜູ້ປົກຄອງ ຫຼື ຜູ້ປົກປ້ອງຜູ້ອາໄສຢູ່ຕາມກົດໝາຍຈະພິຈາລະ*

*ນາຄວາມຄິດເຫັນຂອງຜູ້ອາໄສຢູ່ກ່ຽວກັບການເປີດເຜີຍການມີໜ້າຂອງຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລ. ສິດນີ້ຖືກຈຳກັດຢູ່ໃນບ່ອນທີ່ບໍ່ສາມາດໃຫ້ຄຳປຶກສາທາງການແພດໄດ້, ຕາມທີ່ແພດເຂົ້າຮ່ວມໄດ້ເຮັດບັນທຶກໄວ້ຢູ່ໃນບັນທຶກການເບິ່ງແຍງດູແລຂອງຜູ້ອາໄສຢູ່. ໃນບ່ອນທີ່ຖືກຈຳກັດໂດຍແຜນການປ້ອງກັນການລ່ວງລະເມີດສະຖານເບິ່ງແຍງດູແລແບບເຮັດເປັນແຜນການໄວ້ຕາມກົດໝາຍປົກປ້ອງຜູ້ໃຫຍ່ທີ່ອ່ອນແອ (Vulnerable Adults Protection Act).*

5. ຜູ້ອາໄສຢູ່ມີສິດຈັດຕັ້ງ ແລະ ເຂົ້າຮ່ວມກຸ່ມຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລໄດ້.

   A. ສະຖານເບິ່ງແຍງດູແລຕ້ອງໃຫ້ພື້ນທີ່ເປັນສ່ວນຕົວກັບຜູ້ອາໄສຢູ່ ຫຼື ກຸ່ມຄອບຄົວ, ຖ້າມີ; ແລະ ໃຊ້ຂັ້ນຕອນທີ່ເໝາະສົມໂດຍມີການອະນຸມັດຂອງກຸ່ມ ເພື່ອເຮັດໃຫ້ຜູ້ອາໄສຢູ່ ແລະ ສະມາຊິກຄອບຄົວຮູ້ຈັກການປະຊຸມຄັ້ງຕໍ່ໄປໃຫ້ທັນເວລາ.

   B. ພະນັກງານ, ແຂກມາຢາມ, ຫຼື ແຂກອື່ນໆອາດຈະເຂົ້າຮ່ວມກອງປະຊຸມກຸ່ມຜູ້ອາໄສຢູ່ ຫຼື ກຸ່ມຄອບຄົວຕາມຄຳເຊີນຂອງແຕ່ລະກຸ່ມເທົ່ານັ້ນ.

   C. ສະຖານເບິ່ງແຍງດູແລຕ້ອງສົ່ງຜົນຂອງການປະຊຸມກຸ່ມໃຫ້ກັບພະນັກງານທີ່ຖືກແຕ່ງຕັ້ງ ຜູ້ທີ່ໄດ້ຮັບອະນຸມັດຈາກກຸ່ມຜູ້ອາໄສຢູ່ ແລະ ຄອບຄົວ ແລະ ສະຖານເບິ່ງແຍງດູແລ ແລະ ຜູ້ທີ່ຮັບຜິດຊອບໃຫ້ການຊ່ວຍເຫຼືອ ແລະ ຕອບໃບສະເໜີເປັນລາຍລັກອັກສອນ.

   D. ສະຖານເບິ່ງແຍງດູແລຕ້ອງພິຈາລະນາທັດສະນະຂອງຜູ້ອາໄສຢູ່ ຫຼື ກຸ່ມຄອບຄົວ ແລະ ດຳເນີນການຕາມຄຳຮ້ອງທຸກ ແລະ ຄຳເຫັນແນະນຳຂອງກຸ່ມດັ່ງກ່າວກ່ຽວຂ້ອງກັບບັນຫາຂອງການເບິ່ງແຍງດູແລ ແລະ ຊີວິດຂອງຜູ້ອາໄສຢູ່ໃນສະຖານເບິ່ງແຍງດູແລ.

      a. ສະຖານເບິ່ງແຍງດູແລຕ້ອງສາມາດສະແດງຄຳຕອບ ແລະ ເຫດຜົນຂອງພວກເຂົາຕໍ່ຄຳຕອບດັ່ງກ່າວ.

      b. ອັນນີ້ຈະບໍ່ຖືກຕີຄວາມໝາຍວ່າ ສະຖານເບິ່ງແຍງດູແລຕ້ອງຈັດຕັ້ງປະຕິບັດທຸກໆຄຳສະເໜີຂອງຜູ້ອາໄສຢູ່ ຫຼື ກຸ່ມຄອບຄົວຕາມທີ່ສະເໜີແນະນຳໃຫ້.

6. ຜູ້ອາໄສຢູ່ມີສິດເຂົ້າຮ່ວມໃນກຸ່ມຄອບຄົວ.

7. ຜູ້ອາໄສຢູ່ມີສິດໃຫ້ຄົນໃນຄອບຄົວ ຫຼື ຕົວແທນຜູ້ອາໄສຢູ່ຄົນອື່ນເຂົ້າປະຊຸມຢູ່ໃນສະຖານເບິ່ງແຍງດູແລກັບຄອບຄົວອື່ນ ຫຼື ຕົວແທນຜູ້ຢູ່ອາໄສຂອງຜູ້ຢູ່ອາໄສຄົນອື່ນຢູ່ໃນສະຖານເບິ່ງແຍງດູແລໄດ້.

8. ຜູ້ອາໄສຢູ່ມີສິດເຂົ້າຮ່ວມກິດຈະກຳອື່ນໆ, ລວມທັງກິດຈະກຳທາງສັງຄົມ, ສາສະໜາ, ແລະ ຊຸມຊົນທີ່ບໍ່ແຊກແຊງສິດຜູ້ອາໄສຢູ່ຄົນອື່ນໃນສະຖານເບິ່ງແຍງດູແລ.

9. ຜູ້ອາໄສຢູ່ມີສິດເລືອກ ຫຼື ປະຕິເສດທີ່ຈະດຳເນີນການບໍລິການສຳລັບສະຖານເບິ່ງແຍງດູແລ ແລະ ສະຖານເບິ່ງແຍງດູແລຕ້ອງບໍ່ຮຽກຮ້ອງໃຫ້ຜູ້ອາໄສຢູ່ດຳເນີນການບໍລິການໃຫ້ກັບສະຖານເບິ່ງແຍງດູແລ. ຜູ້ອາໄສຢູ່ອາດຈະດຳເນີນການບໍລິການໃຫ້ກັບສະຖານເບິ່ງແຍງດູແລ, ຖ້າລາວເລືອກ ເມື່ອ—

   A. ສະຖານເບິ່ງແຍງດູແລໄດ້ບັນທຶກຄວາມຕ້ອງການ ຫຼື ຄວາມປະສົງຂອງຜູ້ຢູ່ອາໄສສຳລັບວຽກຢູ່ໃນແຜນການເບິ່ງແຍງດູແລ.

   B. ແຜນລະບຸລັກສະນະຂອງການບໍລິການທີ່ໄດ້ດຳເນີນ ແລະ ບໍ່ວ່າການບໍລິການຈະເຮັດດ້ວຍຄວາມສະໝັກໃຈ ຫຼື ໄດ້ຮັບຄ່າຈ້າງຫຼືບໍ່ກໍ່ຕາມ;

   C. ການຊົດເຊີຍໃຫ້ກັບການບໍລິການທີ່ໄດ້ຮັບຄ່າຈ້າງໃນອັດຕາທົ່ວໄປ ຫຼື ສູງກວ່າ; ແລະ

   D. ຜູ້ອາໄສຢູ່ເຫັນດີກັບການຈັດວຽກໃຫ້ຕາມທີ່ໄດ້ອະທິບາຍໄວ້ຢູ່ໃນແຜນການເບິ່ງແຍງດູແລ.

10. ຜູ້ອາໄສຢູ່ມີສິດຈັດການດ້ານການເງິນຂອງລາວ. ອັນນີ້ລວມມີສິດທີ່ຈະຮູ້ລ່ວງໜ້າໃນເລື່ອງຄ່າທຳນຽມທີ່ສະຖານເບິ່ງແຍງດູແລອາດຈະບັງຄັບໃຊ້ເກັບກັບເງິນສ່ວນຕົວຂອງຜູ້ອາໄສຢູ່.

   A. ສະຖານເບິ່ງແຍງດູແລອາດຈະບໍ່ຮຽກຮ້ອງໃຫ້ຜູ້ອາໄສຢູ່ຝາກເງິນສ່ວນຕົວຂອງເຂົາເຈົ້າກັບສະຖານເບິ່ງແຍງດູແລ. ຖ້າຜູ້ອາໄສຢູ່ເລືອກທີ່ຈະຝາກເງິນສ່ວນຕົວໄວ້ກັບສະຖານເບິ່ງແຍງດູແລຕາມການໃຫ້ສິດຂອງຜູ້ອາໄສຢູ່ເປັນລາຍລັກອັກສອນ, ສະຖານເບິ່ງແຍງດູແລຕ້ອງເຮັດໜ້າທີ່ໃນນາມເປັນຜູ້ໄດ້ຮັບສິດຂອງຜູ້ອາໄສຢູ່ຮັກສາ, ຄຸ້ມຄອງ, ຈັດການ, ແລະ ດຳເນີນບັນຊີເງິນສ່ວນຕົວຂອງຜູ້ອາໄສຢູ່ທີ່ຝາກໄວ້ກັບສະຖານເບິ່ງແຍງດູແລ ຕາມທີ່ໄດ້ລະບຸໄວ້ຢູ່ໃນຂໍ້ນີ້.

   B. ການຝາກເງິນ.

      a. ສະຖານເບິ່ງແຍງດູແລຕ້ອງຝາກເງິນສ່ວນຕົວຂອງຜູ້ອາໄສຢູ່ຄົນໃດກໍ່ຕາມທີ່ມີຈຳນວນເກີນ $100 ໄວ້ຢູ່ໃນບັນຊີ (ຫຼື ບັນດາບັນຊີ) ທີ່ມີດອກເບ້ຍ, ແລະ ນຳເອົາດອກເບ້ຍທັງໝົດທີ່ໄດ້ຈາກເງິນຝາກຂອງຜູ້ອາໄສຢູ່ໄປເຂົ້າບັນຊີນັ້ນ. (ຢູ່ໃນບັນຊີຮ່ວມກັນ, ບັນຊີເຫຼົ່ານີ້ຕ້ອງໄດ້ເຮັດການບັນຊີແຍກສຳລັບຫຸ້ນຂອງຜູ້ອາໄສຢູ່ແຕ່ລະຄົນ.) ສະຖານເບິ່ງແຍງດູແລຕ້ອງຮັກສາເງິນສ່ວນຕົວຂອງຜູ້ອາໄສຢູ່ທີ່ບໍ່ເກີນ $100 ໄວ້ຢູ່ໃນບັນຊີທີ່ບໍ່ມີດອກເບ້ຍ, ບັນຊີມີດອກເບ້ຍ, ຫຼື ເກັບເປັນເງິນສົດໄວ້ໄດ້.

      b. ຜູ້ອາໄສຢູ່ຜູ້ທີ່ມີການເບິ່ງແຍງດູແລຈາກເງິນຂອງ Medicaid: ສະຖານເບິ່ງແຍງດູແລຕ້ອງຝາກເງິນສ່ວນຕົວຂອງຜູ້ອາໄສຢູ່ ທີ່ມີຈຳນວນເກີນ $50 ໄວ້ຢູ່ໃນບັນຊີ (ຫຼື ບັນດາບັນຊີ) ທີ່ມີດອກເບ້ຍ, ແລະ ນຳເອົາດອກເບ້ຍທັງໝົດທີ່ໄດ້ຈາກເງິນຝາກຂອງຜູ້ອາໄສຢູ່ໄປເຂົ້າບັນຊີນັ້ນ. (ຢູ່ໃນບັນຊີຮ່ວມກັນ, ບັນຊີເຫຼົ່ານີ້ຕ້ອງໄດ້ເຮັດການບັນຊີແຍກສຳລັບຫຸ້ນຂອງຜູ້ອາໄສຢູ່ແຕ່ລະຄົນ.)

ສະຖານເບິ່ງແຍງດູແລຕ້ອງຮັກສາເງິນສ່ວນຕົວ ທີ່ບໍ່ເກີນ $50 ໄວ້ຢູ່ໃນບັນຊີທີ່ບໍ່ມີດອກເບ້ຍ, ບັນຊີມີດອກເບ້ຍ, ຫຼື ເກັບເປັນເງິນສົດໄວ້ໄດ້.

C. ການບັນຊີ ແລະ ບັນທຶກ. ສະຖານເບິ່ງແຍງດູແລຕ້ອງສ້າງ ແລະ ຮັກສາລະບົບທີ່ຮັບປະກັນເລື່ອງການບັນຊີເຕັມ ແລະ ຄົບຖ້ວນ ແລະ ແຍກຕ່າງຫາກສຳລັບເງິນສ່ວນຕົວຂອງຜູ້ອາໄສຢູ່ແຕ່ລະຄົນທີ່ໄດ້ຝາກໄວ້ກັບສະຖານເບິ່ງແຍງດູແລໃນນາມຂອງຜູ້ອາໄສຢູ່ຕາມຫຼັກການບັນຊີທີ່ຍອມຮັບກັນທົ່ວໄປ.

a. ລະບົບຕ້ອງບໍ່ໃຫ້ມີການເອົາເງິນຂອງຜູ້ອາໄສຢູ່ໄປລວມເຂົ້າກັບເງິນຂອງສະຖານເບິ່ງແຍງດູແລ ຫຼື ກັບເງິນຂອງຄົນອື່ນທີ່ບໍ່ແມ່ນຜູ້ອາໄສຢູ່ຄົນອື່ນ.

b. ບັນທຶກດ້ານການເງິນຂອງແຕ່ລະບຸກຄົນແມ່ນຕ້ອງໄດ້ແຈ້ງໃຫ້ຜູ້ອາໄສຢູ່ຜ່ານບັນຊີສຳຮອງປະຈຳງວດ ແລະ ຕາມການຂໍເອົາ.

D. ແຈ້ງການເງິນຍອດເຫຼືອ. ສະຖານເບິ່ງແຍງດູແລຕ້ອງແຈ້ງບອກຜູ້ອາໄສຢູ່ແຕ່ລະຄົນທີ່ໄດ້ຮັບການຊ່ວຍເຫຼືອຂອງ Medicaid—

a. ເມື່ອຈຳນວນເງິນຢູ່ໃນບັນຊີຂອງຜູ້ອາໄສຢູ່ຮອດ $200 ໜ້ອຍກວ່າຈຳນວນຈຳກັດຊັບສິນ SSI ສຳລັບຄົນໜຶ່ງ.

b. ດັ່ງນັ້ນ, ໃນການເພີ່ມເຕີມໃສ່ມູນຄ່າຊັບສິນທີ່ບໍ່ໄດ້ຮັບການຍົກເວັ້ນອື່ນຂອງຜູ້ອາໄສຢູ່ແລ້ວ ຖ້າຈຳນວນເງິນຢູ່ໃນບັນຊີຮອດຈຳນວນຈຳກັດຊັບສິນ SSI ສຳລັບຄົນໜຶ່ງແລ້ວ, ຜູ້ອາໄສຢູ່ອາດຈະໝົດສິດທີ່ຈະໄດ້ຮັບ Medicaid ຫຼື SSI.

E. ການສົ່ງເງິນໃຫ້ເມື່ອມີການອະນຸຍາດໃຫ້ອອກຈາກສະຖານເບິ່ງແຍງດູແລ, ມີການຕັດສິນໂທດ, ຫຼື ເກີດເສຍຊີວິດ. ເມື່ອຜູ້ອາໄສຢູ່ໄດ້ຮັບອະນຸຍາດໃຫ້ອອກຈາກສະຖານເບິ່ງແຍງດູແລ, ຖືກຕັດສິນໂທດ, ຫຼື ເສຍຊີວິດ ແຕ່ຜູ້ອາໄສຢູ່ມີເງິນສ່ວນຕົວຝາກໄວ້ກັບສະຖານເບິ່ງແຍງດູແລ, ທາງສະຖານເບິ່ງແຍງດູແລຕ້ອງສົ່ງເງິນ ແລະ ລາຍງານບັນຊີສຸດທ້າຍຂອງເງິນຂອງຜູ້ອາໄສຢູ່ໄປໃຫ້ກັບຜູ້ອາໄສ, ຫຼື ກໍລະນີເສຍຊີວິດ ແມ່ນສົ່ງໄປຫາກັບບຸກຄົນ ຫຼື ສານພິສູດພິໄນກຳທີ່ຮັບຜິດຊອບດຳເນີນການຊັບສິນຂອງຜູ້ອາໄສຢູ່ພາຍໃນ 30 ວັນຕາມກົດໝາຍຂອງລັດ.

F. ການຮັບປະກັນຄວາມໝັ້ນຄົງທາງດ້ານການເງິນ. ສະຖານເບິ່ງແຍງດູແລຕ້ອງຊື້ພັນທະບັດຄໍ້າປະກັນ ຫຼື ໃຫ້ການຮັບປະກັນທີ່ໜ້າພໍໃຈກັບ CMS ເພື່ອຮັບປະກັນຄວາມໝັ້ນຄົງຂອງເງິນສ່ວນຕົວຂອງຜູ້ອາໄສຢູ່ທຸກຄົນທີ່ຝາກໄວ້ກັບສະຖານເບິ່ງແຍງດູແລ.

# ການບໍລິການທີ່ລວມໄວ້ຢູ່ໃນການຈ່າຍ Medicare ຫຼື Medicaid

ສະຖານເບິ່ງແຍງດູແລຕ້ອງບໍ່ມີການເກັບຄ່າທຳນຽມໃດໜຶ່ງກັບເງິນສ່ວນຕົວຂອງຜູ້ອາໄສຢູ່ຕໍ່ກັບເຄື່ອງໃຊ້ ຫຼື ການບໍລິການໃດໜຶ່ງທີ່ໄດ້ຊຳລະໃຫ້ພາຍໃຕ້ Medicaid ຫຼື Medicare (ຍົກເວັ້ນເງິນທີ່ຕ້ອງຫັກເອົາ ແລະ ຈຳນວນເງິນປະກັນໄພຮ່ວມທີ່ຫັກເອົາໄດ້). ສະຖານເບິ່ງແຍງດູແລອາດຈະເກັບຄ່ານຳຜູ້ອາໄສຢູ່ສຳລັບການບໍລິການທີ່ຂໍ ທີ່ມີຄ່າແພງກວ່າ ຫຼື ເກີນຄ່າບໍລິການທີ່ຄຸ້ມຄອງໃຫ້. (ອັນນີ້ບໍ່ມີຜົນກະທົບຕໍ່ຂໍ້ຫ້າມໃນການເກັບຄ່າຂອງສະຖານເບິ່ງແຍງດູແລສຳລັບເຄື່ອງໃຊ້ ແລະ ການບໍລິການທີ່ Medicaid ໄດ້ຈ່າຍ.)

1. ໃນໄລຍະເວລາຂອງການພັກຢູ່ທີ່ໄດ້ຮັບການຄຸ້ມຄອງຈາກ Medicare ຫຼື Medicaid, ສະຖານເບິ່ງແຍງດູແລອາດຈະບໍ່ເກັບຄ່າກັບຜູ້ອາໄສຢູ່ສຳລັບເຄື່ອງໃຊ້ ແລະ ການບໍລິການໃນໝວດຕໍ່ໄປນີ້ຄື:

   A. ການບໍລິການເບິ່ງແຍງດູແລ.

   B. ການບໍລິການອາຫານ ແລະ ໂພຊະນາການ.

   C. ໂຄງການກິດຈະກຳຕ່າງໆ.

   D. ການບໍລິການຈັດຫ້ອງ/ຕຽງນອນ.

   E. ເຄື່ອງໃຊ້ຮັກສາອະນາໄມສ່ວນຕົວ ແລະ ການບໍລິການປະຈຳວັນຕາມທີ່ຕ້ອງການ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງຜູ້ອາໄສຢູ່, ລວມທັງທີ່ບໍ່ຈຳກັດແຕ່:

      - ເຄື່ອງໃຊ້ອະນາໄມຜົມ, ຫວີ, ແປງຖູ
      - ສະບູ່ອາບ, ສະບູ່ຂ້າເຊື້ອ ຫຼື ນ້ຳຢາທຳຄວາມສະອາດສະເພາະ ເມື່ອໄດ້ບອກໃຫ້ມີການເອົາໃຈໃສ່ຕໍ່ບັນຫາຜິວໜັງສະເພາະ ຫຼື ເພື່ອບໍ່ໃຫ້ມີການຕິດເຊື້ອ
      - ມີດໂກນ, ຄຣີມໂກນໜວດ
      - ແປງຖູແຂ້ວ, ຢາຖູແຂ້ວ, ກາວຕິດແຂ້ວທຽມ, ນ້ຳຢາທຳຄວາມສະອາດແຂ້ວທຽມ, ໄໝຂັດແຂ້ວ
      - ໂລຊັ່ນທາຜິວໃຫ້ຊຸ່ມຊື່ນ
      - ເຈ້ຍເຊັດ, ສຳລີ, ໄມ້ແກະຂີ້ຫູ
      - ຢາດັບກິ່ນຕົວ
      - ການເບິ່ງແຍງດູແລທີ່ຕ້ອງເຮັດທັນທີ ແລະ ເຄື່ອງໃຊ້, ຜູ້ອະນາໄມ ແລະ ເຄື່ອງໃຊ້ທີ່ກ່ຽວຂ້ອງ
      - ຜ້າເຊັດຕົວ, ຜ້າເຊັດ, ເສື້ອກັນເປື້ອນໂຮງໝໍ

- ຢາຊື້ມາເອງ
- ການບໍລິການຮັກສາອະນາໄມຜົມ ແລະ ເລັບ
- ການຊ່ວຍເຫຼືອການອາບນ້ຳ, ແລະ
- ການຊັກລີດສ່ວນຕົວພື້ນຖານ.

F. ການບໍລິການສັງຄົມກ່ຽວຂ້ອງກັບທາງການແພດ.

G. ການບໍລິການຂອງໂຮງໝໍສຳລັບຜູ້ໃກ້ຕາຍທີ່ຜູ້ອາໄສຢູ່ເລືອກ ແລະ ໄດ້ຈ່າຍໃຫ້ພາຍໃຕ້ເງິນຊ່ວຍເຫຼືອໂຮງໝໍສຳລັບຜູ້ໃກ້ຕາຍຂອງ Medicare ຫຼື Medicaid ຈ່າຍໃຫ້ພາຍໃຕ້ແຜນປະກັນຂອງລັດ.

2. ເຄື່ອງໃຊ້ ແລະ ການບໍລິການທີ່ອາດຈະເກັບເອົາຈາກເງິນຂອງຜູ້ອາໄສຢູ່. ຕົວຢ່າງ ແລະ ໝວດເຄື່ອງໃຊ້ ແລະ ການບໍລິການທົ່ວໄປອາດຈະເກັບເອົາຈາກເງິນຂອງຜູ້ອາໄສຢູ່ ຖ້າຜູ້ອາໄສຢູ່ຂໍເອົາ, ຖ້າພວກເຂົາບໍ່ຖືກກຳນົດໃຫ້ບັນລຸຕາມເປົ້າໝາຍທີ່ກ່າວໄວ້ຢູ່ໃນແຜນການເບິ່ງແຍງດູແລຂອງຜູ້ອາໄສຢູ່, ຖ້າສະຖານເບິ່ງແຍງດູແລແຈ້ງຜູ້ອາໄສຢູ່ວ່າ ຈະມີການເກັບຄ່າໃດໜຶ່ງ, ແລະ ຖ້າທາງ Medicare ຫຼື Medicaid ບໍ່ຊຳລະໃຫ້ຄື:

- ໂທລະສັບ, ລວມທັງໂທລະສັບມືຖື.
- ໂທລະພາບ/ວິທະຍຸ, ຄອມພິວເຕີສ່ວນຕົວ ຫຼື ອຸປະກອນອີເລັກໂທຣນິກອື່ນສຳລັບໃຊ້ສ່ວນຕົວ.
- ເຄື່ອງໃຊ້ເພື່ອຄວາມສະດວກສະບາຍສ່ວນຕົວ, ລວມທັງອຸປະກອນສູບຢາ, ເຄື່ອງຫຍິບແສ່ວ ແລະ ປື້ມເລື່ອງຕ່າງໆ, ແລະ ເຂົ້າໜົມຕ່າງໆ.
- ເຄື່ອງສຳອາງ ແລະ ເຄື່ອງແຕ່ງຕົວ ແລະ ການບໍລິການຕ່າງໆເກີນຄ່າທີ່ທາງ Medicaid ຫຼື Medicare ຈ່າຍໃຫ້.
- ເຄື່ອງນຸ່ງຖືສ່ວນຕົວ.
- ເລື່ອງການອ່ານສ່ວນຕົວ.
- ຂອງຂວັນຊື້ໃນນາມຂອງຜູ້ອາໄສຢູ່.
- ດອກໄມ້ ແລະ ຕົ້ນໄມ້.
- ຄ່າໃຊ້ຈ່າຍເຂົ້າຮ່ວມງານສັງຄົມ ແລະ ການບັນເທີງຢູ່ນອກຂອບເຂດຂອງໂຄງການກິດຈະກຳຕ່າງໆ.
- ການບໍລິການເບິ່ງແຍງດູແລພິເສດທີ່ບໍ່ໄດ້ຮັບການຄຸ້ມຄອງເຊັ່ນ ຈ້າງພະຍາບານ ຫຼື ຜູ້ຊ່ວຍສ່ວນຕົວ.

- ຫ້ອງສ່ວນຕົວ, ຍົກເວັ້ນເມື່ອມີຄວາມຈໍາເປັນຕ້ອງໄດ້ບໍາບັດສະເພາະ (ຕົວຢ່າງ, ການແຍກຫ້ອງເພື່ອຄວບຄຸມການຕິດເຊື້ອ).
- ອາຫານປຸງແຕ່ງພິເສດ ຫຼື ຕາມທາງເລືອກແທນອາຫານ ແລະ ເຂົ້າທີ່ທາງສະຖານເບິ່ງແຍງດູແລແຕ່ງໃຫ້ໂດຍທົ່ວໄປ.

  ສະຖານເບິ່ງແຍງດູແລອາດຈະບໍ່ເກັບຄ່າເຂົ້າ ແລະ ອາຫານພິເສດ, ລວມທັງອາຫານເສີມຕາມແພດສັ່ງທີ່ທາງແພດຂອງຜູ້ອາໄສຢູ່, ຜູ້ຊ່ວຍແພດ, ຜູ້ຮັກສາພະຍາບານ, ຫຼື ຜູ້ຊ່ຽວຊານພະຍາບານປິ່ນປົວສັ່ງໃຫ້.

  ເມື່ອທໍາການແຕ່ງເຂົ້າ ແລະ ອາຫານ, ສະຖານເບິ່ງແຍງດູແລຕ້ອງພິຈາລະນາເອົາໃຈໃສ່ຕາມຄວາມຕ້ອງການ ແລະ ຄວາມມັກຂອງຜູ້ອາໄສຢູ່ ແລະ ການແຕ່ງໃຫ້ຕາມວັດທະນະທໍາ ແລະ ສາສະໜາໂດຍລວມຂອງຄົນສ່ວນໃຫຍ່ຂອງສະຖານເບິ່ງແຍງດູແລ.

3. ການຂໍເອົາເຄື່ອງໃຊ້ ແລະ ການບໍລິການ

   A. ສະຖານເບິ່ງແຍງດູແລສາມາດເກັບຄ່າເຄື່ອງໃຊ້ ຫຼື ການບໍລິການທີ່ບໍ່ໄດ້ຮັບການຄຸ້ມຄອງນໍາຜູ້ຢູ່ອາໄສໄດ້ພຽງແຕ່ຖ້າເຄື່ອງໃຊ້ ຫຼື ການບໍລິການດັ່ງກ່າວແມ່ນທາງຜູ້ອາໄສຢູ່ຂໍເອົາໂດຍສະເພາະ.

   B. ສະຖານເບິ່ງແຍງດູແລຕ້ອງບໍ່ຮຽກຮ້ອງໃຫ້ຜູ້ອາໄສຢູ່ຂໍເອົາເຄື່ອງໃຊ້ ຫຼື ການບໍລິການໃດໆເປັນເງື່ອນໄຂຂອງການຮັບເຂົ້າ ຫຼື ການໃຫ້ພັກຢູ່ຕໍ່.

   C. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ກັບຜູ້ອາໄສຢູ່ທີ່ຂໍເຄື່ອງໃຊ້ ຫຼື ການບໍລິການໂດຍທາງປາກເປົ່າ ຫຼື ລາຍລັກອັກສອນສໍາລັບສິ່ງທີ່ຈະເກັບຄ່າສໍາລັບເຄື່ອງໃຊ້ ແລະ ການບໍລິການ ແລະ ຕ້ອງບອກວ່າຈະເກັບຄ່າເທົ່າໃດ.

# ຂໍ້ມູນຂ່າວສານ ແລະ ການສື່ສານ

1. ຜູ້ອາໄສຢູ່ມີສິດໄດ້ຮັບແຈ້ງສິດຂອງຕົນເອງ ແລະ ຂໍ້ກໍານົດ ແລະ ກົດລະບຽບທັງໝົດທີ່ໃຊ້ຄຸ້ມຄອງຄວາມປະພຶດ ແລະ ຄວາມຮັບຜິດຊອບຂອງຜູ້ອາໄສຢູ່ໃນລະຫວ່າງທີ່ລາວພັກຢູ່ໃນສະຖານເບິ່ງແຍງດູແລ.

2. ຜູ້ອາໄສຢູ່ມີສິດເຂົ້າເຖິງບັນທຶກສ່ວນຕົວ ແລະ ທາງການແພດກ່ຽວກັບລາວເອງໄດ້.

   A. ສະຖານເບິ່ງແຍງດູແລຕ້ອງໃຫ້ຜູ້ອາໄສຢູ່ເຂົ້າເຖິງບັນທຶກສ່ວນຕົວ ແລະ ທາງການແພດກ່ຽວກັບລາວເອງຕາມການຂໍເປັນລາຍລັກອັກສອນ ຫຼື ປາກເປົ່າໃນຮູບແບບ ຫຼື ຕາມແບບຟອມທີ່ຂໍໂດຍແຕ່ລະບຸກຄົນ, ຖ້າມັນມີພ້ອມໃຫ້ເປັນຮູບແບບ ຫຼື ແບບຟອມດັ່ງກ່າວ (ລວມທັງໃນຮູບແບບ ຫຼື ແບບ

ຟອມອີເລັກໂທຣນິກ ເມື່ອບັນທຶກດັ່ງກ່າວຖືກເກັບໄວ້ໃນຮູບແບບອີເລັກໂທຣນິກ); ຫຼື ຖ້າບໍ່ມີ, ກໍ່ເອົາໃຫ້ໃນແບບຟອມສະບັບພິມອອກທີ່ສາມາດອ່ານໄດ້ ຫຼື ໃນຮູບແບບ ຫຼື ແບບອື່ນພາຍໃນ 24 ຊົ່ວໂມງ (ຍົກເວັ້ນວັນເສົາອາທິດ ແລະ ວັນພັກລາດຊະການ) ຕາມການຕົກລົງກັນລະຫວ່າງສະຖານເບິ່ງແຍງດູແລ ແລະ ບຸກຄົນ; ແລະ

B. ສະຖານເບິ່ງແຍງດູແລຕ້ອງອະນຸຍາດໃຫ້ຜູ້ອາໄສຢູ່ເອົາສຳເນົາບັນທຶກ ຫຼື ສ່ວນໃດໜຶ່ງຂອງມັນໄດ້ (ລວມທັງຢູ່ໃນຮູບແບບ ຫຼື ແບບຟອມທາງອີເລັກໂທຣນິກ ເມື່ອບັນທຶກດັ່ງກ່າວຖືກເກັບຮັກສາໄວ້ທາງອີເລັກໂທຣນິກ) ຕາມການຮ້ອງຂໍ ແລະ ຕ້ອງແຈ້ງໃຫ້ທາງສະຖານເບິ່ງແຍງດູແລຮູ້ລ່ວງໜ້າກ່ອນ 2 ວັນເຮັດວຽກ. ສະຖານເບິ່ງແຍງດູແລອາດຈະເກັບຄ່າທຳນຽມອີງຕາມລາຄາທີ່ສົມເຫດສົມຜົນໃນການເອົາສຳເນົາຕ່າງໆໃຫ້, ໂດຍມີເງື່ອນໄຂວ່າ ຄ່າທຳນຽມອາດຈະມີແຕ່ຄ່າໃຊ້ຈ່າຍຕໍ່ໄປນີ້ເທົ່ານັ້ນຄື:

- ແຮງງານສຳລັບການອັດສຳເນົາບັນທຶກທີ່ບຸກຄົນຂໍ, ບໍ່ວ່າຈະເປັນສະບັບເຈ້ຍ ຫຼື ຮູບແບບທາງອີເລັກໂທຣນິກ;
- ອຸປະກອນສຳລັບສ້າງສຳເນົາສະບັບເຈ້ຍ ຫຼື ເຄື່ອງອັດຂໍ້ມູນອີເລັກໂທຣນິກ ຖ້າບຸກຄົນຂໍໃຫ້ເອົາສຳເນົາສະບັບອີເລັກໂທຣນິກໃນອຸປະກອນແບບພົກພາໄດ້; ແລະ
- ຄ່າໄປສະນີ ເມື່ອບຸກຄົນໄດ້ຂໍໃຫ້ສົ່ງສຳເນົາໄປໃຫ້ໂດຍທາງໄປສະນີ.

3. ຕາມຂໍ້ມູນການຍົກເວັ້ນທີ່ໄດ້ອະທິບາຍໄວ້ຢູ່ໃນວັກທີ (2) ແລະ (11) ຂອງຂໍ້ນີ້, ສະຖານເບິ່ງແຍງດູແລຕ້ອງຮັບປະກັນວ່າ ຂໍ້ມູນທີ່ເອົາໃຫ້ກັບຜູ້ອາໄສຢູ່ແຕ່ລະຄົນແມ່ນເອົາໃຫ້ໃນແບບຟອມ ແລະ ຮູບແບບທີ່ຜູ້ອາໄສຢູ່ສາມາດເຂົ້າເຖິງ ແລະ ເຂົ້າໃຈໄດ້, ລວມທັງເອົາໃຫ້ເປັນຮູບແບບທາງເລືອກ ຫຼື ເປັນພາສາທີ່ຜູ້ອາໄສຢູ່ສາມາດເຂົ້າໃຈໄດ້. ບົດສັງລວມທີ່ແປຂໍ້ມູນຢູ່ໃນວັກທີ (2) ຂອງຂໍ້ນີ້ອາດຈະຕ້ອງມີໄວ້ໃຫ້ກັບຄົນເຈັບຕາມທີ່ເຂົາເຈົ້າຂໍ ແລະ ໃຫ້ເຂົາເຈົ້າຈ່າຍເອງຕາມກົດໝາຍກຳນົດ.
4. ຜູ້ອາໄສຢູ່ມີສິດໄດ້ຮັບແຈ້ງການໂດຍທາງປາກເປົ່າ (ໝາຍຄວາມວ່າ ໄດ້ບອກ) ແລະ ເປັນລາຍລັກອັກສອນ (ລວມທັງຕົວໜັງສືນູນ) ຢູ່ໃນຮູບແບບ ແລະ ເປັນພາສາທີ່ລາວເຂົ້າໃຈໄດ້, ລວມທັງ;

A. ລາຍລະອຽດຮູບແບບຂອງການປົກປ້ອງເງິນສ່ວນຕົວ.

B. ລາຍລະອຽດເງື່ອນໄຂກຳນົດ ແລະ ຂັ້ນຕອນດຳເນີນການກຳນົດການມີສິດໄດ້ຮັບ Medicaid, ລວມທັງສິດຂໍການປະເມີນຊັບສິນ.

C. ບັນຊີລາຍຊື່, ທີ່ຢູ່ (ທາງໄປສະນີ ແລະ ອີເມວ), ແລະ ເບີໂທລະສັບຂອງອົງການຄຸ້ມຄອງ ແລະ ຂໍ້ມູນຂ່າວສານຂອງລັດ, ກຸ່ມຜູ້ສະໜັບສະໜູນຜູ້ອາໄສຢູ່ ແລະ ໜ່ວຍງານຄວບຄຸມການສໍ້ໂກງ Medicaid ທີ່ຖືກຕ້ອງທັງໝົດ (ເບິ່ງໜ້າ 29-30); ແລະ

D. ຄຳໃຫ້ການທີ່ຜູ້ອາໄສຢູ່ອາດຈະຍື່ນຄຳຮ້ອງຮຽນກັບຫ້ອງການຮັບຄຳຮ້ອງຮຽນສະຖານເບິ່ງແຍງດູແລສຸຂະພາບຂອງລັດມິນິໂຊຕາ (Minnesota Office of Health Facility Complaints) ກ່ຽວກັບການສົງໄສການລະເມີດກົດລະບຽບສະຖານເບິ່ງແຍງດູແລຂອງລັດ, ລວມທັງບໍ່ຈຳກັດແຕ່ການລ່ວງລະເມີດຜູ້ອາໄສຢູ່, ການລະເລີຍ, ການສວຍໃຊ້, ການສໍ້ໂກງຊັບສິນຢູ່ໃນສະຖານເບິ່ງແຍງດູແລ, ການບໍ່ປະຕິບັດຕາມເງື່ອນໄຂກຳນົດພິໄນກຳ ແລະ ການຂໍຂໍ້ມູນກ່ຽວກັບການກັບຄືນສູ່ຊຸມຊົນ.

   a. ຂໍ້ມູນ ແລະ ຂໍ້ມູນຕິດຕໍ່ອົງການສະໜັບສະໜູນຂອງລັດ ແລະ ທ້ອງຖິ່ນ (ເບິ່ງໜ້າ 29-30);

   b. ຂໍ້ມູນກ່ຽວກັບການມີສິດໄດ້ຮັບ ແລະ ການຄຸ້ມຄອງຂອງ Medicaid (ເບິ່ງໜ້າ 29-30);

   c. ຂໍ້ມູນຕິດຕໍ່ສູນຂໍ້ມູນຜູ້ສູງອາຍຸ ແລະ ຄົນພິການ (Aging and Disability Resource Center); ຫຼື ໂຄງການຫ້າມຜິດປະຕູອື່ນ (No Wrong Door Program) (ເບິ່ງໜ້າ 29-30);

   d. ຂໍ້ມູນຕິດຕໍ່ໜ່ວຍງານຄວບຄຸມການສໍ້ໂກງ Medicaid (ເບິ່ງໜ້າ 29-30);

   e. ຂໍ້ມູນ ແລະ ຂໍ້ມູນຕິດຕໍ່ສຳລັບການຍື່ນຄຳຮ້ອງທຸກ ຫຼື ຄຳຮ້ອງຮຽນກ່ຽວກັບການສົງໄສການລະເມີດກົດລະບຽບສະຖານເບິ່ງແຍງດູແລຂອງລັດ, ລວມທັງບໍ່ຈຳກັດແຕ່ການລ່ວງລະເມີດຜູ້ອາໄສຢູ່, ການລະເລີຍ, ການສວຍໃຊ້, ການສໍ້ໂກງຊັບສິນຢູ່ໃນສະຖານເບິ່ງແຍງດູແລ, ການບໍ່ປະຕິບັດຕາມເງື່ອນໄຂກຳນົດພິໄນກຳ ແລະ ການຂໍຂໍ້ມູນກ່ຽວກັບການກັບຄືນສູ່ຊຸມຊົນ (ເບິ່ງໜ້າ 29-30).

5. ສະຖານເບິ່ງແຍງດູແລຕ້ອງຕິດປະກາດໃຫ້ຜູ້ອາໄສຢູ່ ແລະ ຕົວແທນຂອງຜູ້ອາໄສຢູ່ຮູ້ເຖິງຂໍ້ມູນຕໍ່ໄປນີ້ໃນູບແບບ ແລະ ແບບຟອມທີ່ສາມາດເຂົ້າເຖິງ ແລະ ເຂົ້າໃຈໄດ້ຄື:

A. ບັນຊີລາຍຊື່, ທີ່ຢູ່ (ທາງໄປສະນີ ແລະ ອີເມວ), ແລະ ເບີໂທລະສັບຂອງອົງການຂອງລັດ ແລະ ກຸ່ມສະໜັບສະໜູນທີ່ຖືກຕ້ອງທັງໝົດເຊັ່ນ: ອົງການສຳຫຼວດຂອງລັດ, ຫ້ອງການອອກໃບອະນຸຍາດຂອງລັດ, ໜ່ວຍງານປົກປ້ອງຜູ້ໃຫຍ່ໃນບ່ອນທີ່ກົດໝາຍຂອງລັດໃຫ້ອຳນາດຢູ່ໃນສະຖານເບິ່ງແຍງດູແລໄລຍະຍາວ, ຫ້ອງການໂຄງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວຂອງລັດ, ເຄືອຂ່າຍປົກປ້ອງ ແລະ ໃຫ້ການສະໜັບສະໜູນ, ໂຄງການໃຫ້ບໍລິການຢູ່ໃນບ້ານ ແລະ ຊຸມຊົນ, ແລະ ໜ່ວຍງານຄວບຄຸມການສໍ້ໂກງ Medicaid ທີ່ຖືກຕ້ອງທັງໝົດ (ເບິ່ງໜ້າ 29-30); ແລະ

B. ຄຳໃຫ້ການທີ່ຜູ້ອາໄສຢູ່ອາດຈະຍື່ນຄຳຮ້ອງຮຽນກັບອົງການສຳຫຼວດຂອງລັດກ່ຽວກັບການສົງໄສການລະເມີດກົດລະບຽບສະຖານເບິ່ງແຍງດູແລຂອງລັດ, ລວມທັງບໍ່ຈຳກັດແຕ່ການລ່ວງລະເມີດຜູ້ອາໄສຢູ່, ການລະເລີຍ, ການສວຍໃຊ້, ການສໍ້ໂກງຊັບສິນຢູ່ໃນສະຖານເບິ່ງແຍງດູແລ, ການບໍ່ປະຕິບັດຕາມເງື່ອນໄຂກຳນົດພິໄນກຳ ແລະ ການຂໍຂໍ້ມູນກ່ຽວກັບການກັບຄືນສູ່ຊຸມຊົນ.

6. ຜູ້ອາໄສຢູ່ມີສິດນຳໃຊ້ໂທລະສັບໄດ້ຕາມເຫດຜົນອັນສົມຄວນ, ລວມທັງການບໍລິການ TTY ແລະ TDD, ແລະ ບ່ອນທີ່ຢູ່ໃນສະຖານເບິ່ງແຍງດູແລທີ່ບໍ່ໃຫ້ມີຜູ້ລັກຟັງການໂທໄດ້. ອັນນີ້ລວມມີສິດທີ່ຈະມີ ແລະ ນຳໃຊ້ໂທລະສັບມືຖືດ້ວຍຄ່າໃຊ້ຈ່າຍຂອງຕົວເອງໄດ້.

7. ສະຖານເບິ່ງແຍງດູແລຕ້ອງປົກປ້ອງ ແລະ ອຳນວຍຄວາມສະດວກສິດຂອງຜູ້ອາໄສຢູ່ ເພື່ອສື່ສານກັບບຸກຄົນ ແລະ ນິຕິບຸກຄົນທີ່ຢູ່ພາຍໃນ ແລະ ພາຍນອກສະຖານເບິ່ງແຍງດູແລ, ລວມທັງການເຂົ້າເຖິງ ແລະ ນຳໃຊ້ທີ່ສົມເຫດສົມຜົນຕໍ່ໄປນີ້ຄື:

A. ໂທລະສັບ, ລວມທັງບໍລິການ TTY ແລະ TDD;

B. ອິນເຕີເນັດ, ໃນລະດັບທີ່ມີໃຫ້ກັບສະຖານເບິ່ງແຍງດູແລ; ແລະ

C. ອຸປະກອນເຄື່ອງຂຽນ, ໄປສະນີ, ການຂຽນໜັງສື ແລະ ຄວາມສາມາດສົ່ງເມວ.

8. ຜູ້ອາໄສຢູ່ມີສິດສົ່ງ ແລະ ຮັບເມວ, ແລະ ຮັບຈົດໝາຍ, ຫໍ່ຂອງ ແລະ ວັດຖຸອື່ນໆທີ່ສົ່ງມາຍັງສະຖານເບິ່ງແຍງດູແລ ເພື່ອເອົາໃຫ້ຜູ້ອາໄສຢູ່ຜ່ານວິທີການອື່ນທີ່ບໍ່ແມ່ນບໍລິການທາງໄປສະນີໄດ້, ລວມທັງສິດຕໍ່:

A. ຄວາມເປັນສ່ວນຕົວຂອງການສື່ສານດັ່ງກ່າວຕາມຂໍ້ນີ້; ແລະ

B. ການເຂົ້າເຖິງອຸປະກອນເຄື່ອງຂຽນ, ໄປສະນີ, ແລະ ການຂຽນໜັງສືດ້ວຍຄ່າໃຊ້ຈ່າຍຂອງຜູ້ອາໄສຢູ່ເອງ.

9. ຜູ້ອາໄສຢູ່ມີສິດເຂົ້າເຖິງ ແລະ ມີຄວາມເປັນສ່ວນຕົວທີ່ເໝາະສົມໃນການນຳໃຊ້ການສື່ສານທາງອີເລັກໂທຣນິກຂອງເຂົາເຈົ້າເຊັ່ນ: ການສື່ສານທາງອີເມວ ແລະ ວິດີໂອ ແລະ ການຊອກຄົ້ນທາງອິນເຕີເນັດ.

A. ຖ້າສະຖານເບິ່ງແຍງດູແລມີການເຂົ້າເຖິງໃຫ້.

B. ດ້ວຍຄ່າໃຊ້ຈ່າຍຂອງຜູ້ອາໄສຢູ່ເອງ, ຖ້າມີຄ່າໃຊ້ຈ່າຍເກີດຂຶ້ນກັບສະຖານເບິ່ງແຍງດູແລທີ່ໃຫ້ການເຂົ້າເຖິງດັ່ງກ່າວແກ່ຜູ້ອາໄສຢູ່.

C. ການນຳໃຊ້ດັ່ງກ່າວຕ້ອງປະຕິບັດຕາມກົດໝາຍຂອງລັດ ແລະ ລັດຖະບານກາງ.

10. ຜູ້ອາໄສຢູ່ມີສິດ—

A. ກວດເບິ່ງຜົນໄດ້ຮັບຂອງການສຳຫຼວດຫຼ້າສຸດຂອງສະຖານເບິ່ງແຍງດູແລທີ່ດຳເນີນການໂດຍຜູ້ສຳຫຼວດຂອງລັດຖະບານກາງ ຫຼື ຂອງລັດ ແລະ ແຜນການແກ້ໄຂໃຫ້ຖືກຕ້ອງໃດໜຶ່ງມີຜົນນຳໃຊ້ກັບສະຖານເບິ່ງແຍງດູແລ; ແລະ

B. ຮັບຂໍ້ມູນຈາກອົງການຕ່າງໆທີ່ເຮັດໜ້າທີ່ເປັນຜູ້ສະໜັບສະໜູນລູກຄ້າ, ແລະ ໄດ້ຮັບໂອກາດຕິດຕໍ່ກັບອົງການເຫຼົ່ານີ້.

11. ສະຖານເບິ່ງແຍງດູແລຕ້ອງ—

A. ປະກາດຢູ່ບ່ອນໃດໜຶ່ງໃຫ້ຜູ້ອາໄສຢູ່, ແລະ ຄົນໃນຄອບຄົວ ແລະ ຕົວແທນຂອງຜູ້ອາໄສຢູ່ຕາມກົດໝາຍຮູ້ຈັກຜົນຂອງການສຳຫຼວດສະຖານບໍລິການຫຼ້າສຸດ.

B. ມີບົດລາຍງານກ່ຽວກັບການສຳຫຼວດ, ການຢັ້ງຢືນ, ແລະ ການສືບສວນການຮ້ອງຮຽນຕໍ່ກັບສະຖານເບິ່ງແຍງດູແລໃນໄລຍະ 3 ປີກ່ອນ, ແລະ ແຜນການແກ້ໄຂໃຫ້ຖືກຕ້ອງໃດໜຶ່ງມີຜົນນຳໃຊ້ກັບສະຖານເບິ່ງແຍງດູແລພ້ອມໄວ້ໃຫ້ບຸກຄົນໃດໜຶ່ງທົບທວນຄືນຕາມການຂໍ; ແລະ

C. ຕິດປະກາດແຈ້ງການເລື່ອງການມີບົດລາຍງານດັ່ງກ່າວໃຫ້ໃນພື້ນທີ່ຕ່າງໆຂອງສະຖານເບິ່ງແຍງດູແລ ທີ່ສັງຄົມສາມາດເຂົ້າເຖິງ ແລະ ເຫັນໄດ້ງ່າຍ.

D. ສະຖານເບິ່ງແຍງດູແລຕ້ອງບໍ່ເຮັດໃຫ້ມີຂໍ້ມູນທີ່ສາມາດລະບຸຕົວຜູ້ຮ້ອງຮຽນ ຫຼື ຜູ້ອາໄສຢູ່ນັ້ນໄດ້.

12. ສະຖານເບິ່ງແຍງດູແລຕ້ອງປະຕິບັດຕາມເງື່ອນໄຂກຳນົດສຳລັບພິໄນກຳ.

A. ເງື່ອນໄຂກຳນົດເຫຼົ່ານີ້ປະກອບມີຂໍ້ບັງຄັບເພື່ອແຈ້ງ ແລະ ໃຫ້ຂໍ້ມູນເປັນລາຍລັກອັກສອນແກ່ຜູ້ອາໄສຢູ່ທີ່ເປັນຜູ້ໃຫຍ່ທຸກຄົນກ່ຽວກັບສິດຍອມຮັບ ຫຼື ປະຕິເສດການປິ່ນປົວທາງການແພດ ຫຼື ການຜ່າຕັດ ແລະ ສ້າງພິໄນກຳຂຶ້ນຕາມທາງເລືອກຂອງຜູ້ອາໄສຢູ່.

B. ອັນນີ້ປະກອບດ້ວຍລາຍລະອຽດນະໂຍບາຍຂອງສະຖານເບິ່ງແຍງດູແລເປັນລາຍລັກອັກສອນ ເພື່ອຈັດຕັ້ງເຮັດພິໄນກຳ ແລະ ກົດໝາຍຂອງລັດທີ່ບັງຄັບໃຊ້.

C. ສະຖານເບິ່ງແຍງດູແລໄດ້ຮັບອະນຸຍາດໃຫ້ມີສັນຍາກັບພາກສ່ວນອື່ນໆ ເພື່ອເສີມຂໍ້ມູນນີ້ຕື່ມ ແຕ່ຍັງຮັບຜິດຊອບຕໍ່ການຮັບປະກັນໃຫ້ບັນລຸໄດ້ເງື່ອນໄຂກຳນົດຂອງຂໍ້ນີ້ຕາມກົດໝາຍ.

D. ຖ້າບຸກຄົນທີ່ເປັນຜູ້ໃຫຍ່ຂາດຄວາມສາມາດ ຫຼື ພິການໃນເວລາຮັບເຂົ້າ ແລະ ບໍ່ສາມາດຮັບຂໍ້ມູນ ຫຼື ປາກເວົ້າໄດ້ວ່າ ລາວໄດ້ເຮັດພິໄນກຳໄວ້ຫຼືບໍ່, ສະຖານເບິ່ງແຍງດູແລອາດຈະໃຫ້ຂໍ້ມູນພິໄນກຳກັບຕົວແທນຜູ້ອາໄສຢູ່ຂອງບຸກຄົນໃດໜຶ່ງຕາມກົດຫມາຍຂອງລັດ.

E. ສະຖານເບິ່ງແຍງດູແລບໍ່ໝົດພັນທະໜ້າທີ່ຂອງຕົນເອງທີ່ຈະຕ້ອງໃຫ້ຂໍ້ມູນນີ້ແກ່ບຸກຄົນ ເມື່ອລາວສາມາດຮັບຂໍ້ມູນດັ່ງກ່າວນັ້ນ. ຕ້ອງມີຂັ້ນຕອນຕິດຕາມຄືນ ເພື່ອໃຫ້ຂໍ້ມູນກັບບຸກຄົນໂດຍກົງໃນເວລາອັນເໝາະສົມ.

F. ພະນັກງານໃຫ້ການຊ່ວຍເຫຼືອຊີວິດພື້ນຖານແກ່ຜູ້ອາໄສຢູ່ທີ່ຕ້ອງການໃຫ້ມີການເບິ່ງແຍງດູແລສຸກເສີນດັ່ງກ່າວ ລວມທັງ CPR ນໍາ ກ່ອນທີ່ຈະມາຮອດພະນັກງານແພດສຸກເສີນ ແລະ ຂຶ້ນຢູ່ກັບຄໍາສັ່ງຂອງແພດທີ່ກ່ຽວຂ້ອງ ແລະ ພິໄນກໍາຂອງຜູ້ອາໄສຢູ່.

13. ສະຖານເບິ່ງແຍງດູແລຕ້ອງສະແດງຂໍ້ມູນລາຍລັກອັກສອນຢູ່ໃນສະຖານເບິ່ງແຍງດູແລ ແລະ ໃຫ້ຂໍ້ມູນປາກເປົ່າ ແລະ ເປັນລາຍລັກອັກສອນແກ່ຜູ້ອາໄສຢູ່ ແລະ ຜູ້ສະໝັກຂໍການຮັບເຂົ້າກ່ຽວກັບວິທີສະໝັກຂໍ ແລະ ນໍາໃຊ້ເງິນຊ່ວຍເຫຼືອ Medicare ແລະ Medicaid, ແລະ ວິທີຮັບເງິນຈ່າຍຄືນໃຫ້ສໍາລັບການຊໍາລະຜ່ານມາທີ່ໄດ້ຮັບການຄຸ້ມຄອງໂດຍເງິນຊ່ວຍເຫຼືອດັ່ງກ່າວ.

# ການແຈ້ງການປ່ຽນແປງ

1. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ກັບຜູ້ອາໄສຢູ່ທັນທີ; ປຶກສາກັບແພດຂອງຜູ້ອາໄສຢູ່; ແລະ ແຈ້ງໃຫ້ກັບຕົວແທນຜູ້ອາໄສຢູ່ຕາມສິດອໍານາດຂອງລາວ, ເມື່ອມີ—

A. ອຸປະຕິເຫດພົວພັນກັບຜູ້ອາໄສຢູ່ ເຊິ່ງເຮັດໃຫ້ເກີດການບາດເຈັບ ແລະ ມີຄວາມເປັນໄປໄດ້ທີ່ຈະຕ້ອງມີການຊ່ວຍເຫຼືອຂອງແພດ;

B. ການປ່ຽນແປງເກີດຂຶ້ນຫຼາຍຢູ່ໃນສະພາບທາງຮ່າງກາຍ, ຈິດໃຈ ຫຼື ຈິດຕະສາດຂອງຜູ້ອາໄສຢູ່ (ນັ້ນກໍ່ຄື ສຸຂະພາບຊຸດໂຊມ, ສະພາບທາງຈິດໃຈ ຫຼື ຈິດຕະສາດຊຸດໂຊມລົງ ເຊິ່ງອາດຈະມີຜົນເປັນໄພຕໍ່ຊີວິດ ຫຼື ມີອາການແຊກຊ້ອນທາງການປິ່ນປົວ);

C. ຄວາມຕ້ອງການຕ້ອງປ່ຽນແປງການປິ່ນປົວຫຼາຍ (ນັ້ນຄື ຄວາມຈໍາເປັນຕ້ອງຢຸດ ຫຼື ປ່ຽນແປງຮູບແບບການປິ່ນປົວທີ່ມີຢູ່ເນື່ອງຈາກຜົນທີ່ເກີດຂຶ້ນເປັນອັນຕະລາຍ ຫຼື ເພື່ອເລີ່ມການປິ່ນປົວຮູບແບບໃຫມ່); ຫຼື

D. ການຕັດສິນໃຈຍ້າຍ ຫຼື ໃຫ້ຜູ້ອາໄສຢູ່ອອກຈາກສະຖານເບິ່ງແຍງດູແລ.

2. ເມື່ອໃຫ້ການແຈ້ງເຕືອນພາຍໃຕ້ວັກທີ (1) ຂອງຂໍ້ນີ້, ສະຖານເບິ່ງແຍງດູແລຕ້ອງຮັບປະກັນວ່າ ມີຂໍ້ມູນທີ່ກ່ຽວຂ້ອງທັງໝົດໄວ້ໃຫ້ ແລະ ຈັດໃຫ້ຕາມຄໍາຂໍຂອງແພດ.

3. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ກັບຜູ້ອາໄສຢູ່ ແລະ ຕົວແທນຜູ້ອາໄສຢູ່ທັນທີ, ຖ້າມີ, ເມື່ອມີ—

A. ການປ່ຽນຫ້ອງ ຫຼື ການກໍານົດເພື່ອນຮ່ວມຫ້ອງໃຫ້

B. ການປ່ຽນແປງສິດຜູ້ອາໄສຢູ່ພາຍໃຕ້ລະບຽບ ຫຼື ກົດໝາຍຂອງລັດຖະບານກາງ ຫຼື ຂອງລັດ

C. ສະຖານເບິ່ງແຍງດູແລຕ້ອງບັນທຶກ ແລະ ອັບເດດທີ່ຢູ່ (ທາງໄປສະນີ ແລະ ອີເມວ) ແລະ ເບີໂທລະສັບຂອງຕົວແທນຜູ້ອາໄສຢູ່ເປັນໄລຍະ.

# ການຮັບເຂົ້າ

1. ການຮັບເຂົ້າສູ່ພາກສ່ວນສະເພາະລວມ (composite distinct part)[2]. ສະຖານເບິ່ງແຍງດູແລທີ່ເປັນພາກສ່ວນສະເພາະລວມຕ້ອງເປີດເຜີຍຢູ່ໃນຂໍ້ຕົກລົງການຮັບເຂົ້າຂອງຕົນເອງກ່ຽວກັບການກຳນົດຕົວຈິງ, ລວມທັງສະຖານທີ່ຕ່າງໆທີ່ປະກອບມີພາກສ່ວນສະເພາະລວມ, ແລະ ຕ້ອງກຳນົດນະໂຍບາຍທີ່ນຳໃຊ້ກັບການປ່ຽນຫ້ອງລະຫວ່າງສະຖານທີ່ຕ່າງໆຂອງມັນເອງ.

2. ສະຖານເບິ່ງແຍງດູແລຕ້ອງເອົາແຈ້ງການສິດ ແລະ ການບໍລິການໃຫ້ກັບຜູ້ອາໄສຢູ່ກ່ອນ ຫຼື ໃນເວລາຮັບເຂົ້າ ແລະ ໃນລະຫວ່າງການຢູ່ອາໄສຂອງຜູ້ອາໄສຢູ່.

   A. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ອາໄສຢູ່ທັງປາກເປົ່າ ແລະ ເປັນລາຍລັກອັກສອນເປັນພາສາທີ່ຜູ້ອາໄສຢູ່ເຂົ້າໃຈສິດຂອງລາວ ແລະ ຂໍ້ກຳນົດ ແລະ ກົດລະບຽບທັງໝົດທີ່ໃຊ້ຄຸ້ມຄອງຄວາມປະພຶດ ແລະ ຄວາມຮັບຜິດຊອບຂອງຜູ້ອາໄສຢູ່ໃນລະຫວ່າງການພັກຢູ່ໃນສະຖານເບິ່ງແຍງດູແລ.

   B. ສະຖານເບິ່ງແຍງດູແລຍັງຕ້ອງເອົາແຈ້ງການໃຫ້ກັບຜູ້ອາໄສຢູ່ວ່າດ້ວຍການແຈ້ງສິດ ແລະ ພັນທະໜ້າທີ່ຂອງ Medicaid ທີ່ລັດສ້າງຂຶ້ນມາ, ຖ້າມີ.

   C. ຕ້ອງຮັບຮອງການໄດ້ຮັບຂໍ້ມູນດັ່ງກ່າວ ແລະ ການປັບປຸງແກ້ໄຂໃດໜຶ່ງກັບມັນນັ້ນເປັນລາຍລັກອັກສອນ;

3. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ອາໄສຢູ່ແຕ່ລະຄົນທີ່ມີສິດໄດ້ຮັບ Medicaid ເປັນລາຍລັກອັກສອນໃນເວລາຮັບເຂົ້າສູ່ສະຖານເບິ່ງແຍງດູແລ ແລະ ເມື່ອຜູ້ອາໄສຢູ່ມີສິດໄດ້ຮັບ Medicaid—

   A. ເຄື່ອງໃຊ້ ແລະ ບໍລິການທີ່ລວມຢູ່ໃນການບໍລິການຂອງສະຖານເບິ່ງແຍງດູແລພາຍໃຕ້ແຜນປະກັນຂອງລັດ ແລະ ສຳລັບສິ່ງທີ່ຜູ້ອາໄສຢູ່ອາດຈະບໍ່ຖືກຮຽກເກັບຄ່າ;

   B. ບັນດາເຄື່ອງໃຊ້ ແລະ ບໍລິການອື່ນທີ່ສະຖານເບິ່ງແຍງດູແລສະເໜີໃຫ້ ແລະ ສຳລັບອັນທີ່ຜູ້ອາໄສຢູ່ອາດຈະຖືກເກັບຄ່າ, ແລະ ຈຳນວນຄ່າທີ່ເກັບສຳລັບການບໍລິການເຫຼົ່ານັ້ນ; ແລະ

---

[2] ພາກສ່ວນສະເພາະລວມ (composite distinct part) ຕ້ອງສາມາດຈຳແນກຄວາມແຕກຕ່າງໄດ້ຕົວຈິງຈາກສະຖາບັນທີ່ໃຫຍ່ກວ່າ ແລະ ແຍກອອກຈາກດ້ານການເງິນສຳລັບການລາຍງານຄ່າໃຊ້ຈ່າຍ.

C. ແຈ້ງໃຫ້ຜູ້ອາໄສຢູ່ທີ່ມີສິດໄດ້ຮັບ Medicaid ແຕ່ລະຄົນຮູ້ ເມື່ອໄດ້ມີການປ່ຽນແປງເຄື່ອງໃຊ້ ແລະ ການບໍລິການ.

4. ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ອາໄສຢູ່ແຕ່ລະຄົນກ່ອນ, ຫຼື ໃນເວລາຮັບເຂົ້າ, ແລະ ໃນລະຫວ່າງການພັກອາໄສຢູ່ເປັນໄລຍະກ່ຽວກັບການບໍລິການທີ່ມີໃຫ້ຢູ່ໃນສະຖານເບິ່ງແຍງດູແລ ແລະ ກ່ຽວກັບການເກັບຄ່າບໍລິການເຫຼົ່ານັ້ນ, ລວມທັງການເກັບຄ່າບໍລິການທີ່ບໍ່ໄດ້ຮັບການຄຸ້ມຄອງພາຍໃຕ້ Medicare/ Medicaid ຫຼື ຕາມອັດຕາເບ້ຍລ້ຽງຂອງສະຖານເບິ່ງແຍງດູແລ.

   A. ໃນບ່ອນທີ່ໄດ້ມີການປ່ຽນແປງການຄຸ້ມຄອງຕໍ່ເຄື່ອງໃຊ້ ແລະ ການບໍລິການທີ່ໄດ້ຮັບການຄຸ້ມຄອງໂດຍ Medicare ແລະ/ຫຼື ໂດຍແຜນປະກັນຂອງລັດຂອງ Medicaid, ສະຖານເບິ່ງແຍງດູແລຕ້ອງແຈ້ງການໃຫ້ກັບຜູ້ອາໄສຢູ່ຮູ້ເລື່ອງການປ່ຽນແປງທັນທີ່ເປັນໄປໄດ້ຕາມສົມຄວນ.

   B. ໃນບ່ອນທີ່ໄດ້ມີການປ່ຽນແປງການເກັບຄ່າເຄື່ອງໃຊ້ ແລະ ບໍລິການອື່ນໆ ທີ່ສະຖານເບິ່ງແຍງດູແລສະເໜີໃຫ້, ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ອາໄສຢູ່ຮູ້ເປັນລາຍລັກອັກສອນຢ່າງໜ້ອຍ 60 ວັນກ່ອນການຈັດຕັ້ງປະຕິບັດການປ່ຽນແປງ.

   C. ຖ້າຜູ້ອາໄສຢູ່ເສຍຊີວິດ ຫຼື ໄດ້ເຂົ້ານອນໂຮງໝໍ ຫຼື ຖືກຍ້າຍ ແລະ ບໍ່ກັບຄືນມາສູ່ສະຖານເບິ່ງແຍງດູແລ, ສະຖານເບິ່ງແຍງດູແລຕ້ອງສົ່ງເງິນຄືນໃຫ້ກັບຜູ້ອາໄສຢູ່, ຕົວແທນຜູ້ອາໄສຢູ່, ຫຼື ອະສັງຫາລິມມະຊັບຕາມທີ່ສາມາດເຮັດໄດ້ ເຊິ່ງເປັນເງິນຝາກໄວ້ ຫຼື ການເກັບຄ່າທີ່ຈ່າຍໄປແລ້ວ, ໜ້ອຍກວ່າອັດຕາເບ້ຍລ້ຽງຂອງສະຖານເບິ່ງແຍງດູແລ, ເປັນຈຳນວນວັນທີ່ຜູ້ອາໄສຢູ່ໄດ້ຢູ່ຕົວຈິງ ຫຼື ໄດ້ຈອງໄວ້ ຫຼື ໄດ້ຢູ່ໃນຕຽງໃນສະຖານເບິ່ງແຍງດູແລ, ໂດຍບໍ່ຄຳນຶງເຖິງເງື່ອນໄຂກຳນົດການພັກອາໄສຢູ່ຕ່ຳສຸດ ຫຼື ແຈ້ງການອະນຸຍາດໃຫ້ອອກ.

   D. ສະຖານເບິ່ງແຍງດູແລຕ້ອງສົ່ງເງິນຄືນໃຫ້ກັບຜູ້ອາໄສຢູ່ ຫຼື ຕົວແທນຜູ້ອາໄສຢູ່ຈຳນວນໃດໜຶ່ງ ຫຼື ທັງໝົດທີ່ຍັງຄ້າງກັບຜູ້ອາໄສຢູ່ພາຍໃນ 30 ວັນນັບຈາກວັນທີຜູ້ອາໄສຢູ່ຖືກອະນຸຍາດໃຫ້ອອກໄປຈາກສະຖານເບິ່ງແຍງດູແລ.

   E. ຂໍ້ກຳນົດຂອງສັນຍາການຮັບເຂົ້າໂດຍ ຫຼື ໃນນາມຂອງບຸກຄົນທີ່ຂໍການຮັບເຂົ້າສູ່ສະຖານເບິ່ງແຍງດູແລຕ້ອງບໍ່ຂັດກັບເງື່ອນໄຂກຳນົດຂອງກົດລະບຽບເຫຼົ່ານີ້.

# ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ

ຜູ້ອາໄສຢູ່ມີສິດຕໍ່ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບຂອງບັນທຶກສ່ວນຕົວ ແລະ ທາງການແພດຂອງລາວ:

1. ຄວາມເປັນສ່ວນຕົວປະກອບມີເລື່ອງທີ່ພັກອາໄສ, ການປິ່ນປົວທາງການແພດ, ການສື່ສານເປັນລາຍລັກອັກສອນ ແລະ ທາງໂທລະສັບ, ການເບິ່ງແຍງດູແລສ່ວນຕົວ, ການຢ້ຽມຢາມຕິດຕາມ, ແລະ ການປະຊຸມຂອງຄອບຄົວ ແລະ ກຸ່ມຜູ້ອາໄສຢູ່ອື່ນໆ, ແຕ່ອັນນີ້ບໍ່ຕ້ອງການໃຫ້ສະຖານເບິ່ງແຍງດູແລຈັດຫ້ອງສ່ວນຕົວໃຫ້ກັບຜູ້ອາໄສຢູ່ແຕ່ລະຄົນ.

2. ສະຖານເບິ່ງແຍງດູແລຕ້ອງເຄົາລົບສິດຂອງຜູ້ຢູ່ອາໄສເລື່ອງຄວາມເປັນສ່ວນຕົວ, ລວມທັງສິດຕໍ່ຄວາມເປັນສ່ວນຕົວໃນການສື່ສານປາກເປົ່າ (ນັ້ນຄືການເວົ້າ), ເປັນລາຍລັກອັກສອນ, ແລະ ທາງອີເລັກໂທຣນິກ, ລວມທັງສິດສົ່ງ ແລະ ຮັບເມວ ແລະ ຈົດໝາຍອື່ນໆທີ່ບໍ່ໄດ້ເປີດ, ຫໍ່ຂອງ ແລະ ສິ່ງຂອງອື່ນໆທີ່ສົ່ງເຖິງສະຖານເບິ່ງແຍງດູແລເພື່ອເອົາໃຫ້ຜູ້ອາໄສຢູ່, ລວມທັງສິ່ງຂອງຕ່າງໆທີ່ໄດ້ສົ່ງດ້ວຍວິທີອື່ນນອກເຫນືອຈາກບໍລິການທາງໄປສະນີ.

3. ຜູ້ອາໄສຢູ່ມີສິດໃຫ້ຮັກສາບັນທຶກສ່ວນຕົວ ແລະ ທາງການແພດໄວ້ໃຫ້ປອດໄພ ແລະ ເປັນຄວາມລັບ.

   A. ຜູ້ອາໄສຢູ່ມີສິດປະຕິເສດທີ່ຈະເປີດເຜີຍບັນທຶກສ່ວນຕົວ ແລະ ທາງການແພດໄດ້ ຍົກເວັ້ນແຕ່ທີ່ໄດ້ກຳນົດໃຫ້ພາຍໃຕ້ກົດໝາຍຂອງລັດຖະບານກາງ ຫຼື ຂອງລັດ.

   B. ສະຖານເບິ່ງແຍງດູແລຕ້ອງອະນຸຍາດໃຫ້ຜູ້ຕາງໜ້າຂອງຫ້ອງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວຂອງລັດກວດກາເບິ່ງບັນທຶກທາງການແພດ, ສັງຄົມ, ແລະ ບໍລິຫານຂອງຜູ້ອາໄສຢູ່ຕາມກົດໝາຍຂອງລັດ.

4. *ພະນັກງານສະຖານເບິ່ງແຍງດູແລຈະເຄົາລົບຄວາມເປັນສ່ວນຕົວໃນຫ້ອງຂອງຜູ້ອາໄສຢູ່ ໂດຍການເຄາະປະຕູ ແລະ ຂໍຄຳຍິນຍອມຂອງພວກເຂົາກ່ອນເຂົ້າໄປ, ຍົກເວັ້ນໃນກໍລະນີສຸກເສີນ ຫຼື ບ່ອນທີ່ບໍ່ສາມາດແນະນຳໄດ້ຢ່າງຈະແຈ້ງ.*

5. *ຜູ້ອາໄສຢູ່ຈະໄດ້ຮັບແຈ້ງ ເມື່ອມີບຸກຄົນນອກສະຖານເບິ່ງແຍງດູແລໄດ້ຂໍເອົາບັນທຶກສ່ວນຕົວ ແລະ ອາດຈະເລືອກເອົາຄົນໄປນຳເຂົາເຈົ້າ ເມື່ອບັນທຶກ ຫຼື ຂໍ້ມູນຕ້ອງໄດ້ມີການສຳພາດສ່ວນຕົວ. ສຳເນົາບັນທຶກ ແລະ ຂໍ້ມູນເປັນລາຍລັກອັກສອນຈາກບັນທຶກແມ່ນຈະກຽມໃຫ້ມີໄວ້ຕາມຂໍ້ຍ່ອຍນີ້ ແລະ ກົດໝາຍບັນທຶກສຸຂະພາບຂອງລັດມິນີໂຊຕາ (Minnesota Health Records Act). ສິດນີ້ບໍ່ນຳໃຊ້ກັບການສືບສວນ ແລະ ການກວດກາຄຳຮ້ອງຮຽນໂດຍພະແນກສາທາລະນະສຸກ, ໃນບ່ອນທີ່ສັນຍາການຊຳລະຂອງພາກສ່ວນທີສາມຮຽກຮ້ອງ, ຫຼື ບ່ອນທີ່ກົດໝາຍກຳນົດໃຫ້.*

# ສະພາບແວດລ້ອມທີ່ປອດໄພ

ຜູ້ອາໄສຢູ່ມີສິດໄດ້ຮັບສະພາບແວດລ້ອມທີ່ປອດໄພ, ສະອາດ, ສະດວກສະບາຍ ແລະ ຄືກັບຢູ່ບ້ານ, ລວມທັງບໍ່ຈຳກັດແຕ່ການໄດ້ຮັບການປິ່ນປົວ ແລະ ການຊ່ວຍເຫຼືອການດຳລົງຊີວິດປະຈຳວັນຢ່າງປອດໄພ. ສະຖານເບິ່ງແຍງດູແລຕ້ອງໃຫ້—

1. ສະພາບແວດລ້ອມທີ່ປອດໄພ, ສະອາດ, ສະດວກສະບາຍ ແລະ ຄືກັບຢູ່ບ້ານເຮັດໃຫ້ຜູ້ອາໄສຢູ່ນຳໃຊ້ເຄື່ອງຂອງສ່ວນຕົວຂອງລາວໄດ້ໃນລະດັບທີ່ເປັນໄປໄດ້.
   A. ອັນນີ້ລວມມີການຮັບປະກັນໃຫ້ຜູ້ອາໄສຢູ່ສາມາດຮັບເອົາການເບິ່ງແຍງດູແລ ແລະ ການບໍລິການໄດ້ຢ່າງປອດໄພ ແລະ ດັ່ງນັ້ນ ການຈັດວາງແຜນຜັງຂອງສະຖານເບິ່ງແຍງດູແລເຮັດໃຫ້ມີຄວາມເປັນເອກະລາດແກ່ຜູ້ອາໄສຢູ່ໄດ້ສູງສຸດ ແລະ ບໍ່ມີຄວາມສ່ຽງທາງດ້ານຄວາມປອດໄພ.
   B. ສະຖານເບິ່ງແຍງດູແລຈະເອົາໃຈໃສ່ໃຫ້ດີ ເພື່ອປົກປ້ອງຊັບສິນຂອງຜູ້ອາໄສຢູ່ບໍ່ໃຫ້ເສຍຫາຍ ຫຼື ຖືກລັກໄປ.
   C. *ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນຕ້ອງໃຫ້ມີຕູ້ເກັບມ້ຽນເຄື່ອງຂອງທີ່ມີລັອກໃຫຍ່ ຫຼື ໃຫ້ບ່ອນເກັບມ້ຽນເຄື່ອງຂອງທີ່ມີກະແຈແຕ່ລະໜ່ວຍ ເຊິ່ງຜູ້ອາໄສຢູ່ອາດຈະເກັບຮັກສາເຄື່ອງຂອງມີຄ່າຂອງເຂົາເຈົ້າໄວ້ເພື່ອໃຫ້ປອດໄພ. ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນອາດຈະໃຫ້ຄ່າຊົດເຊີຍສຳລັບການປ່ຽນແທນສິ່ງຂອງທີ່ເສຍໄປ ຫຼື ຖືກລັກ, ແຕ່ບໍ່ຈຳເປັນຕ້ອງເຮັດ.*
2. ການບໍລິການເບິ່ງແຍງດູແລບ້ານ ແລະ ການບຳລຸງຮັກສາທີ່ຈຳເປັນ ເພື່ອຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ, ແລະ ຄວາມສະດວກສະບາຍຢູ່ພາຍໃນ;
3. ອະນາໄມຕຽງນອນ ແລະ ຜ້າປູບ່ອນນອນໃຫ້ຢູ່ໃນສະພາບທີ່ດີ;
4. ຕູ້ໃສ່ເຄື່ອງສ່ວນຕົວຢູ່ໃນຫ້ອງຜູ້ອາໄສຢູ່ແຕ່ລະຫ້ອງ;
5. ແສງໄຟພຽງພໍ ແລະ ແຈ້ງດີຢູ່ໃນທຸກພື້ນທີ່;
6. ອຸນຫະພູມຢູ່ໄດ້ສະບາຍ ແລະ ປອດໄພ. ສະຖານເບິ່ງແຍງດູແລທີ່ໄດ້ຮັບການຢັ້ງຢືນໃນເບື້ອງຕົ້ນວັນທີ 1 ຕຸລາ 1990 ຕ້ອງຮັກສາອຸນຫະພູມໃຫ້ຢູ່ທີ່ 71 ຫາ 81° F; ແລະ
7. ການຮັກສາລະດັບສຽງໃຫ້ຢູ່ໃນລະດັບທີ່ຟັງໄດ້ສະບາຍ.

# ການຮ້ອງທຸກ

1. ຜູ້ອາໄສຢູ່ມີສິດຮ້ອງທຸກກັບສະຖານເບິ່ງແຍງດູແລ ຫຼື ໜ່ວຍງານ ຫຼື ອົງການອື່ນ ທີ່ພິຈາລະນາສືບສວນຄໍາຮ້ອງທຸກໂດຍບໍ່ມີການຈໍາແນກຄວາມແຕກຕ່າງ ຫຼື ແກ້ແຄ້ນ ແລະ ບໍ່ຕ້ອງມີຄວາມຢ້ານຕໍ່ການຈໍາແນກຄວາມແຕກຕ່າງ ຫຼື ການແກ້ແຄ້ນ. ການຮ້ອງທຸກດັ່ງກ່າວປະກອບດ້ວຍບັນດາສິ່ງທີ່ກ່ຽວກັບການເບິ່ງແຍງດູແລ ແລະ ການປິ່ນປົວ ເຊິ່ງໄດ້ຈັດໃຫ້ ພ້ອມທັງສິ່ງທີ່ບໍ່ໄດ້ຈັດໃຫ້, ພຶດຕິກໍາຂອງພະນັກງານ ແລະ ຂອງຜູ້ອາໄສຢູ່ຄົນອື່ນ; ແລະ ບັນຫາຂ້ອງໃຈອື່ນໆກ່ຽວກັບການພັກຢູ່ອາໄສໃນສະຖານເບິ່ງແຍງດູແລເພື່ອຮັບການເບິ່ງແຍງດູແລໄລຍະຍາວ (LTC) ຂອງພວກເຂົາ.
2. ຜູ້ອາໄສຢູ່ມີສິດ ແລະ ສະຖານເບິ່ງແຍງດູແລຕ້ອງໃຊ້ຄວາມພະຍາມທັນທີ ເພື່ອແກ້ໄຂຄໍາຮ້ອງທຸກທີ່ຜູ້ອາໄສຢູ່ອາດຈະມີຕາມວັກນີ້.
3. ສະຖານເບິ່ງແຍງດູແລຕ້ອງເຮັດໃຫ້ມີຂໍ້ມູນກ່ຽວກັບວິທີການຍື່ນຄໍາຮ້ອງທຸກ ຫຼື ຄໍາຮ້ອງຮຽນແກ່ຜູ້ອາໄສຢູ່.
4. ສະຖານເບິ່ງແຍງດູແລຕ້ອງກໍານົດນະໂຍບາຍການຮ້ອງທຸກ ເພື່ອຮັບປະກັນໃຫ້ມີການແກ້ໄຂຄໍາຮ້ອງທຸກທັງໝົດທັນທີກ່ຽວກັບສິດຂອງຜູ້ອາໄສຢູ່ທີ່ມີຢູ່ໃນວັກນີ້. ຜູ້ໃຫ້ບໍລິການຕ້ອງເອົາສໍາເນົານະໂຍບາຍການຮ້ອງທຸກໃຫ້ແກ່ຜູ້ອາໄສຢູ່ຕາມການຮ້ອງຂໍ. ນະໂຍບາຍຄໍາຮ້ອງທຸກຕ້ອງມີ:
   A. ການແຈ້ງໃຫ້ກັບຜູ້ອາໄສຢູ່ເປັນລາຍບຸກຄົນ ຫຼື ຜ່ານການຕິດປະກາດຢູ່ໃນບ່ອນທີ່ເຫັນໄດ້ງ່າຍໃນທົ່ວສະຖານເບິ່ງແຍງດູແລກ່ຽວກັບສິດຍື່ນຄໍາຮ້ອງທຸກປາກເປົ່າ (ໝາຍຄວາມວ່າການເວົ້າລາຍງານ) ຫຼື ເປັນລາຍລັກອັກສອນ; ສິດຍື່ນຄໍາຮ້ອງທຸກປິດລັບ; ຂໍ້ມູນຕິດຕໍ່ຂອງເຈົ້າໜ້າທີ່ຮ້ອງທຸກວ່າສາມາດຍື່ນຄໍາຮ້ອງທຸກກັບໃຜໄດ້, ນັ້ນກໍ່ຄື ຊື່ຂອງລາວ, ທີ່ຢູ່ບ່ອນເຮັດວຽກ (ທາງໄປສະນີ ແລະ ອີເມວ) ແລະ ເບີໂທລະສັບບ່ອນເຮັດວຽກ; ກອບເວລາທີ່ຄາດໄວ້ວ່າຈະທໍາການທົບທວນເບິ່ງຄໍາຮ້ອງທຸກໃຫ້ສໍາເລັດ; ສິດໄດ້ຮັບຄໍາຕັດສິນເປັນລາຍລັກອັກສອນກ່ຽວກັບການຮ້ອງທຸກຂອງລາວ; ແລະ ຂໍ້ມູນຕິດຕໍ່ຂອງໜ່ວຍງານເອກະລາດຕ່າງໆທີ່ອາດຈະຍື່ນຄໍາຮ້ອງທຸກກັບໃຜໄດ້ແດ່, ນັ້ນກໍ່ຄື ອົງການຂອງລັດທີ່ຖືກຕ້ອງ, ອົງການປັບປຸງຄຸນນະພາບ, ອົງການສໍາຫຼວດຂອງລັດ, ໂຄງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວຂອງລັດ, ຫຼື ລະບົບປົກປ້ອງ ແລະ ສະໜັບສະໜູນ (ເບິ່ງໜ້າ 29-30);
   B. ການມອບໝາຍເຈົ້າໜ້າທີ່ຮ້ອງທຸກ ຜູ້ທີ່ຮັບຜິດຊອບຕິດຕາມກວດກາຂະບວນການຮ້ອງທຸກ, ຮັບ ແລະ ຕິດຕາມຄໍາຮ້ອງທຸກຜ່ານໄປຫາຂໍ້ສະຫຼຸບຂອງເຂົາເຈົ້າ; ການນໍາພາການສືບສວນທີ່ຈໍາເປັນໂດຍສະຖານເບິ່ງແຍງດູແລ; ການຮັກສາຄວາມລັບຂອງຂໍ້ມູນທັງໝົດກ່ຽວຂ້ອງກັບການຮ້ອງທຸກ, ຕົວຢ່າງ ຂໍ້ມູນປະຈໍາຕົວຂອງຜູ້ອາໄສຢູ່ສໍາລັບບັນດາຄໍາຮ້ອງທຸກທີ່ໄດ້ຍື່ນແບບປິດລັບ; ການອອກ

ຄຳຕັດສິນຄຳຮ້ອງທຸກເປັນລາຍລັກອັກສອນໃຫ້ແກ່ຜູ້ອາໄສຢູ່; ແລະ ການປະສານງານກັບອົງການຂອງລັດ ແລະ ລັດຖະບານກາງຕາມຄວາມຈຳເປັນກ່ຽວກັບການກ່າວຫາສະເພາະ;

C. ການດຳເນີນມາດຕະການຕາມຄວາມຈຳເປັນທັນທີ ເພື່ອປ້ອງກັນການລະເມີດສິດຜູ້ອາໄສຢູ່ທີ່ອາດຈະມີໃນຕໍ່ໜ້າ ໃນຂະນະທີ່ກຳລັງສືບສວນການລະເມີດທີ່ກ່າວຫາຢູ່;

D. ການລາຍງານການລະເມີດທີ່ກ່າວຫາທັງໝົດທັນທີທີ່ກ່ຽວຂ້ອງກັບການລະເລີຍ, ການລ່ວງລະເມີດ, ລວມທັງການບາດເຈັບຈາກບ່ອນທີ່ບໍ່ຮູ້ຈັກ, ແລະ/ຫຼື ການສໍ້ໂກງຊັບສິນຂອງຜູ້ອາໄສຢູ່ ໂດຍຜູ້ໃດຜູ້ໜຶ່ງທີ່ຈັດບໍລິການໃຫ້ໃນນາມຂອງຜູ້ໃຫ້ບໍລິການ ໃຫ້ແກ່ຜູ້ຄຸ້ມຄອງຜູ້ໃຫ້ບໍລິການ;

E. ການຮັບປະກັນໃຫ້ຄຳຕັດສິນຄຳຮ້ອງທຸກເປັນລາຍລັກອັກສອນທຸກອັນມີວັນທີ່ໄດ້ຮັບຄຳຮ້ອງທຸກ, ສັງລວມຄຳໃຫ້ການຄຳຮ້ອງທຸກຂອງຜູ້ອາໄສຢູ່, ສັງລວມສິ່ງທີ່ພົບເຫັນຖືກຕ້ອງ ຫຼື ຂໍ້ສະຫຼຸບກ່ຽວກັບບັນຫາຂໍ້ຂ້ອງໃຈຂອງຜູ້ອາໄສຢູ່, ຄຳໃຫ້ການວ່າ ຄຳຮ້ອງທຸກໄດ້ຮັບການຢືນຢັນ ຫຼື ບໍ່ຢືນຢັນ, ມາດຕະການແກ້ໄຂໃດໜຶ່ງທີ່ໄດ້ເຮັດ ຫຼື ຈະໄດ້ເຮັດໂດຍທາງສະຖານເບິ່ງແຍງດູແລຈາກຜົນຂອງການຮ້ອງທຸກ, ແລະ ວັນທີອອກຄຳຕັດສິນເປັນລາຍລັກອັກສອນໃຫ້;

F. ການນຳໃຊ້ມາດຕະການແກ້ໄຂໃຫ້ຖືກຕ້ອງທີ່ເໝາະສົມຕາມກົດໝາຍຂອງລັດ ຖ້າການລະເມີດສິດຂອງຜູ້ອາໄສຢູ່ຕາມທີ່ກ່າວຫາໄດ້ຮັບການຢັ້ງຢືນໂດຍສະຖານເບິ່ງແຍງດູແລ ຫຼື ຖ້າພາກສ່ວນຂ້າງນອກມີອຳນາດເຊັ່ນ: ອົງການສຳຫຼວດຂອງລັດ, ອົງການປັບປຸງຄຸນນະພາບ, ຫຼື ອົງການບັງຄັບໃຊ້ກົດໝາຍທ້ອງຖິ່ນຢັ້ງຢືນການລະເມີດສິດໃດໜຶ່ງຂອງຜູ້ອາໄສຢູ່ເຫຼົ່ານີ້ຢູ່ພາຍໃນຂົງເຂດຄວາມຮັບຜິດຊອບຂອງຕົນເອງ; ແລະ

G. ການຮັກສາຫຼັກຖານສະແດງໃຫ້ເຫັນຜົນຂອງການຮ້ອງທຸກທັງໝົດເປັນເວລາບໍ່ໜ້ອຍກວ່າ 3 ປີນັບຈາກມື້ອອກຄຳຕັດສິນຄຳຮ້ອງທຸກ.

# ຕິດຕໍ່ກັບພາກສ່ວນທາງນອກ

ສະຖານເບິ່ງແຍງດູແລຕ້ອງບໍ່ຫ້າມ ຫຼື ຍັບຍັ້ງຜູ້ອາໄສຢູ່ບໍ່ໃຫ້ສື່ສານກັບເຈົ້າໜ້າທີ່ຂອງລັດຖະບານກາງ, ຂອງລັດ, ຫຼື ຂອງທ້ອງຖິ່ນດ້ວຍວິທີໃດໜຶ່ງ, ລວມທັງບໍ່ຈຳກັດແຕ່ຜູ້ສຳຫຼວດຂອງລັດຖະບານກາງ ຫຼື ຂອງລັດ, ພະນັກງານພະແນກສາທາລະນະສຸກຂອງລັດຖະບານກາງ ຫຼື ຂອງລັດ, ລວມທັງຜູ້ຕາງໜ້າຂອງຫ້ອງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວຂອງລັດ, ແລະ ຜູ້ຕາງໜ້າຂອງອົງການຮັບຜິດຊອບລະບົບການປົກປ້ອງ ແລະ ການສະໜັບສະໜູນບຸກຄົນທີ່ມີຄວາມຜິດປົກກະຕິທາງຈິດກ່ຽວກັບເລື່ອງໃດໜຶ່ງ, ບໍ່ວ່າຈະໃນເລື່ອງການໄກ່ເກ່ຍ ຫຼື ປະເພດການດຳເນີນການອື່ນທາງຕຸລາການ ຫຼື ການຄຸ້ມຄອງໃດໜຶ່ງຫຼືບໍ່ກໍ່ຕາມ.

# ອິດສະລະພາບຈາກການຖືກລ່ວງລະເມີດ, ການລະເລີຍ, ແລະ ການສວຍໃຊ້ຫາປະໂຫຍດ

1. ຜູ້ອາໄສຢູ່ມີສິດໄດ້ຮັບອິດສະລະພາບຈາກການລ່ວງລະເມີດ, ການລະເລີຍ, ການຫຼອກລວງຊັບສິນຂອງຜູ້ອາໄສຢູ່, ແລະ ການສວຍໃຊ້ຫາຜົນປະໂຫຍດຕາມທີ່ໄດ້ກຳນົດຢູ່ໃນຂໍ້ຍ່ອຍນີ້. ອັນນີ້ລວມມີບໍ່ຈຳກັດແຕ່ອິດສະລະພາບຈາກການລົງໂທດທາງດ້ານຮ່າງກາຍ, ການແຍກຢູ່ໂດດດ່ຽວແບບບັງຄັບ ແລະ ການຄວບຄຸມທາງດ້ານຮ່າງກາຍ ຫຼື ເຄມີທີ່ບໍ່ຕ້ອງການ ເພື່ອປິ່ນປົວອາການທາງການແພດຂອງຜູ້ອາໄສຢູ່.
2. ສະຖານເບິ່ງແຍງດູແລຕ້ອງ:
   A. ບໍ່ໃຊ້ການລ່ວງລະເມີດທາງດ້ານວາຈາ, ຈິດໃຈ, ເພດ, ຫຼື ຮ່າງກາຍ, ການລົງໂທດທາງດ້ານຮ່າງກາຍ, ຫຼື ການແຍກຢູ່ໂດດດ່ຽວແບບບັງຄັບ;
   B. ຮັບປະກັນວ່າ ຜູ້ອາໄສຢູ່ມີອິດສະລະພາບຈາກການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ ຫຼື ໃຫ້ໄດ້ຮັບສານເຄມີທີ່ບັງຄັບໃຊ້ ເພື່ອຈຸດປະສົງຂອງການປະຕິບັດວິໄນ ຫຼື ຄວາມສະດວກສະບາຍ, ແລະ ທີ່ບໍ່ຕ້ອງການ ເພື່ອປິ່ນປົວອາການທາງການແພດຂອງຜູ້ອາໄສຢູ່. ເມື່ອໄດ້ມີການຊີ້ບອກວ່າມີການໃຊ້ການກັກຂັງໜ່ວງໜ່ຽວ, ສະຖານເບິ່ງແຍງດູແລຕ້ອງໃຊ້ທາງເລືອກທີ່ຈຳກັດໜ້ອຍທີ່ສຸດເປັນເວລາໜ້ອຍທີ່ສຸດ ແລະ ບັນທຶກການປະເມີນຄືນໃໝ່ທີ່ພວມດຳເນີນຢູ່ໃນດ້ານຄວາມຈຳເປັນສຳລັບການກັກຂັງໜ່ວງໜ່ຽວ.
3. *ຜູ້ອາໄສຢູ່ຕ້ອງມີອິດສະລະພາບຈາກການທາລຸນຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍປົກປ້ອງຜູ້ໃຫຍ່ທີ່ອ່ອນແອຂອງລັດມິນິໂຊຕາ (Minnesota Vulnerable Adults Protection Act). "ການທາລຸນ" ໝາຍເຖິງການປະພຶດຕາມທີ່ໄດ້ອະທິບາຍໄວ້ໃນຂໍ້ທີ 626.5572, ຂໍ້ຍ່ອຍ 15, ຫຼື ການລົງໂທດໂດຍເຈດຕະນາ ຫຼື ບໍ່ມີການປິ່ນປົວການບາດເຈັບ ຫຼື ຄວາມເຈັບປວດຮ່າງກາຍ, ຫຼື ໄລຍະການປະພຶດຕໍ່ເນື່ອງໃດໜຶ່ງທີ່ຕັ້ງໃຈເຮັດໃຫ້ເກີດຄວາມຊຶມເສົ້າທາງດ້ານຮ່າງກາຍ ຫຼື ຈິດໃຈ.*

# ການຈຳກັດ

1. *ຜູ້ອາໄສຢູ່ສະຖານເບິ່ງແຍງດູແລພະຍາບານທີ່ມີຄວາມສາມາດ, ຄົນໃນຄອບຄົວຂອງຜູ້ອາໄສຢູ່ ຜູ້ທີ່ບໍ່ມີຄວາມອາດສາມາດ, ແລະ ຜູ້ປົກປ້ອງ, ຜູ້ປົກຄອງ, ແລະ ຕົວແທນເບິ່ງແຍງດູແລສຸຂະພາບຖືກຕ້ອງຕາມກົດໝາຍຕາມທີ່ໄດ້ກຳນົດພາຍໃຕ້ຂໍ້ທີ 145C.01 ມີສິດຂໍ ແລະ ຍິນຍອມຕໍ່ການໃຊ້ການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ ເພື່ອປິ່ນປົວອາການທາງການແພດຂອງຜູ້ອາໄສຢູ່.*

2. *ເມື່ອໄດ້ຮັບໃບສະເໜີຂໍການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ, ສະຖານເບິ່ງແຍງດູແລພະຍາບານຈະແຈ້ງໃຫ້ຜູ້ອາໄສຢູ່, ຄົນໃນຄອບຄົວ, ຫຼື ຕົວແທນທາງເລືອກຕາມກົດໝາຍ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບການໃຊ້ການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ. ສະຖານເບິ່ງແຍງດູແລພະຍາບານຈະໃຫ້ການກັກຂັງໜ່ວງໜ່ຽວແກ່ຜູ້ອາໄສຢູ່ພຽງແຕ່ຕາມທີ່ໄດ້ຮັບໃບຍິນຍອມທີ່ມີລາຍເຊັນໃຫ້ສິດນຳໃຊ້ການກັກຂັງໜ່ວງໜ່ຽວ ແລະ ໃບສັ່ງເປັນລາຍລັກອັກສອນຈາກແພດເຂົ້າຮ່ວມ ທີ່ມີຄຳໃຫ້ການ ແລະ ການກຳນົດກ່ຽວກັບອາການທາງການແພດ ແລະ ລະບຸສະພາບການຕ່າງໆພາຍໃຕ້ສິ່ງທີ່ວ່າຈະນຳໃຊ້ການກັກຂັງໜ່ວງໜ່ຽວແບບໃດ.*

3. *ສະຖານເບິ່ງແຍງດູແລພະຍາບານໃຫ້ການກັກຂັງໜ່ວງໜ່ຽວພາຍໃຕ້ວັກທີ 2 ຕ້ອງ:*

   A. *ບັນທຶກໄວ້ວ່າ ຂັ້ນຕອນດຳເນີນການທີ່ກຳນົດໄວ້ຢູ່ໃນວັກນັ້ນໄດ້ຮັບການປະຕິບັດແລ້ວ;*

   B. *ຕິດຕາມການໃຊ້ການກັກຂັງໜ່ວງໜ່ຽວໂດຍຜູ້ອາໄສຢູ່; ແລະ*

   C. *ປະເມີນຄວາມຕ້ອງການຂອງຜູ້ອາໄສຢູ່ຄືນໃໝ່ສຳລັບການກັກຂັງໜ່ວງໜ່ຽວເປັນໄລຍະ ໂດຍການປຶກສາຫາລືກັບຜູ້ອາໄສຢູ່, ຄອບຄົວ, ແລະ ແພດເຂົ້າຮ່ວມ.*

4. *ສະຖານເບິ່ງແຍງດູແລພະຍາບານຈະບໍ່ຖືກປັບໄໝ, ມີການລົງໂທດການເງິນທາງແພ່ງ, ຫຼື ການແກ້ໄຂການບັງຄັບໃຊ້ການສຳຫຼວດຂອງລັດອື່ນ ຫຼື ຂອງລັດຖະບານກາງທັງໝົດ ເນື່ອງມາຈາກຜົນຂອງການອະນຸຍາດໃຫ້ນຳໃຊ້ການກັກຂັງໜ່ວງໜ່ຽວທາງຮ່າງກາຍຕາມທີ່ອະນຸຍາດໃຫ້ຢູ່ໃນຂໍ້ຍ່ອຍນີ້. ບໍ່ມີອັນໃດຢູ່ໃນຂໍ້ຍ່ອຍນີ້ຈະຂັດຂວາງຜູ້ກວດການໃນການນຳໃຊ້ມາດຕະການ ເພື່ອປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງຜູ້ອາໄສຢູ່ ຖ້າ:*

   A. *ການໃຊ້ການກັກຂັງໜ່ວງໜ່ຽວເຮັດໃຫ້ເກີດອັນຕະລາຍຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ອາໄສຢູ່; ແລະ*

   B. *ສະຖານເບິ່ງແຍງດູແລພະຍາບານຫຼົ້ມເຫຼວທີ່ຈະນຳຊ້ມາດຕະການທີ່ສົມເຫດສົມຜົນ ເພື່ອປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງຜູ້ອາໄສຢູ່.*

5. *ສຳລັບຈຸດປະສົງຂອງຂໍ້ຍ່ອຍນີ້, "ອາການທາງການແພດ" ປະກອບມີ:*

   A. *ບັນຫາຂ້ອງໃຈສຳລັບຄວາມປອດໄພທາງດ້ານຮ່າງກາຍຂອງຜູ້ອາໄສຢູ່; ແລະ*

   B. *ຄວາມຕ້ອງການທາງດ້ານຮ່າງກາຍ ຫຼື ຈິດໃຈທີ່ຜູ້ອາໄສຢູ່ສະແດງອອກມາໂດຍຜູ້ອາໄສຢູ່. ຄວາມຢ້ານຕົກຈາກບ່ອນສູງຂອງຜູ້ອາໄສຢູ່ອາດຈະເປັນພື້ນຖານຂອງອາການທາງການແພດ.*

   C. *ຄຳສັ່ງເປັນລາຍລັກອັກສອນຈາກແພດເຂົ້າຮ່ວມ ທີ່ມີຄຳໃຫ້ການ ແລະ ການກຳນົດກ່ຽວກັບອາການທາງການແພດມີຫຼັກຖານຄວາມທາງການແພດພຽງພໍຂອງການກັກຂັງໜ່ວງໜ່ຽວທາງຮ່າງກາຍ.*

6. *ເມື່ອທຳການກຳນົດການປະຕິບັດມາດຕະຖານຂອງລັດ ແລະ ຂອງລັດຖະບານກາງຂອງສະຖານເບິ່ງແຍງດູແລພະຍາບານສຳລັບການໃຊ້ການກັກຂັງໜ່ວງໜ່ຽວທາງຮ່າງກາຍ; ຜູ້ກວດການສຸຂະພາບຖືກຜູກຕິດກັບຄຳໃຫ້ການ ແລະ ການກຳນົດທີ່ມີຢູ່ໃນຄຳສັ່ງຂອງແພດເຂົ້າຮ່ວມ ກ່ຽວກັບອາການທາງການແພດ. ເພື່ອຈຸດປະສົງຂອງຄຳສັ່ງນີ້, "ອາການທາງການແພດ" ປະກອບດ້ວຍການສະເໜີໂດຍຜູ້ອາໄສຢູ່ທີ່ມີຄວາມອາດສາມາດ, ຄົນໃນຄອບຄົວຂອງຜູ້ອາໄສຢູ່ ຜູ້ທີ່ຂາດຄວາມສາມາດ, ຫຼື ຜູ້ປົກປ້ອງ, ຜູ້ປົກຄອງ, ແລະ ຕົວແທນເບິ່ງແຍງດູແລສຸຂະພາບຖືກຕ້ອງຕາມກົດໝາຍຕາມທີ່ໄດ້ກຳນົດພາຍໃຕ້ຂໍ້ທີ 145C.01, ທີ່ສະຖານເບິ່ງແຍງດູແລໃຫ້ການກັກຂັງໜ່ວງໜ່ຽວທາງດ້ານຮ່າງກາຍ ເພື່ອເພີ່ມຄວາມປອດໄພທາງດ້ານຮ່າງກາຍຂອງຜູ້ອາໄສຢູ່.*

## ການຮັບເຂົ້າ, ການຍ້າຍໄປບ່ອນອື່ນ, ແລະ ການອະນຸຍາດໃຫ້ອອກ

1. ນະໂຍບາຍການຮັບເຂົ້າ.

   A. ສະຖານເບິ່ງແຍງດູແລຕ້ອງສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍການຮັບເຂົ້າ.

   B. ສະຖານເບິ່ງແຍງດູແລຕ້ອງ—

      a. ບໍ່ຮ້ອງຂໍ ຫຼື ຮຽກຮ້ອງໃຫ້ຜູ້ອາໄສຢູ່ ຫຼື ຜູ້ທີ່ອາດຈະມາອາໄສຢູ່ສະຫຼະສິດຂອງພວກເຂົາຕາມທີ່ໄດ້ກ່າວໄວ້ຢູ່ໃນຂໍ້ຍ່ອຍນີ້ ແລະ ຢູ່ໃນກົດໝາຍການອະນຸຍາດ ຫຼື ການຢັ້ງຢືນຂອງລັດ, ຂອງລັດຖະບານກາງ ຫຼື ຂອງທ້ອງຖິ່ນ, ລວມທັງບໍ່ຈຳກັດແຕ່ສິດຂອງພວກເຂົາທີ່ມີຕໍ່ Medicare ຫຼື Medicaid; ແລະ

      b. ບໍ່ຮ້ອງຂໍ ຫຼື ຮຽກຮ້ອງການຮັບປະກັນເປັນລາຍລັກອັກສອນ ທີ່ຜູ້ອາໄສຢູ່ ຫຼື ຜູ້ທີ່ອາດຈະມາອາໄສຢູ່ບໍ່ໃຫ້ມີສິດໄດ້ຮັບ, ຫຼື ຈະບໍ່ສະໝັກຂໍເງິນຊ່ວຍເຫຼືອ Medicare ຫຼື Medicaid.

      c. ບໍ່ຮ້ອງຂໍ ຫຼື ຮຽກຮ້ອງໃຫ້ຜູ້ອາໄສຢູ່ ຫຼື ຜູ້ທີ່ອາດຈະມາອາໄສຢູ່ສະຫຼະຄວາມຮັບຜິດຊອບຕໍ່ສະຖານເບິ່ງແຍງດູແລທີ່ອາດຈະມີການສູນເສຍຊັບສິນສ່ວນຕົວໄດ້

   C. ສະຖານເບິ່ງແຍງດູແລຕ້ອງບໍ່ຮ້ອງຂໍ ຫຼື ຮຽກຮ້ອງເອົາການຄ້ຳປະກັນການຊຳລະຂອງຝ່າຍທີສາມຕໍ່ສະຖານເບິ່ງແຍງດູແລມາເປັນເງື່ອນໄຂຂອງການຮັບເຂົ້າ ຫຼື ເລັ່ງການຮັບເຂົ້າໃຫ້ໄວຂຶ້ນ, ຫຼື ສືບຕໍ່ພັກອາໄສຢູ່ໃນສະຖານເບິ່ງແຍງດູແລ. ເຖິງແນວໃດກໍ່ຕາມ, ສະຖານເບິ່ງແຍງດູແລອາດຈະຂໍໃຫ້ ແລະ ຕ້ອງການໃຫ້ຕົວແທນຜູ້ອາໄສຢູ່ຖືກຕ້ອງຕາມກົດໝາຍ ເຊິ່ງເປັນຜູ້ທີ່ມີການເຂົ້າເຖິງລາຍຮັບ ຫຼື ຊັບສິນທີ່ມີຂອງຜູ້ອາໄສຢູ່ໄດ້ ເພື່ອຈ່າຍຄ່າການເບິ່ງແຍງດູແລຂອງສະຖານເບິ່ງແຍງດູແລ ເພື່ອ

ເຊັນສັນຍາ ເພື່ອໃຫ້ການຊຳລະສະຖານເບິ່ງແຍງດູແລຈາກລາຍຮັບ ຫຼື ຊັບສິນຂອງຜູ້ອາໄສຢູ່ ໂດຍບໍ່ມີຄວາມຮັບຜິດຊອບທາງດ້ານການເງິນສ່ວນຕົວເກີດຂຶ້ນ.

D. ໃນກໍລະນີຂອງຄົນທີ່ມີສິດໄດ້ຮັບ Medicaid, ສະຖານເບິ່ງແຍງດູແລພະຍາບານຕ້ອງບໍ່ເກັບຄ່າ, ວິ່ງເຕັ້ນ, ຍອມຮັບ ຫຼື ຮັບຂອງຂວັນ, ເງິນ, ການບໍລິຈາກ ຫຼື ລາງວັນຕອບແທນອື່ນ ເພີ່ມເຕີມໃສ່ຈຳນວນທີ່ຕ້ອງໄດ້ຈ່າຍພາຍໃຕ້ແຜນປະກັນຂອງລັດ ໃຫ້ເປັນເງື່ອນໄຂອັນໜຶ່ງກ່ອນການຮັບເຂົ້າ, ເລັ່ງການຮັບເຂົ້າໃຫ້ໄວຂຶ້ນ ຫຼື ສືບຕໍ່ພັກຢູ່ໃນສະຖານເບິ່ງແຍງດູແລ. ເຖິງແນວໃດກໍ່ຕາມ,—

a. ສະຖານເບິ່ງແຍງດູແລອາດຈະເກັບຄ່ານຳຜູ້ອາໄສຢູ່ ຜູ້ທີ່ມີສິດໄດ້ຮັບ Medicaid ສຳລັບເຄື່ອງໃຊ້ ແລະ ບໍລິການ ທີ່ຜູ້ອາໄສຢູ່ໄດ້ຂໍ ແລະ ໄດ້ຮັບ, ສິ່ງນັ້ນແມ່ນບໍ່ໄດ້ລະບຸໄວ້ຢູ່ໃນແຜນປະກັນຂອງລັດຕາມທີ່ໄດ້ເອົາເຂົ້າຢູ່ໃນຂໍ້ກຳນົດ 'ການບໍລິການຂອງສະຖານເບິ່ງແຍງດູແລ" ເທົ່າທີ່ສະຖານເບິ່ງແຍງດູແລອອກແຈ້ງການທີ່ເໝາະສົມຂອງການມີໃຫ້ ແລະ ຄ່າໃຊ້ຈ່າຍຂອງການບໍລິການເຫຼົ່ານີ້ໃຫ້ກັບຜູ້ອາໄສຢູ່ ແລະ ບໍ່ເປັນເງື່ອນໄຂການຮັບເຂົ້າຂອງຜູ້ອາໄສຢູ່ ຫຼື ການສືບຕໍ່ພັກອາໄສຢູ່ຕາມການຂໍ ຫຼື ການຍອມຮັບການບໍລິການເພີ່ມເຕີມດັ່ງກ່າວ; ແລະ

b. ສະຖານເບິ່ງແຍງດູແລອາດຈະວິ່ງເຕັ້ນ, ຍອມຮັບ, ຫຼື ຮັບເອົາການປະກອບສ່ວນເພື່ອການກຸສົນ, ທາງສາສະໜາ, ຫຼື ເພື່ອມະນຸດສະທຳຈາກອົງການຈັດຕັ້ງໃດໜຶ່ງ ຫຼື ຈາກບຸກຄົນໃດໜຶ່ງທີ່ບໍ່ກ່ຽວຂ້ອງກັບຜູ້ອາໄສຢູ່ທີ່ມີສິດໄດ້ຮັບ Medicaid ຫຼື ຜູ້ທີ່ອາດຈະມາອາໄສຢູ່, ແຕ່ຕ້ອງເປັນໃນລະດັບທີ່ການປະກອບສ່ວນບໍ່ແມ່ນເງື່ອນໄຂຂອງການຮັບເຂົ້າ, ເລັ່ງການຮັບເຂົ້າໃຫ້ໄວ, ຫຼື ສືບຕໍ່ພັກອາໄສຢູ່ໃນສະຖານເບິ່ງແຍງດູແລສຳລັບຜູ້ອາໄສຢູ່ມີສິດໄດ້ຮັບ Medicaid.

E. ລັດຕ່າງໆ ຫຼື ພະແນກຍ່ອຍທາງການເມືອງອາດຈະນຳໃຊ້ມາດຕະຖານການຮັບເຂົ້າພາຍໃຕ້ກົດໝາຍຂອງລັດ ຫຼື ທ້ອງຖິ່ນຢ່າງເຄັ່ງຄັດກວ່າທີ່ໄດ້ກຳນົດໄວ້ໃນຂໍ້ນີ້ ເພື່ອຫ້າມການຈຳແນກຄວາມແຕກຕ່າງຕໍ່ບຸກຄົນທີ່ມີສິໄດ້ຮັບ Medicaid.

F. ສະຖານເບິ່ງແຍງດູແລພະຍາບານຕ້ອງໄດ້ເປີດເຜີຍແຈ້ງການຄຸນລັກສະນະພິເສດ ຫຼື ຂໍ້ຫ້າມບໍລິການຂອງສະຖານເບິ່ງແຍງດູແລໃຫ້ກັບຜູ້ອາໄສຢູ່ ຫຼື ຜູ້ທີ່ອາດຈະມາອາໄສຢູ່ກ່ອນເວລາຂອງການຮັບເຂົ້າ.

G. ສະຖານເບິ່ງແຍງດູແລພະຍາບານທີ່ເປັນພາກສ່ວນສະເພາະລວມຕ້ອງເປີດເຜີຍຢູ່ໃນຂໍ້ຕົກລົງການຮັບເຂົ້າຂອງຕົນເອງກ່ຽວກັບການກຳນົດຕົວຈິງ, ລວມທັງສະຖານທີ່ຕ່າງໆທີ່ປະກອບມີພາກສ່ວນສະເພາະລວມ, ແລະ ຕ້ອງກຳນົດນະໂຍບາຍທີ່ນຳໃຊ້ກັບການປ່ຽນຫ້ອງລະຫວ່າງສະຖານທີ່ຕ່າງໆຂອງມັນເອງ.

2. ການເຂົ້າເຖິງການເບິ່ງແຍງດູແລສຸຂະພາບເທົ່າທຽມກັນ.

A. ສະຖານພະຍາບານຕ້ອງສ້າງ, ຮັກສາ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ການປະຕິບັດອັນດຽວກັນກ່ຽວກັບການຍ້າຍ ແລະ ການອະນຸຍາດໃຫ້ອອກ, ແລະ ການໃຫ້ບໍລິການຕ່າງໆແກ່ທຸກໆຄົນ ໂດຍບໍ່ໃຫ້ຄໍານຶງເຖິງແຫຼ່ງການຊໍາລະ;

B. ສະຖານເບິ່ງແຍງດູແລອາດຈະເກັບຄ່າບໍລິການຈໍານວນໃດໜຶ່ງຈັດໃຫ້ກັບຜູ້ອາໄສຢູ່ທີ່ບໍ່ໄດ້ຮັບ Medicaid ນອກຈາກວ່າຖືກຫ້າມໂດຍກົດໝາຍຂອງລັດ ແລະ ກົງກັບເງື່ອນໄຂກໍານົດຂອງແຈ້ງການທີ່ອະທິບາຍເຖິງການເກັບຄ່າ; ແລະ

C. ລັດບໍ່ຖືກຮຽກຮ້ອງໃຫ້ສະເໜີການບໍລິການເພີ່ມເຕີມໃຫ້ໃນນາມຂອງຜູ້ອາໄສຢູ່ນອກເໜືອໄປກວ່າການບໍລິການທີ່ຈັດໃຫ້ຢູ່ໃນແຜນປະກັນຂອງລັດ.

3. ການຍ້າຍໄປບ່ອນອື່ນ ແລະ ການອະນຸຍາດໃຫ້ອອກ—

*ຜູ້ອາໄສຢູ່ຕ້ອງບໍ່ຖືກຍ້າຍ ຫຼື ອະນຸຍາດໃຫ້ອອກຕາມອໍາເພີໃຈ. ຜູ້ອາໄສຢູ່ຕ້ອງໄດ້ຮັບແຈ້ງເປັນລາຍລັກອັກສອນເລື່ອການອະນຸຍາດໃຫ້ອອກ ຫຼື ການຍ້າຍຕາມການສະເໜີ ແລະ ອໍານາດຂອງມັນເອງບໍ່ຊ້າໄປກວ່າ 30 ວັນ ກ່ອນການອະນຸຍາດໃຫ້ອອກຈາກສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນ ແລະ ເຈັດວັນກ່ອນຍ້າຍໄປຫ້ອງອື່ນຢູ່ພາຍໃນສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນ. ແຈ້ງການນີ້ຈະປະກອບມີສິດຂອງຜູ້ອາໄສຢູ່ ເພື່ອໂຕ້ແຍ້ງການດໍາເນີນການທີ່ສະເໜີ, ພ້ອມທີ່ຢູ່ ແລະ ເບີໂທລະສັບຂອງຜູ້ກວດການເບິ່ງແຍງດູແລໄລຍະຍາວປະຈໍາເຂດຕາມກົດໝາຍຜູ້ສູງອາຍຸຄົນອາເມຣິກາ (Older Americans Act). ຜູ້ອາໄສຢູ່ທີ່ໄດ້ຮັບແຈ້ງສິດນີ້ອາດຈະເລືອກຍ້າຍບ່ອນກ່ອນໄລຍະແຈ້ງການຈະສິ້ນສຸດລົງ. ໄລຍະແຈ້ງການອາດຈະຖືກຕັດໃຫ້ສັ້ນລົງຢູ່ໃນສະຖານະການຕ່າງໆຢູ່ນອກຢູ່ນອກການຄວບຄຸມຂອງສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນເຊັ່ນ: ການກໍານົດໂດຍການທົບທວນການນໍາໃຊ້, ທີ່ພັກອາໄສຂອງຜູ້ຢູ່ອາໄສຮັບເຂົ້າມາໃໝ່ໆ, ການປ່ຽນແປງໂຄງການປິ່ນປົວ ຫຼື ທາງການແພດຂອງຜູ້ອາໄສຢູ່, ສະຫວັດດີການຂອງຜູ້ອາໄສຢູ່ເອງ ຫຼື ຂອງຜູ້ອາໄສຢູ່ຄົນອື່ນ, ຫຼື ການບໍ່ຊໍາລະຄ່າການພັກອາໄສ ນອກຈາກວ່າຖືກຫ້າມໂດຍໂຄງການຂອງລັດ ຫຼື ໂຄງການຈ່າຍຄ່າການເບິ່ງແຍງດູແລຂອງຜູ້ຢູ່ອາໄສໃຫ້ຕາມທີ່ໄດ້ບັນທຶກເປັນເອກະສານໄວ້ຢູ່ໃນບັນທຶກທາງການແພດ. ສະຖານເບິ່ງແຍງດູແລພະຍາບານ ຫຼື ບ້ານພັກເບິ່ງແຍງດູແລກິນນອນຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນເພື່ອຮອງຮັບຜູ້ອາໄສຢູ່ຄົນໃໝ່ໂດຍບໍ່ສ້າງຄວາມຫຍຸ້ງຍາກໃນການມອບຫ້ອງໃຫ້.*

*ອາດຈະມີການນໍາໃຊ້ຂໍ້ບັງຄັບເພີ່ມເຕີມ ໃນກໍລະນີມີການຍ້າຍບ່ອນຜູ້ອາໄສຢູ່ເນື່ອງຈາກການປິດສະຖານເບິ່ງແຍງດູແລ, ການຫຼຸດ, ຫຼື ການປ່ຽນແປງການດໍາເນີນງານ.*

A. ເງື່ອນໄຂກໍານົດຂອງສະຖານເບິ່ງແຍງດູແລ—

a. ສະຖານເບິ່ງແຍງດູແລຕ້ອງອະນຸຍາດໃຫ້ຜູ້ອາໄສຢູ່ແຕ່ລະຄົນໃຫ້ຢູ່ໃນສະຖານເບິ່ງແຍງດູແລ ໄດ້, ແລະ ບໍ່ຍ້າຍ ຫຼື ອະນຸຍາດໃຫ້ຜູ້ອາໄສຢູ່ໃຫ້ອອກໄປຈາກສະຖານເບິ່ງແຍງດູແລ ນອກ ຈາກວ່າ—

- ການຍ້າຍໄປບ່ອນໃໝ່ ຫຼື ການອະນຸຍາດໃຫ້ອອກມີຄວາມຈຳເປັນສຳລັບສະຫວັດດີການ ຂອງຜູ້ອາໄສຢູ່ ແລະ ບໍ່ສາມາດບັນລຸໄດ້ຕາມຄວາມຕ້ອງການຂອງຜູ້ອາໄສຢູ່ໃນສະ ຖານເບິ່ງແຍງດູແລ;
- ການຍ້າຍໄປບ່ອນໃໝ່ ຫຼື ການອະນຸຍາດໃຫ້ອອກມີຄວາມເໝາະສົມ ເພາະວ່າສຸຂະພາບ ຂອງຜູ້ອາໄສຢູ່ດີຂຶ້ນພຽງພໍ ເຊິ່ງຜູ້ອາໄສຢູ່ບໍ່ມີຄວາມຈຳເປັນຕ້ອງເອົາການບໍລິການທີ່ສະ ຖານເບິ່ງແຍງດູແລຈັດໃຫ້ອີກຕໍ່ໄປ;
- ຄວາມປອດໄພຂອງບຸກຄົນຢູ່ໃນສະຖານເບິ່ງແຍງດູແລຕົກຢູ່ໃນສະພາບອັນຕະລາຍ ເນື່ອງ ຈາກສະຖານະພາບທາງດ້ານການປິ່ນປົວ ຫຼື ພຶດຕິກຳຂອງຜູ້ອາໄສຢູ່;
- ອີກຢ່າງໜຶ່ງ ສຸຂະພາບຂອງບຸກຄົນຢູ່ໃນສະຖານເບິ່ງແຍງດູແລຈະຕົກຢູ່ໃນອັນຕະລາຍ;
- ຜູ້ອາໄສຢູ່ຫຼົ້ມເຫຼວທີ່ຈະຈ່າຍ (ຫຼື ຕ້ອງໄດ້ຈ່າຍພາຍໃຕ້ Medicare ຫຼື Medicaid) ຄ່າ ການພັກອາໄສຢູ່ສະຖານເບິ່ງແຍງດູແລ ຫຼັງຈາກທີ່ແຈ້ງການໃຫ້ເໝາະສົມ ແລະ ສົມເຫດ ສົມຜົນແລ້ວ. ນຳໃຊ້ການບໍ່ຊຳລະ ຖ້າຜູ້ອາໄສຢູ່ບໍ່ສົ່ງເອກະສານທີ່ຈຳເປັນສຳລັບການຊຳລະ ພາກສ່ວນທີສາມ ຫຼື ຫຼັງຈາກພາກສ່ວນທີສາມ, ລວມທັງ Medicare ຫຼື Medicaid, ປະ ຕິເສດຄຳຮ້ອງຮຽນ ແລະ ຜູ້ອາໄສຢູ່ປະຕິເສດທີ່ຈະຈ່າຍຄ່າການພັກອາໄສຢູ່ຂອງລາວ. ສຳ ລັບຜູ້ອາໄສຢູ່ທີ່ເປັນຜູ້ມີສິດໄດ້ຮັບ Medicaid ຫຼັງຈາກການຮັບເຂົ້າສູ່ສະຖານເບິ່ງແຍງດູ ແລ, ສະຖານເບິ່ງແຍງດູແລອາດຈະເກັບແຕ່ຄ່າທີ່ສາມາດອະນຸຍາດໄດ້ນຳຜູ້ອາໄສຢູ່ພາຍໃຕ້ Medicaid ເທົ່ານັ້ນ; ຫຼື
- ສະຖານເບິ່ງແຍງດູແລຢຸດດຳເນີນງານໃຫ້.

b. ສະຖານເບິ່ງແຍງດູແລອາດຈະບໍ່ຍ້າຍ ຫຼື ອະນຸຍາດໃຫ້ຜູ້ອາໄສຢູ່ອອກໄປ ໃນຂະນະທີ່ຍັງມີ ການອຸທອນຄ້າງຢູ່ ເມື່ອຜູ້ອາໄສຢູ່ໃຊ້ສິດຂອງຕົນເອງອຸທອນຄຳແຈ້ງການຍ້າຍ ຫຼື ການອະນຸ ຍາດໃຫ້ອອກ, ນອກຈາກວ່າການບໍ່ໃຫ້ຍ້າຍ ຫຼື ອະນຸຍາດໃຫ້ອອກຈະເຮັດໃຫ້ເກີດອັນຕະລາຍຕໍ່ ສຸຂະພາບ ຫຼື ຄວາມປອດໄພຂອງຜູ້ອາໄສຢູ່ ຫຼື ບຸກຄົນອື່ນໆຢູ່ໃນສະຖານເບິ່ງແຍງດູແລ. ສະ ຖານເບິ່ງແຍງດູແລຕ້ອງບັນທຶກອັນຕະລາຍທີ່ຈະເກີດຂຶ້ນຈາກການບໍ່ຍ້າຍ ຫຼື ບໍ່ອະນຸຍາດໃຫ້ ອອກ.

B. ການບັນທຶກເປັນເອກະສານ. ເມື່ອສະຖານເບິ່ງແຍງດູແລຍ້າຍ ຫຼື ອະນຸຍາດໃຫ້ຜູ້ອາໄສຢູ່ອອກພາຍໃຕ້ສະພາບການໃດໜຶ່ງທີ່ລະບຸໄວ້, ສະຖານເບິ່ງແຍງດູແລຕ້ອງຮັບປະກັນວ່າ ການຍ້າຍ ຫຼື ການອະນຸຍາດໃຫ້ອອກແມ່ນໄດ້ບັນທຶກເປັນເອກະສານໄວ້ຢູ່ໃນບັນທຶກທາງການແພດຂອງຜູ້ອາໄສຢູ່ ແລະ ຂໍ້ມູນທີ່ເໝາະສົມໄດ້ຮັບການສື່ສານຫາສະຖາບັນ ຫຼື ຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບທີ່ຮັບແລ້ວ. [3]a. ການບັນທຶກເປັນເອກະສານຢູ່ໃນບັນທຶກທາງການແພດຂອງຜູ້ອາໄສຢູ່ຕ້ອງປະກອບດ້ວຍ:

- ພື້ນຖານສຳລັບການຍ້າຍ.
- ບໍ່ສາມາດບັນລຸໄດ້ຕາມຄວາມຕ້ອງການສະເພາະຂອງຜູ້ອາໄສຢູ່, ຄວາມພະຍາຍາມຂອງສະຖານເບິ່ງແຍງດູແລເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງຜູ້ອາໄສຢູ່, ແລະ ການບໍລິການຢູ່ທີ່ສະຖານເບິ່ງແຍງດູແລທີ່ຮັບໄດ້ຕາມຄວາມຕ້ອງການ.

b. ເອກະສານບັນທຶກທີ່ຕ້ອງການແມ່ນຕ້ອງເຮັດໂດຍ—

- ແພດຂອງຜູ້ອາໄສຢູ່ ເມື່ອການຍ້າຍ ຫຼື ການອະນຸຍາດໃຫ້ອອກມີຄວາມຈຳເປັນພາຍໃຕ້ວັກທີ 3 A a. ຈຸດຂີດໜ້າທີໜຶ່ງ ແລະ ທີສອງຂອງຂໍ້ນີ້; ແລະ
- ແພດ ເມື່ອການຍ້າຍ ຫຼື ການອະນຸຍາດໃຫ້ອອກມີຄວາມຈຳເປັນພາຍໃຕ້ວັກທີ 3 A a. ຈຸດຂີດໜ້າທີສາມ ແລະ ທີສີ່.

c. ຂໍ້ມູນທີ່ໃຫ້ກັບຜູ້ໃຫ້ບໍລິການທີ່ຮັບຕ້ອງມີດັ່ງຕໍ່ໄປນີ້ເປັນຢ່າງໜ້ອຍຄື:

- ຂໍ້ມູນຕິດຕໍ່ຂອງຜູ້ເຮັດໜ້າທີ່ຮັບຜິດຊອບຕໍ່ການເບິ່ງແຍງດູແລຜູ້ອາໄສຢູ່.
- ຂໍ້ມູນຕົວແທນຜູ້ອາໄສຢູ່ ລວມທັງຂໍ້ມູນຕິດຕໍ່.
- ຂໍ້ມູນພິໄນກຳ.
- ຄຳແນະນຳພິເສດທັງໝົດ ຫຼື ຄຳເຕືອນລ່ວງໜ້າສຳລັບການເບິ່ງແຍງດູແລທີ່ພວມດຳເນີນຢູ່ຕາມຄວາມເໝາະສົມ.
- ເປົ້າໝາຍແຜນການເບິ່ງແຍງດູແລກວມລວມ,

[3] ລາຍການຍ້າຍ/ອະນຸຍາດໃຫ້ອອກ 3B ຈະຖືກຈັດຕັ້ງປະຕິບັດໃນວັນທີ 11/28/17.

- ຂໍ້ມູນທີ່ຈຳເປັນອື່ນໆທັງໝົດ, ລວມທັງສຳເນົາໃບສະຫຼຸບສັງລວມການອະນຸຍາດໃຫ້ອອກຂອງຜູ້ອາໄສຢູ່, ແລະ ເອກະສານບັນທຶກອື່ນໆໃດໜຶ່ງເທົ່າທີ່ມີ ເພື່ອຮັບປະກັນການປ່ຽນການເບິ່ງແຍງດູແລທີ່ປອດໄພ ແລະ ມີປະສິດທິພາບ.

C. ແຈ້ງການກ່ອນການຍ້າຍ. ກ່ອນສະຖານເບິ່ງແຍງດູແລຈະຍ້າຍ ຫຼື ອະນຸຍາດໃຫ້ຜູ້ອາໄສຢູ່ອອກ, ສະຖານເບິ່ງແຍງດູແລຕ້ອງ—

a. ແຈ້ງຜູ້ອາໄສຢູ່ ແລະ ຕົວແທນຜູ້ອາໄສຢູ່ໃຫ້ຮູ້ເລື່ອງການຍ້າຍ ຫຼື ການອະນຸຍາດໃຫ້ອອກ ແລະ ເຫດຜົນສຳລັບການຍ້າຍເປັນລາຍລັກອັກສອນ ແລະ ເປັນພາສາ ແລະ ຮູບແບບທີ່ພວກເຂົາເຂົ້າໃຈໄດ້. ສະຖານເບິ່ງແຍງດູແລຕ້ອງສົ່ງສຳເນົາແຈ້ງການສະບັບໜຶ່ງໄປໃຫ້ກັບຜູ້ຕາງໜ້າຂອງຫ້ອງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວ.

b. ບັນທຶກເຫດຜົນສຳລັບການຍ້າຍ ຫຼື ການອະນຸຍາດໃຫ້ອອກຢູ່ໃນບັນທຶກທາງການແພດຂອງຜູ້ອາໄສຢູ່; ແລະ

c. ລວມໄວ້ຢູ່ໃນແຈ້ງການລາຍການທີ່ໄດ້ອະທິບາຍໄວ້ຢູ່ໃນຂໍ້ນີ້.

D. ກຳນົດເວລາຂອງແຈ້ງການ.

a. ຍົກເວັ້ນຕາມທີ່ໄດ້ກຳນົດໄວ້, ແຈ້ງການເລື່ອງການຍ້າຍ ຫຼື ການອະນຸຍາດໃຫ້ອອກທີ່ຕ້ອງການພາຍໃຕ້ຂໍ້ນີ້ຕ້ອງແມ່ນທາງສະຖານເບິ່ງແຍງດູແລເປັນຜູ້ເຮັດຢ່າງໜ້ອຍ 30 ວັນກ່ອນທີ່ຜູ້ອາໄສຢູ່ຈະຖືກຍ້າຍ ຫຼື ໄດ້ຮັບອະນຸຍາດໃຫ້ອອກ.

b. ແຈ້ງການຕ້ອງໄດ້ເຮັດທັນທີທີ່ເຮັດໄດ້ ກ່ອນການຍ້າຍ ຫຼື ການອະນຸຍາດໃຫ້ອອກ ເມື່ອ—

- ຄວາມປອດໄພຂອງບຸກຄົນຢູ່ໃນສະຖານເບິ່ງແຍງດູແລຈະຕົກຢູ່ໃນອັນຕະລາຍ;
- ສຸຂະພາບຂອງບຸກຄົນຢູ່ໃນສະຖານເບິ່ງແຍງດູແລຈະຕົກຢູ່ໃນອັນຕະລາຍ;
- ສຸຂະພາບຂອງຜູ້ອາໄສຢູ່ດີຂຶ້ນພໍທີ່ຈະອະນຸຍາດໃຫ້ຍ້າຍ ຫຼື ອະນຸຍາດໃຫ້ອອກໄດ້ທັນທີ;
- ການຍ້າຍ ຫຼື ການອະນຸຍາດໃຫ້ອອກທັນທີແມ່ນຈຳເປັນຕາມຄວາມຕ້ອງການທາງການແພດເລັ່ງດ່ວນຂອງຜູ້ອາໄສຢູ່ພາຍໃຕ້ວັກ; ຫຼື
- ຜູ້ອາໄສຢູ່ບໍ່ໄດ້ຢູ່ໃນສະຖານເບິ່ງແຍງດູແລເປັນເວລາ 30 ວັນ.

E. ເນື້ອໃນຂອງແຈ້ງການ. ແຈ້ງການເປັນລາຍລັກອັກສອນທີ່ລະບຸໄວ້ຢູ່ໃນພາກນີ້ຕ້ອງປະກອບມີດັ່ງຕໍ່ໄປນີ້ຄື:

a. ເຫດຜົນສຳລັບການຍ້າຍ ຫຼື ການອະນຸຍາດໃຫ້ອອກ;

b. ວັນທີມີຜົນບັງຄັບໃຊ້ການຍ້າຍ ຫຼື ການອະນຸຍາດໃຫ້ອອກ;

c. ສະຖານທີ່ບ່ອນຜູ້ອາໄສຢູ່ຍ້າຍໄປ ຫຼື ອະນຸຍາດໃຫ້ອອກ;

d. ຄຳໃຫ້ການຂອງສິດການອຸທອນຂອງຜູ້ອາໄສຢູ່, ລວມທັງຊື່, ທີ່ຢູ່ (ທາງໄປສະນີ ແລະ ອີເມວ), ແລະ ເບີໂທລະສັບຂອງພາກສ່ວນທີ່ຮັບຄຳສະເໜີດັ່ງກ່າວ; ແລະ

e. ຂໍ້ມູນກ່ຽວກັບວິທີເອົາແບບຟອມອຸທອນ ແລະ ການຊ່ວຍເຫຼືອໃນການປະກອບແບບຟອມ ແລະ ການສົ່ງຄຳຂໍໃຫ້ມີການພິຈາລະນາຄຳອຸທອນ;

f. ຊື່, ທີ່ຢູ່ (ທາງໄປສະນີ ແລະ ອີເມວ) ແລະ ເບີໂທລະສັບຂອງຫ້ອງການ ຜູ້ກວດກາການເບິ່ງແຍງດູແລໄລຍະຍາວຂອງລັດ;

g. ສະລັບຜູ້ອາໄສຢູ່ສະຖານເບິ່ງແຍງດູແລທີ່ມີຄົນພິການທາງປັນຍາ ແລະ ພັດທະນາການ ຫຼື ຄວາມພິການທີ່ກ່ຽວຂ້ອງ, ທີ່ຢູ່ທາງໄປສະນີ ແລະ ອີເມວ ແລະ ເບີໂທລະສັບຂອງອົງການຮັບຜິດຊອບຕໍ່ການປົກປ້ອງ ແລະ ສົ່ງເສີມຂອງບຸກຄົນທີ່ມີຄວາມພິການທາງດ້ານພັດທະນາການ; ແລະ

h. ສະລັບຜູ້ອາໄສຢູ່ສະຖານເບິ່ງແຍງດູແລທີ່ມີຄົນພິການທາງຈິດ ຫຼື ຄວາມພິການກ່ຽວຂ້ອງ, ທີ່ຢູ່ທາງໄປສະນີ ແລະ ອີເມວ ແລະ ເບີໂທລະສັບຂອງອົງການຮັບຜິດຊອບຕໍ່ການປົກປ້ອງ ແລະ ສົ່ງເສີມຂອງບຸກຄົນທີ່ມີຄວາມຜິດປົກກະຕິທາງຈິດໃຈກຳນົດໄວ້ພາຍໃຕ້ການປົກປ້ອງ ແລະ ການສະໜັບສະໜູນກົດໝາຍບຸກຄົນປ່ວຍທາງຈິດ.

F. ການປ່ຽນແປງແຈ້ງການ. ຖ້າຂໍ້ມູນຢູ່ໃນແຈ້ງການປ່ຽນແປງກ່ອນມີຜົນກະທົບຕໍ່ການຍ້າຍ ຫຼື ການອະນຸຍາດໃຫ້ອອກ, ສະຖານເບິ່ງແຍງດູແລຕ້ອງແຈ້ງໃຫ້ຜູ້ຮັບແຈ້ງການທັນທີທີ່ເປັນໄປໄດ້ ເມື່ອມີຂໍ້ມູນອັບເດດໃຫ້ແລ້ວ.

G. ການຈັດກຽມສຳລັບການຍ້າຍ ຫຼື ການອະນຸຍາດໃຫ້ອອກ. ສະຖານເບິ່ງແຍງດູແລຕ້ອງໃຫ້ ແລະ ບັນທຶກການກະກຽມ ແລະ ການຈັດກຽມທີ່ພຽງພໍໃຫ້ກັບຜູ້ອາໄສຢູ່ ເພື່ອຮັບປະກັນການຍ້າຍ ຫຼື ການອະນຸຍາດໃຫ້ອອກຈາກສະຖານເບິ່ງແຍງດູແລໄດ້ຢ່າງປອດໄພ. ການຈັດກຽມນີ້ຕ້ອງໄດ້ເອົາໃຫ້ໃນແບບຟອມ ແລະ ຮູບແບບທັນເວລາທີ່ຜູ້ອາໄສຢູ່ສາມາດເຂົ້າໃຈໄດ້.

H. ແຈ້ງການເລື່ອງການປິດສະຖານເບິ່ງແຍງດູແລລ່ວງໜ້າ. ໃນກໍລະນີມີການປິດສະຖານເບິ່ງແຍງດູແລ, ບຸກຄົນທີ່ເປັນຜູ້ຄວບຄຸມສະຖານເບິ່ງແຍງດູແລຕ້ອງອອກແຈ້ງການເປັນລາຍລັກອັກສອນກ່ອນການປິດທີ່ຈະມີຂຶ້ນນັ້ນໄປໃຫ້ກັບອົງການສຳຫຼວດຂອງລັດ, ຫ້ອງການຜູ້ກວດກາການເບິ່ງແຍງດູແລ

ໄລຍະຍາວຂອງລັດ, ຜູ້ອາໄສຢູ່ສະຖານເບິ່ແຍງດູແລ, ແລະ ຕົວແທນຜູ້ອາໄສຢູ່, ພ້ອມທັງແຜນສຳລັບການຍ້າຍ ແລະ ການຍົກຍ້າຍຜູ້ອາໄສຢູ່ໃຫ້ພຽງພໍ.

I. ການປ່ຽນຫ້ອງຢູ່ໃນພາກສ່ວນສະເພາະລວມ (composite distinct part). ການປ່ຽນແປງຫ້ອງຢູ່ໃນສະຖານເບິ່ງແຍງດູແລທີ່ເປັນພາກສ່ວນສະເພາະແມ່ນຂຶ້ນກັບເງື່ອນໄຂກຳນົດ ແລະ ຕ້ອງຖືກຈຳກັດຕໍ່ການຍ້າຍພາຍໃນອາຄານສະເພາະ ເຊິ່ງຜູ້ອາໄສຢູ່ນັ້ນຢູ່, ນອກຈາກວ່າ ຜູ້ອາໄສຢູ່ເຫັນດີຍ້າຍໄປສູ່ສະຖານທີ່ພາກສ່ວນສະເພາະລວມອື່ນດ້ວຍຄວາມສະໝັກໃຈ.

4. ແຈ້ງການນະໂຍບາຍເລື່ອງການຮັກສາຕຽງໄວ້ ແລະ ການສົ່ງຄືນ—

A. ແຈ້ງການກ່ອນການຍ້າຍ. ກ່ອນສະຖານເບິ່ງແຍງດູແລຈະຍ້າຍຜູ້ອາໄສຢູ່ໄປຫາໂຮງໝໍ ຫຼື ຜູ້ອາໄສຢູ່ລາພັກໄປປິ່ນປົວພະຍາດ, ສະຖານເບິ່ງແຍງດູແລຕ້ອງແຈ້ງການໃຫ້ຜູ້ອາໄສຢູ່ ຫຼື ຕົວແທນຜູ້ອາໄສຢູ່ເປັນລາຍລັກອັກສອນທີ່ລະບຸວ່າ—

a. ໄລຍະເວລາຂອງການຮັກສາຕຽງໄວ້ຂອງລັດ, ຖ້າມີ, ໃນລະຫວ່າງທີ່ຜູ້ອາໄສຢູ່ໄດ້ຮັບອະນຸຍາດໃຫ້ກັບຄືນ ແລະ ສືບຕໍ່ການອາໄສຢູ່ໃນສະຖານເບິ່ງແຍງດູແລ;

b. ນະໂຍບາຍການຊຳລະຄ່າຕຽງທີ່ຈອງໄວ້ຢູ່ໃນແຜນປະກັນຂອງລັດ, ຖ້າມີ;

c. ນະໂຍບາຍຂອງສະຖານເບິ່ງແຍງດູແລກ່ຽວກັບໄລຍະເວລາການຮັກສາຕຽງໄວ້, ເຊິ່ງຕ້ອງກົງກັບຂໍ້ນີ້, ການອະນຸຍາດໃຫ້ຜູ້ອາໄສຢູ່ຄົນໜຶ່ງກັບຄືນ; ແລະ

d. ຂໍ້ມູນລະບຸໄວ້ຢູ່ໃນຂໍ້ນີ້.

B. ແຈ້ງການຮັກສາຕຽງໄວ້ເມື່ອມີການຍ້າຍ. ໃນເວລາຍ້າຍຜູ້ອາໄສຢູ່ໄປເຂົ້ານອນໂຮງໝໍ ຫຼື ການລາພັກປິ່ນປົວ, ສະຖານເບິ່ງແຍງດູແລຕ້ອງອອກແຈ້ງການເປັນລາຍລັກອັກສອນໃຫ້ແກ່ຜູ້ອາໄສຢູ່ ແລະ ຕົວແທນຜູ້ອາໄສຢູ່ ເຊິ່ງລະບຸໄລຍະເວລາຂອງການຮັກສານະໂຍບາຍຮັກສາຕຽງນອນໄວ້.

5. ການອະນຸຍາດໃຫ້ຜູ້ອາໄສຢູ່ກັບຄືນສູ່ສະຖານເບິ່ງແຍງດູແລ.

A. ສະຖານເບິ່ງແຍງດູແລຕ້ອງກຳນົດ ແລະ ຕິດຕາມນະໂຍບາຍເປັນລາຍລັກອັກສອນກ່ຽວກັບຜູ້ອາໄສຢູ່ທີ່ໄດ້ຮັບອະນຸຍາດໃຫ້ກັບຄືນສູ່ສະຖານເບິ່ງແຍງດູແລ ຫຼັງຈາກພວກເຮົາໄດ້ຖືກນຳຕົວເຂົ້ານອນໂຮງໝໍ ຫຼື ໄດ້ຂໍລາພັກປິ່ນປົວ. ນະໂຍບາຍຕ້ອງຈັດໃຫ້ດັ່ງຕໍ່ໄປນີ້.

a. ຜູ້ອາໄສຢູ່, ຜູ້ທີ່ມີການເຂົ້ານອນໂຮງໝໍ ຫຼື ການລາພັກປິ່ນປົວເກີນໄລຍະເວລາຮັກສາຕຽງນອນໄວ້ພາຍໃຕ້ກົດໝາຍຂອງລັດ, ກັບຄືນສູ່ສະຖານເບິ່ງແຍງດູແລກັບຄືນໄປຫ້ອງເກົ່າຂອງພວກເຂົາ, ຖ້າມີໃຫ້ ຫຼື ທັນທີເມື່ອມີຕຽງໃຫ້ອັນທຳອິດຢູ່ໃນຫ້ອງເຄິ່ງສ່ວນຕົວ ຖ້າຜູ້ອາໄສຢູ່

- ຕ້ອງມີບໍລິການທີ່ສະຖານເບິ່ງແຍງດູແລຈັດໃຫ້; ແລະ
- ມີສິດໄດ້ຮັບບໍລິການສະຖານເບິ່ງແຍງດູແລທີ່ມີຄວາມຊໍານານຂອງ Medicare ຫຼື ບໍລິການສະຖານເບິ່ງແຍງດູແລທີ່ມີຄວາມຊໍານານຂອງ Medicaid.

b. ຖ້າສະຖານເບິ່ງແຍງດູແລກໍານົດວ່າ ຜູ້ອາໄສຢູ່ ຜູ້ທີ່ຖືກຍ້າຍດ້ວຍຄວາມຄາດຫວັງທີ່ຈະກັບຄືນມາສູ່ສະຖານເບິ່ງແຍງດູແລບໍ່ສາມາດກັບຄືນມາໄດ້, ສະຖານເບິ່ງແຍງດູແລຕ້ອງປະຕິບັດຕາມເງື່ອນໄຂກໍານົດຕາມທີ່ພວກເຂົານໍາໃຊ້ກັບການອະນຸຍາດໃຫ້ອອກ.

B. ການຮັບເຂົ້າສູ່ພາກສ່ວນສະເພາະລວມ (composite distinct part) ອີກເທື່ອໜຶ່ງ. ເມື່ອສະຖານເບິ່ງແຍງດູແລ ທີ່ຜູ້ອາໄສຢູ່ກັບຄືນມາແມ່ນພາກສ່ວນສະເພາະລວມ (composite distinct part), ຜູ້ອາໄສຢູ່ຕ້ອງໄດ້ຮັບອະນຸຍາດໃຫ້ກັບຄືນໄປສູ່ຕຽງທີ່ມີຢູ່ໃນສະຖານທີ່ສະເພາະຂອງ composite distinct part ເຊິ່ງລາວໄດ້ອາໄສຢູ່ມາກ່ອນແລ້ວ. ຖ້າບໍ່ມີຕຽງຢູ່ໃນສະຖານທີ່ນັ້ນໃນເວລາຂອງການກັບມາ, ຜູ້ອາໄສຢູ່ຕ້ອງໄດ້ຮັບໂອກາດໃຫ້ກັບຄືນໄປຫາສະຖານທີ່ຕາມທີ່ມີຕຽງທໍາອິດໃຫ້ຢູ່ທີ່ນັ້ນ.

# ແຫຼ່ງທີ່ມາ

## ການສະໜັບສະໜູນ

## KEPRO

(Medicare Beneficiary and Family Centered Care Quality Improvement Organization)
(ອົງການປັບປຸງຄຸນນະພາບການເບິ່ງແຍງດູແລເນັ້ນໃສ່ຄອບຄົວ ແລະ ຜູ້ໄດ້ຮັບຜົນປະໂຫຍດ Medicare)
5201 West Kennedy Boulevard, Suite 900
Tampa, Florida 33609
ສົ່ງເຖິງ: Medicare Beneficiary Complaints (ຝ່າຍຄ□າຮ້ອງຮຽນຜູ້ໄດ້ຮັບຜົນປະໂຫຍດ Medicare)
855-408-8557
beneficiary.complaints@hcqis.org

## MID-MINNESOTA LEGAL AID/MINNESOTA DISABILITY LAW CENTER (ສູນຊ່ວຍເຫຼືອກົດໝາຍລັດມິນີໂຊຕາຕອນກາງ/ສູນກົດໝາຍຄວາມພິການລັດມິນີໂຊຕາ)

(Protection and Advocacy Systems) (ລະບົບການປົກປ້ອງ ແລະ ການສະໜັບສະໜູນ)
430 First Avenue North, Suite 300
Minneapolis, MN 55401-1780 1-800-292-
4150 ເບີໂທຮັບເຂົ້າ mndlc@mylegalaid.org

## OFFICE OF OMBUDSMAN FOR LONG-TERM CARE (ຫ້ອງການຜູ້ກວດກາການເບິ່ງແຍງດູແລໄລຍະຍາວ)

PO Box 64971
St. Paul, MN 55164-0971

1-800-657-3591 or 651-431-2555 (metro)

MBA.OOLTC@state.mn.us

## OFFICE OF OMBUDSMAN FOR MENTAL HEALTH AND DEVELOPMENTAL DISABILITIES (ຫ້ອງການຜູ້ກວດກາສຸຂະພາບຈິດ ແລະ ຄວາມພິການທາງດ້ານພັດທະນາການ)

121 7th Place East

Metro Square Building

St. Paul, MN 55101-2117

1-800-657-3506 or 651-757-1800 (metro)

Ombudsman.mhdd@state.mn.us

## SENIOR LINKAGE LINE (ສາຍເຊື່ອມໂຍງອາວຸໂສ)

(Aging and Disability Resource Center) (ສູນຂໍ້ມູນຜູ້ສູງອາຍຸ ແລະ ຄົນພິການ)

Minnesota Board on Aging (ຄະນະກໍາມະການຄວາມສູງອາຍຸລັດມິນິໂຊຕາ)

PO Box 64976

St. Paul, MN 55155 1-800-333-2433 senior.linkage@state.mn.us

## Medicaid

### MINNESOTA DEPARTMENT OF HUMAN SERVICES (ພະແນກການບໍລິການມະນຸດລັດມິນິໂຊຕາ)

(Medicaid Fraud and Abuse-payment issues)

(ການສໍ້ໂກງ ແລະ ການລ່ວງລະເມີດ Medicaid-ບັນຫາການຊໍາລະ)

Surveillance and Integrity Review Services

(ໜ່ວຍງານທົບທວນການຕິດຕາມ ແລະ ຄວາມຊື່ສັດ)

PO Box 64982

St Paul, MN 55164-0982

1-800-657-3750 or 651-431-2650 (metro)

DHS.SIRS@state.mn.us

# ຄຸ້ມຄອງ

## ສູນບໍລິການ MEDICAID/MEDICARE (CMS)

Region V (ເຂດ V)

233 North Michigan Ave, Suite 600

Chicago, IL 60601

312-353-9810

ROCHIORA@cms.hhs.gov

## MINNESOTA ADULT ABUSE REPORTING CENTER (MAARC) (ສູນລາຍງານການລ່ວງລະເມີດຜູ້ໃຫຍ່ລັດມິນີໂຊຕາ)

Department of Human Services (ພະແນກການບໍລິການມະນຸດ)

PO Box 64976

St. Paul, MN 55164-0976

1-844-880-1574

DHS.AdultProtection@state.mn.us

## MINNESOTA DEPARTMENT OF HEALTH (ພະແນກສາທາລະນະສຸກລັດມິນີໂຊຕາ)

**Office of Health Facility Complaints (ຫ້ອງການຄໍາຮ້ອງຮຽນສະຖານເບິ່ງແຍງດູແລສຸຂະພາບ)**

PO Box 64970

St. Paul MN 55164-0971

1-800-369-7994 or 651-201-4201 (metro) health.ohfc-complaints@state.mn.us

## MINNESOTA DEPARTMENT OF HEALTH (ພະແນກສາທາລະນະສຸກລັດມິນີໂຊຕາ)

**Health Regulation Division (ພະແນກຄຸ້ມຄອງສຸຂະພາບ)**

PO Box 64900

St. Paul, MN 55164-0900 651-201-4101

health.fpc-licensing@state.mn.us www.health.state.mn.us

ເພື່ອຮັບເອົາຂໍ້ມູນນີ້ຢູ່ໃນຮູບແບບອື່ນ, ໂທຫາ: 651-201-4101. ພິມຢູ່ໃນເຈ້ຍທີ່ນໍາຄືນມາໃຊ້ໃໝ່.